ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

VIENTIANE CENTER
ວຽງຈັນເຊັ້ນເຕີ

ເລກທີ: 013 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 20 APR 2026

ໜັງສືແຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025

- ອີງຕາມ ມະຕິກອງປະຊຸມວິສາມັນ ສະພາບໍລິຫານ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 1 ປະຈຳປີ 2025, ລົງວັນທີ 05/03/2026.

- ອີງຕາມ ມະຕິກອງປະຊຸມສາມັນ ສະພາບໍລິຫານ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 2 ປະຈຳປີ 2025, ລົງວັນທີ 20/04/2026.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ) " ວຈຊຕ " (ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໃນວັນທີ 30 ເມສາ 2026 ເວລາ 14:00 ໂມງ) ເລີ່ມລົງທະບຽນເວລາ 13:00-14:00 ໂມງ) ທີ່ຫ້ອງປະຊຸມ ຊັ້ນ 2 ຂອງຕຶກອາຄານ ວຽງຈັນເຊັ້ນເຕີ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງ ວຽງຈັນ. ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດຍັງໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມໃຫ້ບັນດາທ່ານຊາບແລ້ວ ໂດຍຜ່ານລະບົບຂໍ້ມູນຂ່າວສານ ຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ຫວັງຢ່າງຍິ່ງວ່າທ່ານຈະສະຫຼະເວລາອັນມີຄ່າຂອງທ່ານ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ດ້ວຍ.

ດ້ວຍຄວາມລົບນັບຖືຢ່າງສູງ

ຜູ້ອຳນວຍການ/ສະມາຊິກສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

Wang Wei Kun

<u>ເອກະສານຄັດຕິດ :</u>

1. ວາລະກອງປະຊຸມຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2025;
2. ເອກະສານຄັດຕິດຂອງວາລະທີ 2: ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2024;
3. ເອກະສານຄັດຕິດຂອງວາລະທີ 3: ບົດລາຍງານການດຳເນີນທຸລະກິດ ແລະ ບົດລາຍງານການເງິນປະຈຳປີ 2025 ຂອງ ວຈຊຕ;
4. ເອກະສານຄັດຕິດຂອງວາລະທີ 4: ແຜນການດຳເນີນທຸລະກິດ 2026 ຂອງ ວຈຊຕ;
5. ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານສະໄໝທີ 5
6. ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະທີ່ສະດວກເຂົ້າຮ່ວມກອງປະຊຸມ ເຊິ່ງສາມາດມອບສິດໃຫ້ພ້ອມ
7. ໃບມອບສິດ;
8. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2025;
9. ແຜນທີ່ສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2025;

<u>ໝາຍເຫດ:</u>

1. ຜູ້ຖືຮຸ້ນທຸກທ່ານສາມາດຮັບເອົາໜັງສືເຊີນປະຊຸມ ແລະ ເອກະສານທີ່ກ່ຽວຂ້ອງໄດ້ໃນວັນທີ 20 ເມສາ 2026 ທີ່ອາຄານ ຕະຫຼາດຫຼັກຊັບລາວ ຊັ້ນ 4, ຖະໜົນ T4, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ເບີໂທລະສັບ:（856-21）454361-4, ແຟັກ:（856-21）454361-4.
2. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມງານດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ເພື່ອຢັ້ງຢືນການລົງທະບຽນເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດຕາມ **ເອກະສານຄັດຕິດ 6** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;
4. ສຳລັບຜູ້ຕາງໜ້າຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມ ກະລຸນາສະແດງເອກະສານ ຫຼື ຫຼັກຖານ ຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **ເອກະສານຄັດຕິດ 7** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ຜູ້ຮັບຜິດຊອບທີ່ຖືກແຕ່ງຕັ້ງໂດຍປະທານສະພາບໍລິຫານ ແລ້ວຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີຜູ້ຖືຮຸ້ນມອບສິດໃຫ້ສະມາຊິກອິດສະຫຼະຂອງ ວຈຊຕ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ແລະ ໝາຍ ☑ ເພື່ອເລືອກເອົາສະມາຊິກອິດສະຫຼະຂອງ ບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບທີ່ ຫ້ອງການບໍລິສັດ ວຽງຈັນ ເຊັນເຕີ ລາວ ມະຫາຊົນ, ຊັ້ນ 5 ອາຄານຫ້ອງການວຽງຈັນເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 26 ເມສາ 2026.
6. ໃນກໍລະນີທີ່ທ່ານມີຂໍ້ສົງໄສ ຫຼື ຕ້ອງການຊອບຖາມລາຍລະອຽດເພີ່ມເຕີມ, ສາມາດຕິດຕໍ່ສອບຖາມ ທ. ຄຳຮຸ່ງ

(Mr. Lei Yaohai) ໂທ: 020 95549597 (ອີເມວ: yhlei@vclao.com) ໃນໂມງລັດຖະການ.

ເອກະສານຄັດຕິດ 1:

ວາລະທີ 1 : ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024

ລາຍລະອຽດ:

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (“ ວຈຊຕ ”) ຈະຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໃນວັນທີ 29 ເມສາ 2025 ທີ່ໂຮງແຮມແລນມາກ, ພາຍຫຼັງກອງປະຊຸມ, ບໍລິສັດໄດ້ຂຽນບົດບັນທຶກກອງປະຊຸມ ສຳເລັດແລ້ວ, ສຳລັບລາຍລະອຽດບົດບັນທຶກກອງປະຊຸມ ແມ່ນສາມາດກວດເບິ່ງຕາມໜັງສືແຈ້ງເຊີນໃນເອກະສານຄັດຕິດ 2.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມຊາສາມັນຜູ້ຖືຮຸ້ນດັ່ງກ່າວ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 2 : ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ແລະ ບົດລາຍງານການເງິນ ປະຈຳປີ 2025 ຂອງ ວຈຊຕ

ລາຍລະອຽດ:

1. ຜົນການດຳເນີນທຸລະກິດປະຈຳປີ 2025

1) ລາຍຮັບ

ໃນປີ 2025, ລາຍໄດ້ຈາກການດຳເນີນທຸລະກິດປະຈຳປີຂອງບໍລິສັດແມ່ນເປັນເງິນ 26.291.230.325,00 ກີບ, ມີການເພີ່ມຂຶ້ນ 14,32% ຈາກປີທີ່ແລ້ວ.

ສາເຫດທີ່ເຮັດໃຫ້ລາຍຮັບຈາກການດຳເນີນທຸລະກິດຂອງບໍລິສັດເພີ່ມຂຶ້ນໃນປີ 2025: ໜຶ່ງ ແມ່ນຍ້ອນການຟື້ນຕົວຢ່າງຕໍ່ເນື່ອງຂອງການເຄື່ອນໄຫວທາງເສດຖະກິດໃນລາວ ແລະ ປະເທດເພື່ອນບ້ານໃນປີ 2025, ເຮັດໃຫ້ການເຄື່ອນໄຫວຂອງຕະຫຼາດພາກພື້ນເພີ່ມຂຶ້ນຢ່າງຫຼວງຫຼາຍ, ແລະ ຄວາມຕ້ອງການເຊົ່າຮ້ານ ແລະ ຫ້ອງການກໍໄດ້ຖືກປ່ອຍອອກມາ; ສອງ ແມ່ນບໍລິສັດໄດ້ຍຶດໝັ້ນໂອກາດທາງການຕະຫຼາດ, ເພີ່ມທະວີການດຶງດູດການລົງທຶນ ແລະ ການໂຄສະນາຢ່າງຕັ້ງໜ້າ, ເຊິ່ງໄດ້ຊ່ວຍເພີ່ມອັດຕາການເຊົ່າຂອງຮ້ານຄ້າ ແລະ ຫ້ອງການພາຍໃຕ້

ການຄຸ້ມຄອງຂອງບໍລິສັດຢ່າງມີປະສິດທິພາບ, ແລະ ໄດ້ຊຸກຍູ້ໂດຍກົງໃຫ້ລາຍຮັບຈາກພາກສ່ວນການເຊົ່າເພີ່ມຂຶ້ນ; ສາມ ແມ່ນບໍລິສັດໄດ້ຂາຍຫ້ອງການໜຶ່ງຫ້ອງໃນປີນີ້, ເຊິ່ງເຮັດໃຫ້ລາຍຮັບຈາກການຂາຍເພີ່ມຂຶ້ນ.

2) ກຳໄລ ແລະ ຂາດທຶນ

ໃນປີ 2025, ລາຍຈ່າຍທັງໝົດຂອງ ວຈຊຕ ແມ່ນ 14.578.970.948,00 ກີບ, ມີການເພີ່ມຂຶ້ນ **24,94**% ຈາກປີທີ່ແລ້ວ, ສາເຫດຕົ້ນຕໍແມ່ນການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍໃນການຄຸ້ມຄອງການດຳເນີນງານ (ໜຶ່ງ ແມ່ນເພື່ອຕອບສະໜອງຄວາມຕ້ອງການທີ່ເພີ່ມຂຶ້ນໃນການຕ້ອນຮັບນັກທ່ອງທ່ຽວສາກົນ, ປັບປຸງຄຸນນະພາບຂອງ ຊັບສິນ ແລະ ສ້າງຄວາມປະທັບໃຈໃຫ້ແກ່ລູກຄ້າທີ່ມາໃຊ້ບໍລິການ, ບໍລິສັດໄດ້ດຳເນີນການສ້ອມແປງ ແລະ ປັບປຸງ ຍົກລະດັບສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງກັບຮ້ານຄ້າ ແລະ ອາຄານສຳນັກງານຢ່າງຕໍ່ເນື່ອງໃນໄລຍະເວລາ ທີ່ລະບຸໃນບົດລາຍງານ, ເຊິ່ງເຮັດໃຫ້ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງເພີ່ມຂຶ້ນ; ສອງແມ່ນຍ້ອນການເຄື່ອນໄຫວຂອງຕະຫຼາດ ທີ່ເພີ່ມຂຶ້ນ ແລະ ຈຳນວນຜູ້ມາໃຊ້ບໍລິການທີ່ເພີ່ມຂຶ້ນ, ເພື່ອບັນເທົາຄວາມກົດດັນໃນການຈອດລົດ ແລະ ປັບປຸງ ການບໍລິການໃຫ້ຄົບວົງຈອນ, ບໍລິສັດໄດ້ເພີ່ມພື້ນທີ່ເຊົ່າ ຫຼື ລາຄາເຊົ່າຕໍ່ໜ່ວຍຂອງບ່ອນຈອດລົດຊົ່ວຄາວ, ເຊິ່ງ ເຮັດໃຫ້ຄ່າເຊົ່າເພີ່ມຂຶ້ນພ້ອມກັນ).

ໃນປີ 2025, ກຳໄລກ່ອນເສຍອາກອນແມ່ນ 12.502.609.158,00 ກີບ, ອາກອນກຳໄລແມ່ນ 2.829.889.317,00 ກີບ, ກຳໄລສຸດທິແມ່ນ 9.672.719.841,00 ກີບ, ທຽບໃສ່ປີທີ່ຜ່ານມາ ແມ່ນຫຼຸດລົງ 49, 77%.

ສາເຫດທີ່ເຮັດໃຫ້ກຳໄລສຸດທິຫຼຸດລົງ: ໜຶ່ງແມ່ນເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າ, ບໍລິສັດໄດ້ ເຊົ່າບ່ອນຈອດລົດແລ້ວສະໜອງໃຫ້ລູກຄ້າໃຊ້; ສອງແມ່ນເພື່ອເພີ່ມຄວາມເພິງພໍໃຈໂດຍລວມຂອງລູກຄ້າ, ໄດ້ມີ ການສ້ອມແປງ ແລະ ປັບປຸງອາຄານຮ້ານຄ້າ ແລະ ອາຄານສຳນັກງານ, ເຊິ່ງເຮັດໃຫ້ຕົ້ນທຶນເພີ່ມຂຶ້ນ.

3) ຊັບສິນທັງໝົດ

ມາຮອດວັນທີ 31 ທັນວາ 2025, ຊັບສິນທັງໝົດຂອງບໍລິສັດມີມູນຄ່າ 344.883.732.672,00 ກີບ, ເພີ່ມຂຶ້ນ 2.59% ເມື່ອທຽບໃສ່ປີ 2024.

ສາເຫດຂອງການເຕີບໂຕຂອງຊັບສິນ: ໜຶ່ງແມ່ນຍ້ອນມີການຊື້ຊັບສິນໃໝ່ໃນປີ 2025; ສອງແມ່ນຍ້ອນ ອັດຕາການເຂົ້າມາຂອງຊັບສິນຫ້ອງການໃນສູນການຄ້າເພີ່ມຂຶ້ນ, ແລະ ອັດຕາສ່ວນຄ່າເຊົ່າຂອງຜູ້ປະກອບການຕໍ່ ບັນຊີລູກໜີ້ເພີ່ມຂຶ້ນ.

4) ໜີ້ສິນທັງໝົດ

ຮອດວັນທີ 31 ທັນວາ 2025, ໜີ້ສິນທັງໝົດຂອງບໍລິສັດ ແມ່ນ 53.065.727.511,00 ກີບ, ມີການຫຼຸດ ລົງ 0,41% ທຽບໃສ່ປີ 2024.

ສາເຫດທີ່ໜີ້ສິນຫຼຸດລົງ: ໃນໄລຍະເວລາລາຍງານ, ບໍລິສັດໄດ້ສົ່ງຄືນເງິນຄ້ຳປະກັນ ແລະ ເງິນຄ້ຳປະກັນການ

ປະຕິບັດທີ່ໄດ້ເກັບໄວ້ກ່ອນໜ້ານີ້ໃຫ້ແກ່ລູກຄ້າ ຫຼື ຜູ້ສະໜອງ, ເນື່ອງຈາກສັນຍາທຸລະກິດບາງສ່ວນໄດ້ໝົດອາຍຸ ຫຼື ໄດ້ປະຕິບັດສຳເລັດແລ້ວ.

2. ບົດລາຍງານການເງິນປະຈຳປີ 2025

ບົດລາຍງານການເງິນປະຈຳປີ 2025 ຂອງ ວຈຊຕ ແມ່ນໄດ້ຮັບການກວດສອບຢ່າງຖືກຕ້ອງ ຈາກບໍລິສັດ ພຣາຍສວໍເຕີ້ ເຮົ້າສກຸບເປີສ (ລາວ) ຈຳກັດ ຜູ້ດຽວ

ບົດລາຍງານຜົນການດຳເນີນທຸລະກິດ ແລະ ບົດລາຍງານການເງິນ ປະຈຳປີ 2025ຂອງ ວຈຊຕ ມີລາຍລະອຽດໃນ **ເອກະສານຄັດຕິດ 3** ທີ່ໄດ້ຄັດຕິດມາພ້ອມນີ້.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ແລະ ບົດລາຍງານການເງິນ ປະຈຳປີ 2025ຂອງ ວຈຊຕ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

<u>ວາລະທີ 3 : ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດ 2026 ຂອງ ວຈຊຕ</u>

<u>ລາຍລະອຽດ:</u>

ໃນແຜນງົບປະມານກ່ຽວກັບການດຳເນີນທຸລະກິດປະຈຳປີ 2026, ຄາດວ່າລາຍຮັບບໍ່ຕ່ຳກວ່າ 22,41 ຕື້ກີບ, ກຳໄລສຸດທິຄາດວ່າບໍ່ຕ່ຳກວ່າ 7,95 ຕື້ກີບ.

ລາຍລະອຽດຂອງ ແຜນການດຳເນີນທຸລະກິດປະຈຳປີ 2026 ແມ່ນໄດ້ຄັດຕິດໃນເອກະສານຄັດຕິດ 4.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງ ແຜນການດຳເນີນທຸລະກິດປະຈຳປີ 2026.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

<u>ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2025 ຂອງບໍລິສັດ</u>

ລາຍລະອຽດ:

ອີງຕາມກົດລະບຽບຂອງບໍລິສັດ,ສຳລັບການແບ່ງເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ ພາຍຫຼັງທີ່ໄດ້ຫັກກຳໄລສຸດທິ ແລະ ກຳໄລສະສົມເຂົ້າຄັງສຳຮອງໄວ້ຕາມກົດໝາຍທີ່ກ່ຽວຂ້ອງ .

ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນປະຈຳປີ 2025 ຄືດັ່ງລຸ່ມນີ້:

1. ແບ່ງເຂົ້າຄັງສະສົມຕາມລະບຽບການ: 10%;

2. ຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ;

3. ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;

4. ກຳນົດເອົາວັນທີ 06/05/2026 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ, ມື້ຈ່າຍເງິນປັນຜົນແມ່ນ 28/05/2026;

5. ມອບໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

<u>ວາລະທີ 5: ພິຈາລະນາ ແລະ ຮັບຮອງການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ.</u>

<u>ລາຍລະອຽດ:</u>

ວ່າຈ້າງ ບໍລິສັດ ພຣາຍສວໍເຕີ້ ເຮົ້າສກຸບເປີສ (ລາວ) ຈຳກັດ ຜູ້ດຽວ ເປັນບໍລິສັດກວດສອບບັນຊີຂອງບໍລິສັດ. ປີບັນຊີສຳລັບການກວດສອບແມ່ນປີ 2026 ແລະ ຄ່າບໍລິການກວດສອບແມ່ນ 29.200 ໂດລາ/ປີ.

ເມື່ອປຽບທຽບລາຄາກັບບໍລິສັດກວດສອບທີ່ນຳໃຊ້ໃນປັດຈຸບັນ, ມີລາຍລະອຽດແມ່ນດັ່ງນີ້:

ລຳດັບ	ບໍລິສັດກວດສອບ	ສະກຸນເງິນ	ໄລຍະປີ				
			2022	2023	2024	2025	2026
1	ບໍລິສັດ ເອີນແອນຢັ້ງ ລາວຈຳກັດ	ໂດລາ	31,000				
2	ບໍລິສັດ ເອີນແອນຢັ້ງ ລາວຈຳກັດ	ໂດລາ		31,000			
3	ບໍລິສັດ ພຣາຍສວໍເຕີ້ ເຮ້ົາສກຸບເປີສ (ລາວ) ຈຳກັດ ຜູ້ດຽວ	ໂດລາ			27,500		
4	ບໍລິສັດ ພຣາຍສວໍເຕີ້ ເຮ້ົາສກຸບເປີສ (ລາວ) ຈຳກັດ ຜູ້ດຽວ	ໂດລາ				28,500	
5	ບໍລິສັດ ພຣາຍສວໍເຕີ້ ເຮ້ົາສກຸບເປີສ (ລາວ) ຈຳກັດ ຜູ້ດຽວ	ໂດລາ					29,200

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງການເລືອກຕັ້ງ ສະມາຊິກສະພາບໍລິຫານ ສະໄໝທີ 5

ລາຍລະອຽດ:

ໄລຍະເວລາດຳລົງຕຳແໜ່ງຂອງສະມາຊິກສະພາບໍລິຫານສະໄໝທີ 4 ແມ່ນ 2 ປີ, ເລີ່ມແຕ່ວັນທີ 29 ເມສາ 2024 ສິ້ນສຸດໃນວັນທີ 28 ເມສາ 2026. ຫຼັງຈາກການທົບທວນຄືນໂດຍຄະນະກຳມະການຄັດເລືອກ, ສະເໜີໃຫ້ເລືອກຕັ້ງສະພາບໍລິຫານສະໄໝທີ 5 ຂອງ ວຈຊຕ ດັ່ງລຸ່ມນີ້:

- ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin) ເປັນປະທານ
- ທ່ານ ນາງ ອໍລະໄທ ສັນຕິຄົງຄາ ເປັນຮອງປະທານ
- ທ່ານ ບູລະພາ ສັນຕິຄົງຄາ ເປັນສະມາຊິກ
- ທ່ານ ຫວັ່ງ ເຫວີຍຄຸນ (Mr. Wang Weikun) ເປັນສະມາຊິກ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ເປັນສະມາຊິກ
- ທ່ານ ຫຼໍ ສ່ຽວຕົ໋ງ (Mr. Luo Xiaodong) ເປັນສະມາຊິກ
- ທ່ານ ເຫຼີ ຢ້າວຫ້າຍ(Mr. Lei Yaohai) ເປັນສະມາຊິກ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ເປັນສະມາຊິກອິດສະຫຼະ

- ທ່ານ ຫວາງ ຢູ (Ms. Wang Yu) ເປັນສະມາຊິກອິດສະຫຼະ
- ທ່ານ ວຽງສະຫວັນ ພັນທະລີ ເປັນສະມາຊິກອິດສະຫຼະ
- ທ່ານ ຈໍຊົ່ງ ບົວສີເນັ່ງມາ ເປັນສະມາຊິກອິດສະຫຼະ

ສຳລັບຊີວະປະຫວັດຫຍໍ້ຂອງຜູ້ສະເໜີຊື່ທີ່ກ່າວມາຂ້າງເທິງ,ກະລຸນາເບິ່ງເອກະສານຄັດຕິດ 5, ສຳລັບອາຍຸການດຳລົງຕຳແໜ່ງຂອງສະມາຊິກສະພາບໍລິຫານສະໄໝທີ 5 ແມ່ນ 2 ປີ, ນັບຈາກວັນທີ່ໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນປະຈຳປີ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງການເລືອກຕັ້ງ ສະມາຊິກສະພາບໍລິຫານ ສະໄໝທີ 5.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

<u>ວາລະທີ 7: ພິຈາລະນາ ແລະ ຮັບຮອງການເລືອກຕັ້ງ ຄະນະກຳມະການຕ່າງໆຂອງ ວຈຊຕ</u>

<u>ລາຍລະອຽດ:</u>

ເນື່ອງຈາກອາຍຸການດຳລົງຕຳແໜ່ງຂອງແຕ່ລະຄະນະກຳມະການແມ່ນ 2 ປີ(ແຕ່ວັນທີ 29 ເມສາ 2024 ຫາວັນທີ 28 ເມສາ 2026) ເຊິ່ງກຳລັງຈະໝົດອາຍຸລົງ, ຫຼັງຈາກການທົບທວນຄືນໂດຍຄະນະກຳມະການທີ່ກ່ຽວຂ້ອງ, ສະເໜີຄັດເລືອກແຕ່ງຕັ້ງຄະນະກຳມະການທີ່ກ່ຽວຂ້ອງດັ່ງລຸ່ມນີ້:

1.ຄະນະກຳມະການຄຸ້ມຄອງບໍລິຫານ:

- ທ່ານ ຫວັງ ເຫວີຍຄຸນ (Mr. Wang Weikun) ສະມາຊິກ/ປະທານຄະນະກຳມະການຄຸ້ມຄອງບໍລິຫານ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ສະມາຊິກ/ສະມາຊິກຄະນະກຳມະການຄຸ້ມຄອງບໍລິຫານ
- ທ່ານ ຫຼໍ ສ່ຽວຕົ໋ງ (Mr. Luo Xiaodong) ສະມາຊິກ/ສະມາຊິກຄະນະກຳມະການຄຸ້ມຄອງບໍລິຫານ

2.ຄະນະກຳມະການກວດສອບ:

- ທ່ານ ຈໍຊົ່ງ ບົວສີເນັ່ງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການກວດສອບ
- ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin) ສະມາຊິກ/ສະມາຊິກຄະນະກຳມະການກວດສອບ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການກວດສອບ

3. ຄະນະກຳມະການຄຸ້ມຄອງຄວາມສ່ຽງ:

- ທ່ານ ວຽງສະຫວັນ ພັນທະລີ ສະມາຊິກອິດສະຫຼະ/ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ
- ທ່ານ ຈໍຊົ່ງ ບົວສີເນັ່ງມາ ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການຄຸ້ມ ຄອງຄວາມສ່ຽງ

- ທ່ານ ຫຼໍ ສ່ຽວຕົ໋ງ (Mr. Luo Xiaodong) ສະມາຊິກ/ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ

4. ຄະນະກຳມະການຄັດເລືອກ:

- ທ່ານ ຈໍຊົ່ງ ບົວສີເນ່ັງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການຄັດເລືອກ
- ທ່ານ ຫວາງ ຢູ (Ms. Wang Yu) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການຄັດເລືອກ
- ທ່ານ ບຸລະພາ ສັນຕິຄົງຄາ ສະມາຊິກ/ສະມາຊິກຄະນະກຳມະການຄັດເລືອກ

5. ຄະນະກຳມະການກຳນົດຄ່າຕອບແທນ:

- ທ່ານ ຫວາງ ຢູ (Ms. Wang Yu) ສະມາຊິກອິດສະຫຼະ/ປະທານຄະນະກຳມະການກຳນົດຄ່າຕອບແທນ.
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ.
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ສະມາຊິກ/ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ.

6.ຄະນະກຳມະການລາຍການທີ່ກ່ຽວພັນ:

- ທ່ານ ຈໍຊົ່ງ ບົວສີເນ່ັງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການລາຍການທີ່ກ່ຽວພັນ
- ທ່ານ ບຸລະພາ ສັນຕິຄົງຄາ ສະມາຊິກ/ສະມາຊິກຄະນະກຳມະການລາຍການທີ່ກ່ຽວພັນ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການລາຍການທີ່ກ່ຽວພັນ

ຄະນະກຳມະການດັ່ງກ່າວມາຂ້າງເທິງນີ້ມີອາລະການດຳລົງຕຳແໜ່ງແມ່ນ 2 ປີ, ນັບຈາກວັນທີ່ໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນປະຈຳປີ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

<u>ວາລະທີ 8: ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ວຈຊຕ.</u>

<u>ລາຍລະອຽດ:</u>

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ.

ເນື່ອງຈາກວ່າ ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin) ຂຶ້ນມາຮັບຕຳແໜ່ງເປັນປະທານສະພາບໍລິຫານສະໄໝທີ 5, ອີງຕາມຄວາມຕ້ອງການໃນການຈັດຈັ້ງປະຕິບັດວຽກງານຕົວຈິງ ເຫັນວ່າມີຄວາມຈຳເປັນປ່ຽນຜູ້ຕາງໜ້ານິຕິບຸກຄົນໃນທະບຽນວິສາຫະກິດ ຈາກ ທ່ານ ເຫີຈຸ່ນ (Mr. HE Jun) ມາເປັນ ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin).

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 9: ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 8 ວ່າດ້ວຍຜູ້ສ້າງຕັ້ງ, ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

ລາຍລະອຽດ:

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ.

ອີງຕາມແຜນການຄັດເລືອກສະມາຊິກສະພາບໍລິຫານສະໄໝທີ 5 ຂອງບໍລິສັດ ວຈຊຕ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດສອດຄ່ອງກັບສະພາບຕົວຈິງ, ເຫັນວ່າມີຄວາມຈຳເປັນຕ້ອງດັດແກ້ເນື້ອໃນຂອງມາດຕາ 8 ວ່າດ້ວຍຜູ້ສ້າງຕັ້ງ, ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານເຊິ່ງມີການກ່ຽວພັນກັບລາຍຊື່ການຄັດເລືອກ, ໂດຍມີເນື້ອໃນທີ່ດັດແກ້ແລ້ວ ຄືດັ່ງນີ້:

1. ມາດຕາ 8. ຜູ້ສ້າງຕັ້ງ:

ຊື່, ທີ່ຢູ່ ແລະ ສັນຊາດຜູ້ສ້າງຕັ້ງຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ມີດັ່ງນີ້:

ຜູ້ທີໜຶ່ງ:

- ຊື່: ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ
- ສັນຊາດ: ເປັນບໍລິສັດຈຳກັດ ແລະ ໄດ້ຈົດທະບຽນພາຍໃຕ້ກົດໝາຍແຫ່ງ ສປປ ລາວ.
- ຈຳນວນຮຸ້ນທີ່ຈອງ: 95.999.200 ຮຸ້ນ=65,21689%=95.999.200.000 ກີບ

- ທີ່ຢູ່ປະຈຸບັນ: ບ້ານໜອງຈັນ, ຖະໜົນຄູວຽງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໂທລະສັບ: (856)21 228299, ແຟັກ: (856)21 228299

ຕາງໜ້າໂດຍ:

- ຊື່ ແລະ ນາມສະກຸນ: ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: PE2079814, ລົງວັນທີ 07 ພະຈິກ 2023

2. ມາດຕາ 9. ຜູ່ອຳນວຍການ:

ຜູ່ອຳນວຍການຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ມີ 11 ຄົນ, ໃນນີ້:

ກ. ຜູ່ຖືຮຸ້ນເປັນຜູ່ອຳນວຍການ 0 ຄົນ, ປະກອບດ້ວຍ: ບໍ່ມີ.

ຂ. ຈ້າງບຸກຄົນພາຍນອກ ເປັນຜູ່ອຳນວຍການ 11 ຄົນ, ປະກອບດ້ວຍ:

ຜູ່ທີໜຶ່ງ(ຜູ່ອຳນວຍການໃຫຍ່):

- ຊື່ ແລະ ນາມສະກຸນ: ທ່ານ ຫວັງເຫວີຍຄຸນ (Mr. WANG Weikun)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: EJ4156289, ລົງວັນທີ 19 ຕຸລາ 2020

ຜູ່ທີສອງ:

- ຊື່ ແລະ ນາມສະກຸນ: ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: PE2079814, ລົງວັນທີ 07 ພະຈິກ 2023

ຜູ່ທີສາມ:

- ຊື່ ແລະ ນາມສະກຸນ: ທ່ານ ຫຼໍ ສ້ຽວດົ່ງ (Mr. LUO Xiaodong)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ

- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E60438199, ລົງວັນທີ 10 ຕຸລາ 2015

ຜູ່ທີສີ່:

- ຊື່ ແລະ ນາມສະກຸນ: ທ່ານ ນາງ ອໍລະໄທ ສັນຕິຄົງຄາ
- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ບັດປະຈຳຕົວເລກທີ: 01-0036797, ລົງວັນທີ 30 ມັງກອນ 2015

ຜູ່ທີຫ້າ:

- ຊື່ ແລະ ນາມສະກຸນ: ທ່ານ ບູລະພາ ສັນຕິຄົງຄາ
- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ບັດປະຈຳຕົວເລກທີ: 01-0036796, ລົງວັນທີ 30 ມັງກອນ 2015

ຜູ່ທີຫົກ:

- ຊື່ ແລະ ນາມສະກຸນ: ທ່ານ ອູ່ ຊິງຫວາ (Mr. Wu Xinghua)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນເຫີເຝີ, ແຂວງ ອ່ານຮຸ່ຍ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໂພນສະອາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E55964760, ລົງວັນທີ 02 ກຸມພາ 2016

ຜູ່ທີເຈັດ:

- ຊື່ ແລະ ນາມສະກຸນ: ທ່ານ ເຫຼີ ຢ້າວຫ້າຍ(Mr. Lei Yaohai)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: ED6239965, ລົງວັນທີ 28 ສິງຫາ 2018

ຜູ່ທີແປດ:

- ຊື່ ແລະ ນາມສະກຸນ: ທ່ານ ສ່ຽວ ໂຢງ (Mr. Xiao Yong)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ

- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: G28936820, ລົງວັນທີ 15 ກໍລະກົດ 2008

ຜູ້ທີເກົ້າ:

- ຊື່ ແລະ ນາມສະກຸນ: ທ່ານ ຫວາງ ຢູ (Mr. WANG Yu)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: EF1000388, ລົງວັນທີ 21 ມັງກອນ 2019

ຜູ້ທີສິບ:

- ຊື່ ແລະ ນາມສະກຸນ: ທ່ານ ວຽງສະຫວັນ ພັນທະລີ
- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານແສງສະຫວ່າງ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ບັດປະຈຳຕົວເລກທີ: A1-0010349, ລົງວັນທີ 28 ມີນາ 2014

ຜູ້ທີສິບເອັດ:

- ຊື່ ແລະ ນາມສະກຸນ: ຈໍຊົ່ງ ບົວສີເນ່ັງມາ
- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: 01-18 005815, ລົງວັນທີ 05 ຕຸລາ 2018

ຜູ້ອຳນວຍການທີ່ມີອຳນາດເຊັນຜູກພັນບໍລິສັດ ແມ່ນ ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin) ລົງລາຍເຊັນ ແລະ ປະທັບກາບໍລິສັດ ເພື່ອປະຕິບັດໜ້າທີ່ໃນນາມ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ.

2. ມາດຕາ 12. ສະພາບໍລິຫານ:

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ຕົກລົງກ່ຽວກັບສະພາບໍລິຫານ ດັ່ງນີ້:

- (√) ມີສະພາບໍລິຫານນັບແຕ່ມື້ສ້າງຕັ້ງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ເຊິ່ງປະກອບດ້ວຍ:
- ປະທານສະພາບໍລິຫານ 1 ຄົນ ຄື: ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin)
- ຮອງປະທານສະພາບໍລິຫານ 1 ຄົນ ຄື: ທ່ານ ນາງ ອໍລະໄທ ສັນຕິຄົງຄາ
- ສະມາຊິກສະພາບໍລິຫານ 9 ຄົນ ຄື: 1. ທ່ານ ບູລະພາ ສັນຕິຄົງຄາ(Yao Bin)
  2. ທ່ານ ຫວັ່ງເຫວີຍຄຸນ (Mr. Wang Weikun)
  3. ທ່ານ ອູ ຊິງຫວາ (Mr. Wu Xinghua)

4. ທ່ານ ເຫຼີ ຢ້າວຫ້າຍ(Mr. Lei Yaohai)
5. ທ່ານ ຫຼໍ ສ້ຽວດົ່ງ (Mr. Luo Xiaodong)
6. ທ່ານ ສ່ຽວ ໂຢງ (Mr. Xiao Yong) (ສະມາຊິກອິດສະລະ)
7. ທ່ານ ຫວາງ ຢູ (Mr. WANG Yu) (ສະມາຊິກອິດສະລະ)
8. ທ່ານ ວຽງສະຫວັນ ພັນທະລີ(ສະມາຊິກອິດສະລະ)
9. ທ່ານ ຈໍຊົ່ງ ບົວສີເນັ່ງມາ(ສະມາຊິກອິດສະລະ)

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຢ່າງໜ້ອຍສອງສ່ວນສາມ(2/3)ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ, ແລະມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ເອກະສານຄັດຕິດ 2:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

VIENTIANE CENTER
ວຽງຈັນເຊັ້ນເຕີ

ເລກທີ: 024 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 09 MAY 2025

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024
ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເວລາ ແລະ ສະຖານທີ່

ກອງປະຊຸມຈັດຂຶ້ນໃນວັນທີ 29 ເມສາ 2025, ເວລາ: 14:00 ໂມງ ທີ່ຫ້ອງປະຊຸມ ໄຕມ້ອນ ຊັ້ນ 4 ຂອງໂຮງ ແຮມແລນມາກ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.

ການເປີດກອງປະຊຸມ

ທ່ານ ຫວັງ ເຫວີຍຄຸນ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ" ຫຼື "ວຈຊຕ") ໄດ້ຮັບມອບສິດຈາກ ສະພາບໍລິຫານ ໃຫ້ເປັນປະທານກອງປະຊຸມ ສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2024 ໃນຄັ້ງນີ້ແທນ. ກອງປະຊຸມມີຜູ້ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ 35 ທ່ານ ແລະ ມອບສິດໃຫ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 03 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 38 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 144.196.500 ຮຸ້ນ ຫຼື ເທົ່າກັບ 98 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ. ເລຂານຸການກອງປະຊຸມຈຶ່ງໄດ້ກ່າວເປີດກອງປະຊຸມ ແລະ ແນະນຳບັນດາສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ລາຍລະອຽດດັ່ງຕໍ່ໄປນີ້:

ທ່ານ ຫວັງ ເຫວີຍຄຸນ (Mr. Wang Weikun) ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່(CEO)

ທ່ານ ອູ່ ຊິງຫົວ (Mr.Wu Xinghua), ສະມາຊິກສະພາບໍລິຫານ, ປະທານເຈົ້າໜ້າທີ່ດ້ານປະຕິບັດການ (COO)

ທ່ານ ຫຼໍ ສ່ຽວຕົ໋ງ (Mr.Luo Xiaodong), ສະມາຊິກສະພາບໍລິຫານ, ປະທານເຈົ້າໜ້າທີ່ດ້ານການເງິນ (CFO)

ທ່ານ ເຫຼີ ຢ້າວຫາຍ(Mr.Lei Yaohai), ສະມາຊິກສະພາບໍລິຫານ, ເລຂານຸການສະພາບໍລິຫານ

ທ່ານ ຈໍຊິ່ງ ບິວສີເນັ່ງມາ, ສະມາຊິກອິດສະຫຼະຂອງສະພາບໍລິຫານ

ທ່ານ ວຽງສະຫວັນ ພັນທະລີ, ສະມາຊິກອິດສະຫຼະຂອງສະພາບໍລິຫານ

ທ່ານ ຈ່າງທຽນ ຢີ້ (Mr.Zhang Tianyi), ສະມາຊິກອົດສະຫຼະຂອງສະພາບໍລິຫານ

ພ້ອມດຽວກັນນີ້, ກໍຍັງມີຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ວາລະປີ 2024 ທີ່ເປັນຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບ ແລະ ຜູ້ຕາງໜ້າຈາກຜູ້ຖືຮຸ້ນລາຍຍ່ອຍ.

ຫຼັງຈາກນັ້ນ ເລຂານຸການກອງປະຊຸມໄດ້ແຈ້ງໃຫ້ທີ່ປະຊຸມຊາບ ກ່ຽວກັບລະບຽບການດຳເນີນກອງປະຊຸມ ແລະ ວິທີການລົງຄະແນນສຽງ, ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

ກອງປະຊຸມໄດ້ພິຈາລະນາ ມີຄຳເຫັນ ແລະ ມີການຕົກລົງໃນວາລະດັ່ງນີ້:

<u>ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023</u>

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ໃນວັນທີ 29 ເມສາ 2024 ທີ່ໂຮງແຮມແລນມາກ, ພາຍຫຼັງກອງປະຊຸມ, ບໍລິສັດໄດ້ຂຽນບົດບັນທຶກກອງປະຊຸມ ສຳເລັດແລ້ວ, ສຳລັບລາລະອຽດບົດບັນທຶກກອງປະຊຸມ ແມ່ນສາມາດກວດເບິ່ງຕາມໜັງສືແຈ້ງເຊີນໃນເອກະສານຄັດຕິດ 2.

<u>ຄຳເຫັນຂອງສະພາບໍລິຫານ:</u>

ບົດບັນທຶກກອງປະຊຸມຊາສາມັນຜູ້ຖືຮຸ້ນດັ່ງກ່າວ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ຫຼັງຈາກເລຂານຸການກອງປະຊຸມໄດ້ລາຍງານລາຍລະອຽດກ່ຽວກັບວາລະແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນຕໍ່ວາລະນີ້, ມີຜູ້ຖືຮຸ້ນໜຶ່ງທ່ານມີຄຳເຫັນດັ່ງນີ້:

<u>ທ່ານ KRAIWAL KADAVANICH ຖາມວ່າ:</u>

1.ເຫັນວ່າ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2023 ສະບັບພາສາລາວ ມະຕິ 6 ໜ້າທີ 9 ກ່ຽວກັບການຍະວ່າງ ຊື່ບໍລິສັດກວດສອບເຫັນວ່າບໍ່ຖືກຕ້ອງ ຄືກັບສະບັບພາສາອັງກິດ ແລະ ການໃສ່ວົງເລັບທີ່ບໍ່ຖືກຕ້ອງ ຈຶ່ງສະເໜີໃຫ້ແກ້ໄຂໃຫ້ຖືກຕ້ອງ.

2.ເຫັນວ່າ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2023 ສະບັບພາສາລາວ ແຕ່ໜ້າທີ 9 ເຖິງໜ້າທີ 13 ຊື່ ສະມາຊິກສະພາບໍລິຫານທີ່ເປັນຄົນຕ່າງປະເທດ ຈະມີວົງເລັບ ຊື່ພາສາອັງກິດ, ແຕ່ວ່າໜ້າທີ 1 ເຫັນວ່າ ຊື່ສະມາຊິກສະພາບໍລິຫານ ທີ່ເປັນຄົນຕ່າງປະເທດ ບໍ່ມີພາສາອັງກິດ, ສະເໜີໃຫ້ແກ້ໄຂໃຫ້ເປັນມາດຕະຖານອັນດຽວກັນ.

3.ເຫັນວ່າ ຫົວເອກກະສານ ໃນໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024 ພາສາອັງກິດ ຖືກຕ້ອງ, ແຕ່ສະໄລ້ PPT ທີ່ສະແດງຈຳນວນຜູ້ເຂົ້າຮ່ວມປະຊຸມ ບໍ່ໄດ້ໃສ່ສັນຍະລັກ & ໃນລະຫວ່າງກາງ ຂອງ Tel ແລະ Fax, ສະ ເໜີໃຫ້ແກ້ໄຂໃຫ້ຖືກຕ້ອງ.

<u>ທ່ານ ເຫຼຍ ຢ້າວຫາຍ ເລຂານຸການກອງປະຊຸມຕອບວ່າ::</u>

ຂອບໃຈທີ່ມີການປະກອບຄຳເຫັນ, ເຫັນດີຕາມຄຳສະເໜີຂອງທ່ານ KRAIWAL KADAVANICH.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

<u>ມະຕິ: ເຫັນດີຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023</u>

- ເຫັນດີ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ;

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງ ຄະແນນສຽງ.

<u>ວາລະທີ 2: ພິຈາລະນາ ແລະ ຮັບຮອງ ບົດລາຍງານການເງິນ ປະຈຳປີ 2024 ຂອງ ວຈຊຕ</u>

ບົດລາຍງານການເງິນປະຈຳປີ 2024 ຂອງ ວຈຊຕ ແມ່ນໄດ້ຮັບການກວດສອບຢ່າງຖືກຕ້ອງ ຈາກບໍລິສັດ ພຣາຍສວໍເຕີ້ ເຮົ້າສກຸບເປີສ (ລາວ) ຈຳກັດ ຜູ້ດຽວ ໂດຍມີລາຍລະອຽດໃນ ເອກະສານຄັດຕິດ 3 ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດລາຍງານ ການເງິນຂອງ ວຈຊຕ ປະຈຳປີ 2024.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນ ສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ຫຼັງຈາກເລຂານຸການກອງປະຊຸມໄດ້ລາຍງານລາຍລະອຽດກ່ຽວກັບວາລະແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດໃຫ້ຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນຕໍ່ວາລະນີ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳເຫັນ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

<u>ມະຕິ: ເຫັນດີຮັບຮອງ ບົດລາຍງານການເງິນ ປະຈຳປີ 2024 ຂອງ ວຈຊຕ</u>

- ເຫັນດີຈຳນວນ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມ ປະຊຸມ ແລະ ມີສິດລົງຄະແນນສຽງ;

- ບໍ່ເຫັນດີຈຳນວນ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດ ລົງຄະແນນສຽງ.

<u>ວາລະທີ 3: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳ ເນີນທຸລະກິດ 2025 ຂອງ ວຈຊຕ</u>

<u>1. ຜົນການດຳເນີນທຸລະກິດປະຈຳປີ 2024</u>

<u>1) ລາຍຮັບ</u>

ໃນປີ 2024, ລາຍໄດ້ຈາກການດຳເນີນທຸລະກິດປະຈຳປີຂອງບໍລິສັດແມ່ນເປັນເງິນ 22.998.658.487,00 ກີບ, ມີການເພີ່ມຂຶ້ນ 31% ຈາກປີທີ່ແລ້ວ. ໃນນັ້ນ, ລາຍຮັບຈາກການເຊົ່າຮ້ານຂາຍເຄື່ອງແມ່ນເປັນເງິນ 5.667.332.649,00ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຫ້ອງການ ແມ່ນເປັນເງິນ 12.875.480.640,00 ກີບ, ລາຍໄດ້ຈາກການຮ່ວມທຸລະກິດ ແມ່ນເປັນເງິນ 1.985.240.399,00 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີຈັດງານ ແມ່ນເປັນເງິນ 1.302.861.523,00 ກີບ, ລາຍໄດ້ຈາກການໃຫ້ເຊົ່າປ້າຍໂຄສະນາ ແມ່ນເປັນເງິນ 1.103.984.260,00 ກີບ ແລະ ລາຍໄດ້ອື່ໆອີກ 63.759.016,00 ກີບ.

ເຫດຜົນທີ່ລາຍຮັບເພີ່ມຂຶ້ນໃນປີ 2024: ອັນທີໜຶ່ງ, ການເຄື່ອນໄຫວຕະຫຼາດໃນລາວ ແລະ ປະເທດອ້ອມຂ້າງໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ, ມີການຊຸກຍູ້ສົ່ງເສີມການລົງທຶນ, ເຊິ່ງເຮັດໃຫ້ລາຍຮັບຈາກຂະແໜງການໃຫ້ເຊົ່າຂອງຮ້ານຂາຍເຄື່ອງ ແລະ ຫ້ອງການເພີ່ມຂຶ້ນໂດຍກົງ. ອັນທີສອງ, ສັນຍາລາຍຮັບສ່ວນໃຫຍ່ທີ່ບໍລິສັດລົງນາມແມ່ນເປັນເງິນໂດລາສະຫະລັດ. ການເສື່ອມຄ່າຂອງເງິນກີບລາວເຮັດໃຫ້ລາຍໄດ້ຂອງເງິນກີບເພີ່ມຂຶ້ນຕື່ມອີກ.

<u>2) ກຳໄລ ແລະ ຂາດທຶນ</u>

ໃນປີ 2024, ລາຍຈ່າຍທັງໝົດຂອງ ວຈຊຕ ແມ່ນ 11.668.774.760,00 ກີບ, ມີການເພີ່ມຂຶ້ນ 24% ຈາກປີທີ່ແລ້ວ, ເຫດຜົນຕົ້ນຕໍແມ່ນຄ່າໃຊ້ຈ່າຍໃນການບໍລິຫານຈັດການເພີ່ມຂຶ້ນ (ໃນປີ 2024 ບໍລິຫານຈັດກິດຈະກຳເພີ່ມຂຶ້ນ 71% ເມື່ອທຽບໃສ່ປີຜ່ານມາ; ການເສື່ອມຄ່າຂອງເງິນກີບແມ່ນຂ້ອນຂ້າງຮ້າຍແຮງ ແລະ ຄ່າທຳນຽມການກວດສອບ ແລະ ຄ່າບໍລິຫານທີ່ບໍລິສັດກຳນົດໃນສັນຍາແມ່ນເງິນໂດລາສະຫະລັດ); ກຳໄລກ່ອນເສຍອາກອນແມ່ນ 23.793.891.307,00 ກີບ, ອາກອນກຳໄລແມ່ນ 4.538.525.316,00 ກີບ, ກຳໄລສຸດທິແມ່ນ 19.255.365.991,00 ກີບ, ທຽບໃສ່ປີຜ່ານມາເພີ່ມຂຶ້ນ 58%.

ສາເຫດທີ່ກຳໄລສຸດທິເພີ່ມຂຶ້ນ: ບໍລິສັດໄດເພີ່ມຄວາມພະຍາຍາມສົ່ງເສີມດ້ານການຕະຫຼາດ, ເພື່ອເພີ່ມລາຍໄດ້ຈາກການດຳເນີນງານ,ໃນເວລາດຽວກັນໄດ້ສ້າງຄວາມເຂັ້ມແຂງໃນການຄວບຄຸມຄ່າໃຊ້ຈ່າຍ, ເຮັດໃຫ້ອັດຕາການເຕີບໂຕຂອງລາຍໄດ້ແມ່ນສູງກວ່າອັດຕາການເພີ່ມຂຶ້ນຂອງລາຍຈ່າຍ.

<u>3) ຊັບສິນທັງໝົດ</u>

ຮອດວັນທີ 31 ທັນວາ 2024, ຊັບສິນທັງໝົດຂອງບໍລິສັດ ແມ່ນ 336.166.803.849,00 ກີບ, ເພີ່ມຂຶ້ນ 7,43% ທຽບໃສ່ປີ 2023.

ສາເຫດທີ່ເພີ່ມຂຶ້ນ: ມີການຊື້ຊັບສິນໃໝ່ໃນໄລຍະປີ 2024, ອັດຕາສ່ວນການໃຫ້ເຊົ່າຫ້ຽງແລະຕ້ຽກຫ້ອງການມີການເພີ່ມຂຶ້ນ, ຄ່າເຊົ່າຈາກລູກຄ້າທຽບໃສ່ບັນຊີໜີ້ຕ້ອງຮັບ ມີການເພີ່ມຂຶ້ນ.

<u>4) ໜີ້ສິນທັງໝົດ</u>

ຮອດວັນທີ 31 ທັນວາ 2024, ໜີ້ສິນທັງໝົດຂອງບໍລິສັດ ແມ່ນ 53.285.519.029,00 ກີບ, ເພີ່ມຂຶ້ນ 9,72% ທຽບໃສ່ປີ 2023.

ສາເຫດທີ່ເພີ່ມຂຶ້ນ: ໃນປີການລາຍງານບັນຊີ ມູນຄ່າຂອງການປະເມີນຊັບສິນໃນດ້ານການລົງທຶນອະສັງຫາລິມະຊັບມີການເພີ່ມຂຶ້ນ ເຮັດໃຫ້ອາກອນເງື່ອນຊຳລະໜີ້ສິນໄດ້ເພີ່ມຂຶ້ນ.

2. ແຜນການດຳເນີນທຸລະກິດປະຈຳປີ 2025

ໃນແຜນງົບປະມານກ່ຽວກັບການດຳເນີນທຸລະກິດປະຈຳປີ 2025, ຄາດວ່າລາຍຮັບບໍ່ຕ່ຳກວ່າ 23,20 ຕື້ກີບ ແມ່ນເທົ່າກັບລາຍຮັບປີ 2024.

ລາຍລະອຽດຂອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດປະຈຳປີ 2025 ແມ່ນໄດ້ຄັດຕິດໃນເອກະສານຄັດຕິດ 4.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບ ຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດປະຈຳປີ 2025.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ຫຼັງຈາກເລຂານຸການກອງປະຊຸມໄດ້ລາຍງານລາຍລະອຽດກ່ຽວກັບວາລະແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນຕໍ່ວາລະນີ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳເຫັນ..

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ມະຕິ: ເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດປີ 2025

- ເຫັນດີຈຳນວນ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ;

- ບໍ່ເຫັນດີຈຳນວນ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2024 ຂອງບໍລິສັດ

ອີງຕາມກົດລະບຽບຂອງບໍລິສັດ,ສຳລັບການແບ່ງເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ ພາຍຫຼັງທີ່ໄດ້ຫັກກຳໄລສຸດທິ ແລະ ກຳໄລສະສົມເຂົ້າຄັງສຳຮອງໄວ້ຕາມກົດໝາຍທີ່ກ່ຽວຂ້ອງ .

ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນປະຈຳປີ 2024 ຄືດັ່ງລຸ່ມນີ້:

1. ແບ່ງເຂົ້າຄັງສະສົມຕາມລະບຽບການ: 10%;

2. ຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ;

3. ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;

4. ກຳນົດເອົາວັນທີ 02/05/2025 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ, ມື້ຈ່າຍເງິນປັນຜົນແມ່ນ 28/05/2025;

5. ມອບໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ຫຼັງຈາກເລຂານຸການກອງປະຊຸມໄດ້ລາຍງານລາຍລະອຽດກ່ຽວກັບວາລະແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນຕໍ່ວາລະນີ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳເຫັນ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

ມະຕິ: ເຫັນດີແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2024 ຂອງບໍລິສັດ ດັ່ງນີ້:

1. ແບ່ງເຂົ້າຄັງສະສົມຕາມລະບຽບການ: 10%;

2. ຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ;

3. ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;

4. ກຳນົດເອົາ 02/05/2025 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ, ມື້ຈ່າຍເງິນປັນຜົນແມ່ນ 28/05/2025;

5. ມອບໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ;

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ.

ວ່າຈ້າງ ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜຸ້ດຽວ PricewaterhouseCoopers (Laos) Sole Co., Ltd ເປັນບໍລິສັດກວດສອບບັນຊີຂອງບໍລິສັດ. ປີບັນຊີສຳລັບການກວດສອບແມ່ນປີ 2025 ແລະ ຄ່າບໍລິການກວດສອບແມ່ນ 28,500 ໂດລາ/ປີ.

ເມື່ອປຽບທຽບລາຄາກັບບໍລິສັດກວດສອບທີ່ນຳໃຊ້ໃນປັດຈຸບັນ, ມີລາຍລະອຽດແມ່ນດັ່ງນີ້:

ລຳດັບ	ບໍລິສັດກວດສອບ	ສະກຸນເງິນ	ໄລຍະປີ				
			2021	2022	2023	2024	2025
1	ບໍລິສັດ ເອິນແອນຢັ ງ ລາວຈຳກັດ	ໂດລາ	31,000				

2	ບໍລິສັດ ເອີນແອນຢັ້ງ ລາວຈຳກັດ	ໂດລາ		31,000			
3	ບໍລິສັດ ເອີນແອນຢັ້ງ ລາວຈຳກັດ	ໂດລາ			31,000		
4	ບໍລິສັດ ພຣາຍສວໍເຕີ້ເຮົ້າສກຸບ ເປີສ (ລາວ) ຈຳກັດຜູ້ດຽວ	ໂດລາ				27,500	
5	ບໍລິສັດ ພຣາຍສວໍເຕີ້ເຮົ້າສກຸບ ເປີສ (ລາວ) ຈຳກັດຜູ້ດຽວ	ໂດລາ					28,500

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ຫຼັງຈາກເລຂານຸການກອງປະຊຸມໄດ້ລາຍງານລາຍລະອຽດກ່ຽວກັບວາລະແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນຕໍ່ວາລະນີ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳເຫັນ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມລົງຄະແນນສຽງຕໍ່ວາລະນີ້.

<u>ມະຕິ: ເຫັນດີການວ່າຈ້າງ ບໍລິສັດ ພຣາຍສວໍເຕີ້ເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ Pricewater houseCoopers (Laos) Sole Co., Ltd) ເປັນບໍລິສັດກວດສອບບັນຊີຂອງບໍລິສັດ. ປີບັນຊີສຳລັບການກວດສອບແມ່ນປີ 2025 ແລະ ຄ່າບໍລິການກວດສອບແມ່ນ 28,500 ໂດລາ/ປີ.</u>

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ;
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ.

ຫຼັງຈາກພິຈາລະນາ ແລະ ຮັບຮອງແຕ່ລະວາລະແລ້ວ, ມີຜູ້ຖືຮຸ້ນໜຶ່ງທ່ານມີຄຳເຫັນດັ່ງນີ້:

<u>ທ່ານ KRAIWAL KADAVANICH ມີຄຳເຫັນວ່າ:</u>

1. ເຫັນວ່າ ໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024 ວາລະທີ 5 ສະບັບພາສາອັງກິດບໍ່ຖືກຕ້ອງ, ເນື່ອງຈາກສະບັບພາສາລາວເປັນວາລະທີ 5 ແຕ່ ພາສາອັງກິດ ເປັນວາລະທີ 6, ສະເໜີໃຫ້ແກ້ໄຂໃຫ້ຖືກຕ້ອງ.

2. ຂໍທັກທ້ວງວ່າ ຕາມປົກກະຕິໃນຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມຕ້ອງຖາມຜູ້ຖືກຮຸ້ນ ວ່າ ທ່ານໃດມີຄຳຖາມຕື່ມບໍ.

3. ຂໍທັກທ້ວງ ເອກະສານແນບ 4 (ບົດລາຍງານການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດປີ 2025 ຂອງ ວຈຊຕ) ສະບັບພາສາລາວ ແລະ ພາສາອັງກິດຫົວຂໍ້ທີ 3 ບໍ່ກົງກັນ, ເຫັນວ່າສະບັບພາສາລາວມີຄວາມຖືກຕ້ອງ ຊຶ່ງຂຽນວ່າໂຄງຮ່າງຈັດຕັ້ງ ສະພາບໍລິຫານ, ແຕ່ພາສາອັງກິດໃຊ້ຄຳວ່າ Organizational Structure(ແປວ່າ ໂຄງຮ່າງຂອງອົງກອນ), ໂຄງຮ່າງຂອງອົງກອນ ມີຄວາມໝາຍກວ້າງກວ່າໂຄງຮ່າງຈັດຕັ້ງສະມາສິກ ບໍລິຫານ ແລະ ຄະນະກຳມະການ,ສະເໜີໃຫ້ແກ້ໄຂໃຫ້ຖືກຕ້ອງ.

<u>ທ່ານ ເຫຼີຍ ຢ້າວຫາຍ ເລຂານຸການກອງປະຊຸມຕອບວ່າ:</u>

ຂອບໃຈທີ່ມີການປະກອບຄຳເຫັນ, ເຫັນດີຕາມຄຳສະເໜີຂອງທ່ານ KRAIWAL KADAVANICH.

ຫຼັງຈາກພິຈາລະນາ ແລະ ຮັບຮອງວາລະຕ່າງໆແລ້ວ ທ່ານປະທານກອງປະຊຸມໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມໃນເວລາ 15:00 ໂມງ ຂອງວັນດຽວກັນ.

ຜູ້ບັນທຶກ	ປະທານກອງປະຊຸມ
(MR.LEI YAOHAI)	(MR.WANG WEIKUN)

ເອກະສານຄັດຕິດ 3:

ບົດລາຍງານການດຳເນີນທຸລະກິດປະຈຳປີ 2025
ຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

1. ຂໍ້ມູນກ່ຽວກັບບໍລິສັດ

1.1 ວິໄສທັດ

ວຈຊຕ ມຸ່ງໝັ້ນ ການສ້າງແບຣນສູນການຄ້າອັນດັບໜຶ່ງຢູ່ລາວ, ເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງ ການເງິນ ແລະ ສູນກາງການວາງສະແດງ ຂອງປະເທດລາວ.

1.2 ພາລະກິດ

ນຳເອົາວິຖີຊີວິດແບບຕົວເມືອງທີ່ເຕັມໄປດ້ວຍຄວາມສຸກໃຫ້ແກ່ປະເທດລາວ.

1.3 ແນະນຳບໍລິສັດ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30 ພະຈິກ 2017 ໂດຍບໍລິສັດພັດ ທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ (ເອີ້ນຫຍໍ້ວ່າ “ບໍລິສັດ ໜອງຈັນເໜືອ”)ທີ່ຮ່ວມກັນ ສ້າງຕັ້ງຂຶ້ນລະຫວ່າງກຸ່ມບໍລິສັດ ກໍ່ສ້າງ ລ້ຽງທຶນ ແລະ ຖືຮຸ້ນແຂວງຢຸນນານ ຈຳກັດ ແລະ ກຸ່ມບໍລິສັດ ກຣິດຕະພິງ ຈຳກັດ. ບໍລິສັດໄດ້ສຳເລັດການຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການໃນວັນທີ 31 ພຶດສະພາ 2019 (ຊື່ຫຼັກຊັບ “VCL”).

ກິດຈະການຫຼັກ ຂອງບໍລິສັດ ແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ເຊົ່າ-ຂາຍ ເຊິ່ງ ປະກອບດ້ວຍ ການໃຫ້ເຊົ່າ ແລະ ຂາຍພື້ນທີ່ຮ້ານຂາຍເຄື່ອງ, ການໃຫ້ເຊົ່າ ແລະ ຂາຍພື້ນທີ່ສຳນັກງານຫ້ອງການ, ການໃຫ້ ເຊົ່າພື້ນທີ່ຈັດງານວາງສະແດງ ແລະ ການໃຫ້ເຊົ່າພື້ນທີ່ປ້າຍໂຄສະນາ ແລະ ການຫັກເອົາເປີເຊັນຕາມຍອດຂາຍໃນສູນການ ຄ້າ. ໃນເວລາການບໍລິຫານຫ້າງ ແລະ ຕຶກອາຄານສຳນັກງານ ດ້ວຍການສ້າງເປັນແບຣນຂອງຕົນ ເພີ່ມປະສິດທິພາບໃນ ວຽກງານການບໍລິການ ປັບປຸງຮູບແບບການດຳເນີນທຸລະກິດ, ວຈຊຕ ໄດ້ດຶງດູດວິສາຫະກິດທີ່ມີຊື່ສຽງເຂົ້າມາເຊົ່າພື້ນທີ ແລະ ຮ່ວມທຸລະກິດ ໂດຍໃນໂຊນຫ້າງມີ ທະນາຄານແຫ່ງ ສປ ຈີນ, ຮ້ານມິນິໂຊ, ໂຮງໜັງ Major Platinum Cineplex ແລະ ຮ້ານຂາຍເຄື່ອງອື່ນໆທີ່ມີຊື່ສຽງ ແລະ ໃນໂຊນຕຶກອາຄານສຳນັກງານມີ KOREA WESTERN POWER Co., Ltd, ບໍລິສັດ ປະກັນໄພພຣຸເດັນໂຊ, ບໍລິສັດ ດີເຄເອັດສເຮັດສ ລາວ, ຕ້າຖາງກຣຸບ ແລະ ວິສາຫະກິດ ຕ່າງປະເທດຂະໜາດໃຫຍ່ອື່ນໆ. ມາເຖິງປະຈຸບັນ ວຽງຈັນເຊີນເຕີ ໄດ້ສ້າງເປັນສູນກາງການຄ້າ ສູນກາງສຳນັກງານ ສູນກາງ ທາງດ້ານການເງິນ ແລະ ສູນກາງການຈັດງານວາງສະແດງສິນຄ້າໃນລາວ, ເປັນແບຣນສູນການຄ້າອັນດັບໜຶ່ງຢູ່ລາວ ແລະ ຕົວແບບການຮ່ວມມື ຂອງລັດຖະບານສອງຊາດລາວ ຈີນ.

1.4 ຂໍ້ມູນທົ່ວໄປຂອງບໍລິສັດ

1.4.1 ທີ່ຕັ້ງ

ສຳນັກງານຂອງ ວຈຊຕ ຕັ້ງຢູ່ ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ

1.4.2 ຕິດຕໍ່ ແລະ ພົວພັນ

ເບີໂທ (+856-21) 228299

ແຟັກ (+856-21) 228299

ເວັບໄຊ: http://www.vcplao.com/

1.4.3 ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 24 ມີນາ 2026 ແມ່ນ 147.199.900.000,00 ກີບ.

1.4.4 ຂໍ້ມູນກ່ຽວກັບຜູ້ຖືຮຸ້ນ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງ ວຈຊຕ ທີ ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປ ນະວັນທີ 24 ມີນາ 2026 ໄດ້ແກ່:

1. ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕ່ອນເໜືອ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 95.999.200 ຮຸ້ນ ເທົ່າກັບ 65.2169% ຂອງຈຳນວນຮຸ້ນທັງໝົດ.
2. ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 49.482.600 ຮຸ້ນ ເທົ່າກັບ 33.6159% ຂອງຈຳນວນຮຸ້ນທັງໝົດ.

2. ການວິເຄາະ ແລະ ປຶກສາຫາລືຂອງຄະນະບໍລິຫານ

2.1 ທຸລະກິດຫຼັກຂອງບໍລິສັດ

ບໍລິສັດ ວຽງຈັນເຊັນເຕີ ມະຫາຊົນ (ເອີ້ນຫຍໍ້ວ່າ: ວຈຊຕ) ຖືຄອງຊັບສິນຮ້ານຄ້າ ແລະ ຫ້ອງການບາງສ່ວນໃນສູນການຄ້າ ທ່ອງທ່ຽວສາກົນ ວຽງຈັນ ລາວ. ປັດຈຸບັນ, ວຈຊຕ ຖືຄອງຮ້ານຄ້າໃນສູນການຄ້າ ທອງທ່ຽວສາກົນ ວຽງຈັນ ລາວ ແມ່ນ ເປັນເນື້ອທີ 5,827.48 ຕາແມັດ, ເຊິ່ງລວມມີພື້ນທີ່ດຳເນີນທຸລະກິດຮ່ວມຂອງ Major Platinum Cinecomplex ເຊິ່ງເປັນໂຮງຮູບເງົາສາກົນແຫ່ງທຳອິດໃນລາວ; ຖືຄອງພື້ນທີ່ຫ້ອງການ 5,105.33 ຕາແມັດ, ແລະ ມີພື້ນທີ່ຈັດກິດຈະກຳ 591.62 ຕາແມັດ, ລວມທັງໝົດ 11,524.43 ຕາແມັດ.

ທຸລະກິດຫຼັກຂອງ ວຈຊຕ ແມ່ນການໃຫ້ເຊົ່າ-ຂາຍຮ້ານຄ້າ, ໃຫ້ການເຊົ່າ-ຂາຍຫ້ອງການ, ການໃຫ້ເຊົ່າພື້ນທີ່ຈັດ

ກິດຈະກຳໃນສູນການຄ້າ ແລະ ດຳເນີນທຸລະກິດຮ່ວມ.

2.2 ອຸດສາຫະກຳ ແລະ ຕະຫຼາດທີ່ບໍລິສັດຕັ້ງຢູ່

ໃນປີ 2025, ສະພາບເສດຖະກິດມະຫາພາກຂອງລາວໄດ້ສະແດງໃຫ້ເຫັນທ່າອ່ຽງທີ່ດີຂຶ້ນຢ່າງເຫັນໄດ້ຊັດເຈັນ, ຫຼັງຈາກປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດເປັນເວລາສີ່ປີຕິດຕໍ່ກັນ, ໂດຍຜ່ານການປະຕິຮູບນະໂຍບາຍຕ່າງໆ ແລະ ການຊຸກຍູ້ຈາກຄວາມຕ້ອງການພາຍນອກ, ເສດຖະກິດໄດ້ຄ່ອຍໆຟື້ນຕົວ ແລະ ມີສະຖຽນລະພາບ. ສ່ວນໃຫຍ່ແມ່ນໄດ້ຮັບການຂັບເຄື່ອນຈາກການຂະຫຍາຍຕົວຢ່າງໝັ້ນຄົງຂອງຂະແໜງການທ່ອງທ່ຽວ, ການບໍລິການຂົນສົ່ງ, ພະລັງງານ, ບໍ່ແຮ່ ແລະ ການຜະລິດ, ລວມຍອດຜະລິດຕະພັນພາຍໃນ (GDP) ຕະຫຼອດປີໄດ້ຂະຫຍາຍຕົວ 3.5% (ກອງທຶນການເງິນສາກົນ). ຍ້ອນການຮ່ວມມືກັນລະຫວ່າງການຮັດແໜ້ນນະໂຍບາຍເງິນຕາຢ່າງຕໍ່ເນື່ອງ, ການເພີ່ມທະວີມາດຕະການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການປັບປຸງການຄຸ້ມຄອງການເງິນຂອງລັດຖະບານ, ອັດຕາແລກປ່ຽນເງິນກີບໄດ້ຄ່ອຍໆມີສະຖຽນລະພາບຫຼັງຈາກປະສົບກັບຄວາມຜັນຜວນຢ່າງຮຸນແຮງໃນຊຸມປີຜ່ານມາ, ແລະ ຄວາມກົດດັນດ້ານເງິນເຟີ້ໄດ້ຜ່ອນຄາຍລົງ. ທາງລົດໄຟລາວ-ຈີນ ຍັງຄົງສືບຕໍ່ມີບົດບາດເປັນສູນກາງການເຊື່ອມຕໍ່ພາກພື້ນ, ຫຼຸດຜ່ອນຕົ້ນທຶນການຂົນສົ່ງຂ້າມຊາຍແດນຢ່າງຫຼວງຫຼາຍ, ຊຸກຍູ້ການຄ້າ ແລະ ການທ່ອງທ່ຽວ. ການສົ່ງອອກສິນຄ້າ, ການຟື້ນຕົວຂອງການທ່ອງທ່ຽວ, ການເຕີບໂຕຂອງລາຍຮັບຈາກການບໍລິການຂົນສົ່ງ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ໄດ້ສະໜັບສະໜູນການສ້າງທຶນສຳຮອງເງິນຕາຕ່າງປະເທດຄືນໃໝ່ເທື່ອລະກ້າວ, ເພີ່ມຄວາມສາມາດຂອງລາວໃນການຕ້ານທານກັບຜົນກະທົບຈາກພາຍນອກ.

ດ້ວຍການປັບປຸງສະພາບເສດຖະກິດມະຫາພາກຂອງລາວ, ການລົງທຶນໃໝ່ຈາກຕ່າງປະເທດໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ, ລູກຄ້າໃໝ່ທີ່ເຂົ້າມາໃນຕະຫຼາດລາວໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ຕະຫຼາດການໃຫ້ເຊົ່າ-ຂາຍຮ້ານຄ້າ ແລະ ຫ້ອງການໄດ້ເລີ່ມຟື້ນຕົວ, ວຈຊຕ ໄດ້ປັບປ່ຽນນະໂຍບາຍການດຶງດູດການລົງທຶນໃຫ້ເໝາະສົມ, ເພີ່ມທະວີການດຶງດູດການລົງທຶນ, ທຸລະກິດໂດຍລວມຂອງແຕ່ລະພາກສ່ວນການດຳເນີນງານມີທ່າອ່ຽງທີ່ດີຂຶ້ນ.

ໃນຂະນະດຽວກັນ, ໂຄງການລົງທຶນໃໝ່ໃນຂະແໜງອະສັງຫາລິມະສັບດ້ານການຄ້າໃນນະຄອນຫຼວງວຽງຈັນ, ລາວໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ, ໂຄງການອະສັງຫາລິມະສັບເຊັ່ນ: Lao Center, Sheng Bo One ພາຍໃນເຂດການຄ້າ ວຽງຈັນເຊັນເຕີ ໄດ້ເລີ່ມການກໍ່ສ້າງ, ເຊິ່ງຈະເພີ່ມການສະໜອງພື້ນທີ່ການຄ້າ ແລະ ຫ້ອງການໃນອະນາຄົດ. ສູນການຄ້າ Naga Mall, ສູນການຄ້າວຽງຈັນໄລຟເຊັນເຕີ ທີ່ຢູ່ອ້ອມຂ້າງວຽງຈັນເຊັນເຕີ ໄດ້ດຶງດູດລູກຄ້າມາເຊົ່າຮ້ານຄ້າ ແລະ

ຫ້ອງການດ້ວຍຮູບແບບທີ່ຍືດຫຍຸ່ນກວ່າ, ເຊິ່ງກໍ່ໃຫ້ເກີດການແຂ່ງຂັນ ແລະ ການແບ່ງປັນລູກຄ້າ, ການແຂ່ງຂັນໃນຕະຫຼາດກໍ່ຮຸນແຮງຂຶ້ນ. ເພື່ອຕອບສະໜອງຕໍ່ສະພາບການຂອງຂະແໜງການໃນປັດຈຸບັນ, ວຽງຈັນເຊັນເຕີ ຈະສືບຕໍ່ເພີ່ມທະວີການດຶງດູດການລົງທຶນ, ປັບປຸງຄຸນນະພາບການບໍລິການ, ປັບປຸງໂຄງສ້າງຜູ້ປະກອບການ ແລະ ປະເພດທຸລະກິດ, ເພື່ອສ້າງຄວາມຜູກພັນຢ່າງແໜ້ນແຟ້ນຂຶ້ນຂອງລູກຄ້າ, ສືບຕໍ່ສ້າງຄວາມເຂັ້ມແຂງ ແລະ ຍົກລະດັບພາບພົດຍີ່ຫໍ້ ແລະ ຕຳແໜ່ງໃນທ້ອງຕະຫຼາດຂອງວຽງຈັນເຊັນເຕີ.

2.3 ສະພາບການດຳເນີນທຸລະກິດຫຼັກຂອງບໍລິສັດ

ວຽງຈັນເຊັນເຕີ ໄດ້ສືບຕໍ່ປັບປຸງຄຸນນະພາບການບໍລິການຫ້ອງການ, ພ້ອມທັງຂະຫຍາຍລູກຄ້າໃໝ່ຢ່າງຕັ້ງໜ້າ; ໃນນັ້ນ, ພື້ນທີ່ຫ້ອງການທີ່ຂຶ້ນກັບ ວຈຊຕ ໄດ້ນຳເອົາບໍລິສັດໃໝ່ເຂົ້າມາເຊັ່ນ: ກຸ່ມບໍລິສັດ ຕ້າຖາງ ສາຂາ ສາລາຄຳ, ຫ້ອງການທະນາຍຄວາມ ຊວງຊີ ແລະ ອື່ນໆ, ປັດຈຸບັນມີທັງໝົດ 19 ບໍລິສັດເຂົ້າມາຕັ້ງຢູ່ໃນຕຶກອາຄານຫ້ອງການ. ຮອດທ້າຍປີ 2025, ອັດຕາການເຊົ່າຮ້ານຄ້າທີ່ຂຶ້ນກັບ ວຈຊຕ ແມ່ນ 98.66%, ແລະ ອັດຕາການເຊົ່າຫ້ອງການແມ່ນ 90.08%. ລູກຄ້າໃນພາກສ່ວນສູນການຄ້າ ຍັງຄົງຮັກສາສະຖຽນລະພາບຢູ່.

ໃນພາກສ່ວນທຸລະກິດສູນການຄ້າ, ວຽງຈັນເຊັນເຕີ ໄດ້ຈັດກິດຈະກຳຂະໜາດໃຫຍ່ ແລະ ກາງທັງໝົດ 56 ຄັ້ງ, ຄຸນນະພາບ ແລະ ຜົນກະທົບຂອງກິດຈະກຳຫຼັກໄດ້ຮັບການປັບປຸງຢ່າງຕໍ່ເນື່ອງ, ກິດຈະກຳທີ່ໂດດເດັ່ນລວມມີ: Maker Fair ຄັ້ງທຳອິດຂອງລາວ, ກິດຈະກຳສຳຜັດວັດທະນະທຳເກົ່າຫຼີ, ງານວາງສະແດງສິນຄ້າລາວ-ຈີນ ປີ 2025, ງານວາງສະແດງຜົນງານສິລະປະການຖ່າຍຮູບລາວ-ຈີນ “ປີກແຫ່ງສັນຕິພາບ” , ງານວາງສະແດງລົດ Wuling ແລະ Chery, ວັນພາສາມືໂລກ, ການແຂ່ງຂັນກິລາອີສະປອດແຫ່ງຊາດລາວ, ງານບຸນຜະລິດຕະພາບແຫ່ງຊາດລາວ, ການແຂ່ງຂັນກິລາເຕັ້ນ ແລະ ກິລາເພາະກາຍໃນງານກິລາແຫ່ງຊາດລາວ ຄັ້ງທີ 12, ການແຂ່ງຂັນທັກສະການເວົ້າລາວ-ຈີນ ຂອງໂຄງການຮ່ວມມື “ໜຶ່ງແລວ ໜຶ່ງເສັ້ນທາງ” ແຂວງຢຸນນານ, ການແຂ່ງຂັນທັກສະສີມືແຮງງານ ແລະ ທັກສະຕົວແບບຂອງໂຄງການຮ່ວມມື “ໜຶ່ງແລວ ໜຶ່ງເສັ້ນທາງ” ແຂວງຢຸນນານ, ການແຂ່ງຂັນປິງປອງລາວ ປີ 2025 ແລະ ອື່ນໆ. ພ້ອມກັນນັ້ນ, ຍັງໄດ້ຂະຫຍາຍຄວາມຮ່ວມມືກັບວິສາຫະກິດ, ໂຮງຮຽນ ແລະ ອົງການຈັດຕັ້ງຕ່າງໆຢ່າງຕັ້ງໜ້າ, ເປີດຕົວໂຄງການອາຫານສະເພາະພະນັກງານ, ການຊື້ປີ້ຮູບເງົາເປັນກຸ່ມ ແລະ ອື່ນໆ, ເຊິ່ງໄດ້ຊຸກຍູ້ການບໍລິໂພກໃນສູນການຄ້າ.

ໃນພາກສ່ວນທຸລະກິດຮ່ວມຂອງສູນການຄ້າ, ໂຮງໜັງ Major ໄດ້ນຳເອົາຮູບເງົາທີ່ນິຍົມຫຼາຍເລື່ອງເຂົ້າມາສາຍ ເຊັ່ນ: “Captain America”, “The Legend of the Condor Heroes: The Heroic Couple”, “John Wick 4”,

“Nezha 2”, “Zootopia 2” ແລະ ອື່ນໆ, ເຊິ່ງໄດ້ເພີ່ມທາງເລືອກໃນການຊົມຮູບເງົາພາຍໃນສູນການຄ້າ ແລະ ດຶງດູດລູກຄ້າໃຫ້ເຂົ້າມາໃຊ້ບໍລິການຫຼາຍຂຶ້ນ. ນອກຈາກນີ້ ຍັງໄດ້ຈັດກິດຈະກຳຊົມຮູບເງົາເປັນກຸ່ມຂອງສະຖານທູດຈີນປະຈຳລາວ, ແລະ ຮ່ວມມືກັບສະພາການຄ້າຈີນປະຈຳລາວ, ສຳນັກງານໃຫຍ່ຂອງກຸ່ມບໍລິສັດກໍ່ສ້າງ ລົງທຶນ ແລະ ຖືຮຸ້ນ ລາວ, ໄດ້ຈັດກິດຈະກຳຊົມຮູບເງົາ “Nezha 2” ໃນລາວ, ເຊິ່ງໄດ້ສົ່ງເສີມວັດທະນະທຳອັນດີງາມຂອງຈີນ ແລະ ຍົກລະດັບອິດທິພົນຂອງວຽງຈັນເຊັນເຕີ ໃນວົງການວິສາຫະກິດຈີນ.

2.4 ຂໍ້ມູນທາງດ້ານການເງິນທີ່ສຳຄັນປະຈຳປີ 2025

2.4.1 ລາຍຮັບ

ໃນປີ 2025, ລາຍໄດ້ຈາກການດຳເນີນທຸລະກິດປະຈຳປີຂອງບໍລິສັດແມ່ນເປັນເງິນ 26.291.230.325,00 ກີບ, ມີການເພີ່ມຂຶ້ນ 14,32% ຈາກປີທີ່ແລ້ວ. ໃນນັ້ນ, ລາຍຮັບຈາກການເຊົ່າຮ້ານຂາຍເຄື່ອງແມ່ນເປັນເງິນ 7.416.048.626,00 ກີບ, ລາຍຮັບຈາກການໃຫ້ເຊົ່າພື້ນທີ່ຫ້ອງການ ແມ່ນເປັນເງິນ 13.279.185.224,00 ກີບ, ລາຍຮັບຈາກການຮ່ວມທຸລະກິດ ແມ່ນເປັນເງິນ 1.878.070.963,00 ກີບ, ລາຍຮັບຈາກການໃຫ້ເຊົ່າພື້ນທີ່ຈັດງານ ແມ່ນເປັນເງິນ 658.692.378,00 ກີບ, ລາຍຮັບຈາກການໃຫ້ເຊົ່າປ້າຍໂຄສະນາ ແມ່ນເປັນເງິນ 123.303.368,00 ກີບ ແລະ ລາຍຮັບອື່ນໆອີກ 2.935.929.766,00 ກີບ.

ສາເຫດທີ່ເຮັດໃຫ້ລາຍຮັບຈາກການດຳເນີນທຸລະກິດຂອງບໍລິສັດເພີ່ມຂຶ້ນໃນປີ 2025: ໜຶ່ງ ແມ່ນຍ້ອນການຟື້ນຕົວຢ່າງຕໍ່ເນື່ອງຂອງການເຄື່ອນໄຫວທາງເສດຖະກິດໃນລາວ ແລະ ປະເທດເພື່ອນບ້ານໃນປີ 2025, ເຮັດໃຫ້ການເຄື່ອນໄຫວຂອງຕະຫຼາດພາກພື້ນເພີ່ມຂຶ້ນຢ່າງຫຼວງຫຼາຍ ແລະ ຄວາມຕ້ອງການເຊົ່າຮ້ານ ແລະ ຫ້ອງການກໍເພີ່ມຂຶ້ນ; ສອງ ແມ່ນບໍລິສັດໄດ້ຍຶດໝັ້ນໂອກາດທາງການຕະຫຼາດ, ເພີ່ມທະວີການດຶງດູດການລົງທຶນ ແລະ ການໂຄສະນາຢ່າງຕັ້ງໜ້າ, ເຊິ່ງໄດ້ຊ່ວຍເພີ່ມອັດຕາການເຊົ່າຂອງຮ້ານຄ້າ ແລະ ຫ້ອງການພາຍໃຕ້ການຄຸ້ມຄອງຂອງບໍລິສັດຢ່າງມີປະສິດທິພາບ ແລະ ໄດ້ຊຸກຍູ້ໂດຍກົງໃຫ້ລາຍຮັບຈາກພາກສ່ວນການເຊົ່າເພີ່ມຂຶ້ນ; ສາມ ແມ່ນບໍລິສັດໄດ້ຂາຍຫ້ອງການໜຶ່ງຫ້ອງໃນປີນີ້, ເຊິ່ງເຮັດໃຫ້ລາຍຮັບຈາກການຂາຍເພີ່ມຂຶ້ນ.

2.4.2 ກຳໄລ ແລະ ຂາດທຶນ

ໃນປີ 2025, ລາຍຈ່າຍທັງໝົດຂອງ ວຈຊຕ ແມ່ນ 14.578.970.948,00 ກີບ, ມີການເພີ່ມຂຶ້ນ 24,94% ຈາກປີທີ່ແລ້ວ, ສາເຫດຕົ້ນຕໍແມ່ນການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍໃນການຄຸ້ມຄອງການດຳເນີນງານ (ໜຶ່ງແມ່ນເພື່ອຕອບສະໜອງ

ຄວາມຕ້ອງການທີ່ເພີ່ມຂຶ້ນໃນການຕ້ອນຮັບນັກທ່ອງທ່ຽວສາກົນ, ປັບປຸງຄຸນນະພາບຂອງຊັບສິນ ແລະ ສ້າງຄວາມປະທັບໃຈໃຫ້ແກ່ລູກຄ້າທີ່ມາໃຊ້ບໍລິການ, ບໍລິສັດໄດ້ດຳເນີນການສ້ອມແປງ ແລະ ປັບປຸງຍົກລະດັບສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງກັບຮ້ານຄ້າ ແລະ ອາຄານສຳນັກງານຢ່າງຕໍ່ເນື່ອງໃນໄລຍະເວລາທີ່ລະບຸໃນບົດລາຍງານ, ເຊິ່ງເຮັດໃຫ້ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງເພີ່ມຂຶ້ນ; ສອງແມ່ນຍ້ອນການເຄື່ອນໄຫວຂອງຕະຫຼາດທີ່ເພີ່ມຂຶ້ນ ແລະ ຈຳນວນຜູ້ມາໃຊ້ບໍລິການທີ່ເພີ່ມຂຶ້ນ, ເພື່ອບັນເທົາຄວາມກົດດັນໃນການຈອດລົດ ແລະ ປັບປຸງການບໍລິການໃຫ້ຄົບວົງຈອນ, ບໍລິສັດໄດ້ເພີ່ມພື້ນທີ່ເຊົ່າ ຫຼື ລາຄາເຊົ່າຕໍ່ໜ່ວຍຂອງບ່ອນຈອດລົດຊົ່ວຄາວ, ເຊິ່ງເຮັດໃຫ້ຄ່າເຊົ່າເພີ່ມຂຶ້ນພ້ອມກັນ).

ໃນປີ 2025, ວຈຊຕ ໄດ້ສ້າງກຳໄລກ່ອນເສຍອາກອນແມ່ນ 12.502.609.158,00 ກີບ, ອາກອນກຳໄລແມ່ນ 2.829.889.317,00 ກີບ, ກຳໄລສຸດທິແມ່ນ 9.672.719.841,00 ກີບ, ທຽບໃສ່ປີທີ່ຜ່ານມາ ແມ່ນຫຼຸດລົງ 49, 77%.

ສາເຫດທີ່ເຮັດໃຫ້ກຳໄລສຸດທິຫຼຸດລົງ: ໜຶ່ງແມ່ນເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າ, ບໍລິສັດໄດ້ເຊົ່າບ່ອນຈອດລົດແລ້ວສະໜອງໃຫ້ລູກຄ້າໃຊ້; ສອງແມ່ນເພື່ອເພີ່ມຄວາມເພິງພໍໃຈໂດຍລວມຂອງລູກຄ້າ, ໄດ້ມີການສ້ອມແປງ ແລະ ປັບປຸງອາຄານຮ້ານຄ້າ ແລະ ອາຄານສຳນັກງານ, ເຊິ່ງເຮັດໃຫ້ຕົ້ນທຶນເພີ່ມຂຶ້ນ.

2.4.3 ຊັບສິນທັງໝົດ

ມາຮອດວັນທີ 31 ທັນວາ 2025, ຊັບສິນທັງໝົດຂອງບໍລິສັດມີມູນຄ່າ 344.883.732.672,00 ກີບ, ເພີ່ມຂຶ້ນ 2.59% ເມື່ອທຽບໃສ່ປີ 2024.

ສາເຫດຂອງການເຕີບໂຕຂອງຊັບສິນ: ໜຶ່ງແມ່ນຍ້ອນມີການຊື້ຊັບສິນໃໝ່ໃນປີ 2025; ສອງແມ່ນຍ້ອນອັດຕາການເຂົ້າມາຂອງຊັບສິນຫ້ອງການໃນສູນການຄ້າເພີ່ມຂຶ້ນ ແລະ ອັດຕາສ່ວນຄ່າເຊົ່າຂອງຜູ້ປະກອບການຕໍ່ບັນຊີລູກໜີ້ເພີ່ມຂຶ້ນ.

2.4.4 ໜີ້ສິນທັງໝົດ

ຮອດວັນທີ 31 ທັນວາ 2025, ໜີ້ສິນທັງໝົດຂອງບໍລິສັດແມ່ນ 53.065.727.511,00 ກີບ (ເທົ່າກັບປະມານ 17.6527 ລ້ານຢວນ), ຫຼຸດລົງ 0.41% ເມື່ອທຽບໃສ່ປີ 2024.

ສາເຫດທີ່ໜີ້ສິນຫຼຸດລົງ: ໃນໄລຍະເວລາລາຍງານ, ບໍລິສັດໄດ້ສົ່ງຄືນເງິນຄ້ຳປະກັນ ແລະ ເງິນຄ້ຳປະກັນການປະຕິບັດທີ່ໄດ້ເກັບໄວ້ກ່ອນໜ້ານີ້ໃຫ້ແກ່ລູກຄ້າ ຫຼື ຜູ້ສະໜອງ, ເນື່ອງຈາກສັນຍາທຸລະກິດບາງສ່ວນໄດ້ໝົດອາຍຸ ຫຼື ໄດ້ປະຕິບັດສຳເລັດແລ້ວ.

3. ຄວາມສ່ຽງທີ່ອາດຈະປະເຊີນໜ້າ

3.1 ດ້ານການບໍລິຫານ ແລະ ການດຶງດູດການລົງທຶນຂອງສູນການຄ້າ: ໜຶ່ງແມ່ນການເພີ່ມຂຶ້ນຂອງພື້ນທີ່ການຄ້າ ແລະ ຈຳນວນຮ້ານຄ້າໃນນະຄອນຫຼວງວຽງຈັນ ເກີນກວ່າການເພີ່ມຂຶ້ນຂອງຈຳນວນຜູ້ບໍລິໂພກ ແລະ ກຳລັງການຊື້, ເຊິ່ງນຳໄປສູ່ການມີພື້ນທີ່ການຄ້າເກີນຄວາມຕ້ອງການໂດຍລວມໃນນະຄອນຫຼວງວຽງຈັນ ແລະ ບໍລິເວນອ້ອມຂ້າງສູນການຄ້າວຽງຈັນເຊັນເຕີ, ອາດຈະເຮັດໃຫ້ຊັບພະຍາກອນຮ້ານຄ້າຂອງສູນການຄ້າວຽງຈັນເຊັນເຕີຖືກແບ່ງປັນ, ລະດັບຄ່າເຊົ່າຮ້ານຄ້າຫຼຸດລົງ, ອັດຕາການເຂົ້າມາຕັ້ງຮ້ານຄ້າ ແລະ ລາຍຮັບຂອງບໍລິສັດຫຼຸດລົງ; ສອງແມ່ນຊັບພະຍາກອນການຄ້າພາຍໃນປະເທດລາວມີຈຳກັດ, ໄລຍະເວລາການນຳເອົາຊັບພະຍາກອນຂອງວິສາຫະກິດ ແລະ ຮ້ານຄ້າທີ່ລົງທຶນຈາກຕ່າງປະເທດເຂົ້າມາລົງທຶນແມ່ນຂ້ອນຂ້າງຍາວນານ, ອາດຈະເຮັດໃຫ້ການເຕີບໂຕຂອງລາຍຮັບການດຳເນີນງານຂອງບໍລິສັດບໍ່ບັນລຸຕາມຄາດໝາຍ.

3.2 ດ້ານການບໍລິຫານ ແລະ ການດຶງດູດການລົງທຶນຂອງອາຄານສຳນັກງານ: ໜຶ່ງແມ່ນສະພາບແວດລ້ອມໂດຍລວມຂອງບາງຊັ້ນຕ້ອງການປັບປຸງຢ່າງຮີບດ່ວນ, ຄວາມພໍໃຈຂອງລູກຄ້າທີ່ຈະເຂົ້າມາເຊົ່າພື້ນທີ່ແມ່ນຕ່ຳ, ຈຳເປັນຕ້ອງເພີ່ມການລົງທຶນເພື່ອປັບປຸງສະພາບແວດລ້ອມສາທາລະນະເພື່ອດຶງດູດລູກຄ້າໃຫ້ເຂົ້າມາເຊົ່າພື້ນທີ່; ສອງແມ່ນໃນໄລຍະຜ່ານມາ, ມີໂຄງການລົງທຶນໃໝ່ໃນອະສັງຫາລິມະສັບແບບຄົບວົງຈອນໃນຕົວເມືອງວຽງຈັນ ເຊັ່ນ: ວຽງຈັນໄລຟເຊັນເຕີ, ເຂດເສດຖະກິດພິເສດບຶງທາດຫຼວງ, ສູນການຄ້າລາຊະວົງ, ຕະຫຼາດຊັນຈຽງ ແລະ ອື່ນໆ, ເຊິ່ງເຮັດໃຫ້ການສະໜອງພື້ນທີ່ສຳນັກງານໃຫມ່ໃຫ້ເຊົ່າມີການເພີ່ມຂຶ້ນຢ່າງຫຼວງຫຼາຍ, ສະພາບການແຂ່ງຂັນຍັງຄົງຮຸນແຮງຂຶ້ນຢ່າງຕໍ່ເນື່ອງ ແລະ ຄວາມກົດດັນຕໍ່ລາຄາແມ່ນເພີ່ມຂຶ້ນຢ່າງຕໍ່ເນື່ອງ.

4.ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ແລະ ຄະນະກຳມະການ

4.1 ສະພາບໍລິຫານ

4.1.1 ສະມາຊິກສະພາບໍລິຫານ

ສະພາບໍລິຫານ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ປະກອບດ້ວຍ 11 ທ່ານ:

- ທ່ານ ເຫີ ຈຸນ ເປັນປະທານ; ຈຳນວນຮຸ້ນທີ່ຖືຄອງ: 0; ຄ່າຕອບແທນ: 0
- ທ່ານ ນາງ ອໍລະໄທ ສັນຕິຖິງຄາ ເປັນຮອງປະທານ; ຈຳນວນຮຸ້ນທີ່ຖືຄອງ: 0; ຄ່າຕອບແທນ: 0
- ທ່ານ ບູລະພາ ສັນຕິຖິງຄາ ເປັນສະມາຊິກ; ຈຳນວນຮຸ້ນທີ່ຖືຄອງ: 0; ຄ່າຕອບແທນ: 0
- ທ່ານ ຫວັງ ເຫວີຍຄຸນ ເປັນສະມາຊິກ; ຈຳນວນຮຸ້ນທີ່ຖືຄອງ: 0; ຄ່າຕອບແທນ: 0

- ທ່ານ ອູ່ ຊິງຫວາ ເປັນສະມາຊິກ; ຈຳນວນຮຸ້ນທີ່ຖືຄອງ: 0; ຄ່າຕອບແທນ: 0
- ທ່ານ ຫຼໍ ສ່ຽວຕິງ ເປັນສະມາຊິກ; ຈຳນວນຮຸ້ນທີ່ຖືຄອງ: 5000; ຄ່າຕອບແທນ: 0
- ທ່ານ ເຫຼີ ຢ້າວຫ້າຍ ເປັນສະມາຊິກ; ຈຳນວນຮຸ້ນທີ່ຖືຄອງ: 4900; ຄ່າຕອບແທນ: 0
- ທ່ານ ສ່ຽວ ໂຢງ ເປັນສະມາຊິກອິດສະຫຼະ; ຈຳນວນຮຸ້ນທີ່ຖືຄອງ: 0; ຄ່າຕອບແທນ: 0
- ທ່ານ ຈ່າງ ທຽນຢີ ເປັນສະມາຊິກອິດສະຫຼະ; ຈຳນວນຮຸ້ນທີ່ຖືຄອງ: 0; ຄ່າຕອບແທນ: 0
- ທ່ານ ວຽງສະຫວັນ ພັນທະລີ ເປັນສະມາຊິກອິດສະຫຼະ ຈຳນວນຮຸ້ນທີ່ຖືຄອງ: 0; ຄ່າຕອບແທນ: 0
- ທ່ານ ຈໍຊົ່ງ ບົວສີເນ່ັງມາ ເປັນສະມາຊິກອິດສະຫຼະ ຈຳນວນຮຸ້ນທີ່ຖືຄອງ: 0; ຄ່າຕອບແທນ: 0

4.1.2 ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

（1）ທ່ານ ເຫີຈຸ່ນ (Mr. HE Jun)



- ສັນຊາດ: ຈີນ
- ວັນເກີດ: 11 /04/1989
- ພາສາ: ຈີນ,ອັງກິດ
- ຕຳແໜ່ງ: ປະທານ
- <u>ປະຫວັດການສຶກສາ:</u>

ຈົບການສຶກສາລະດັບປະລິນຍາໂທ ຢູ່ທີ່ມະຫາວິທະຍາໄລ ຢຸນນານ ຈີນ ສາຂາບໍລິຫານທຸລະກິດ.

（2）ທ່ານ ນາງ ອໍລະໄທ ສັນຕິຄົງຄາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 21/01/1979
- ພາສາ: ລາວ,ໄທ
- ຕຳແໜ່ງ: ຮອງປະທານ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລແຫ່ງຊາດລາວ, ສາຂາບໍລິຫານທຸລະກິດ.

（3） ທ່ານ ບຸລະພາ ສັນຕິຄົງຄາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 06/02/1967
- ພາສາ: ຈີນ, ລາວ
- ຕຳແໜ່ງ: ເປັນສະມາຊິກ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຫວາໝານຫຼີກົງ ຈີນ, ສາຂາບໍລິຫານທຸລະກິດ.
-

（4）ທ່ານ ຫວັ໋ງ ເໜວີຍຄຸນ (Mr. Wang Weikun)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 15/05/1984
- ພາສາ: ຈີນ,ອັ໋ງກິດ
- ຕຳແໜ່ງ: ເປັນສະມາຊິກ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າ ຕ່າງປະເທດ ຈີນ, ສາຂາການເງິນ. ລະດັບປະລິນຍາໂທຢູ່ມະຫາວິທະຍາໄລອາຊິດາ ຍີ່ປຸ່ນ, ສາຂາ ການພົວພັນສາກົນ.

（5）ທ່ານ ອູ່ ຊິ໋ງຫວາ (Mr. Wu Xinghua)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 09/01/1984
- ພາສາ: ຈີນ, ອັ໋ງກິດ, ລາວ, ໄທ
- ຕຳແໜ່ງ: ເປັນສະມາຊິກ, ອຳນວຍການຝ່າຍປະຕິບັດການ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລອັດສັມຊັ່ນ (Assumption Thai), ສາຂາບໍລິຫານທຸລະກິດ.

（6）ທ່ານ ຫຼໍ ສ້ຽວດົ້ງ (Mr. Luo Xiaodong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 07/03/1989
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກ, ອຳນວຍການຝ່າຍການເງິນ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລການເງິນ ແຂວງຢຸນ ນານ ຈີນ, ສາຂາການເງິນ-ບັນຊີ.

（7）ທ່ານ ເຫຼີ ຢ້າວຫ້າຍ(Mr. Lei Yaohai)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 28 /11/1984
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກ, ເລຂານຸການສະພາບໍລິຫານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລຂອນແກ່ນ ປະເທດໄທ, ສາຂາບໍລິຫານທຸລະກິດ.

（8）ທ່ານ ສ່ຽວ ໂຢງ (Mr. Xiao Yong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 02/07/1977
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ໋ງ ສປຈີນ, ສາຂາການເງິນ.

（9）ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 25/10/1976
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລ ແຂວງຢຸນນານ ສປຈີນ, ສາຂາກົດໝາຍ.

（10）ທ່ານ ຈໍຊິ່ງ ບົວສີເນັ່ງມາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 15/12/1972
- ພາສາ: ລາວ, ອັງກິດ, ໄທ, ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

（11）ທ່ານ ວຽງສະຫວັນ ພັນທະລີ



- ສັນຊາດ: ລາວ
- ວັນເດືອນປີເກີດ: 25/01/1976
- ພາສາ:ລາວ, ອັງກິດ, ໄທ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ ສາຂາກົດໝາຍວ່າດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.

4.2 ຄະນະກຳມະການ

4.2.1 ຄະນະກຳມະການຄຸ້ມຄອງບໍລິຫານ:

- ທ່ານ ຫວັງ ເຫວີຍຄຸນ (Mr. Wang Weikun) ສະມາຊິກ/ປະທານຄະນະກຳມະການຄຸ້ມຄອງບໍລິຫານ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ສະມາຊິກ/ສະມາຊິກຄະນະກຳມະການຄຸ້ມຄອງບໍລິຫານ
- ທ່ານ ຫຼໍ ສ່ຽວຕົ໋ງ (Mr. Luo Xiaodong) ສະມາຊິກ/ສະມາຊິກຄະນະກຳມະການຄຸ້ມຄອງບໍລິຫານ

4.2.2 ຄະນະກຳມະການກວດສອບ:

- ທ່ານ ຈໍຊົ່ງ ບົວສີເມັ່ງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການກວດສອບ
- ທ່ານ ເຫີ ຈຸນ (Mr. He Jun) ສະມາຊິກ/ສະມາຊິກຄະນະກຳມະການກວດສອບ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການກວດສອບ

4.2.3 ຄະນະກຳມະການຄຸ້ມຄອງຄວາມສ່ຽງ:

- ທ່ານ ວຽງສະຫວັນ ພັນທະລີ ສະມາຊິກອິດສະຫຼະ/ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ
- ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ
- ທ່ານ ບູລະພາ ສັນຕິຄົງຄາ ສະມາຊິກ/ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ

4.2.4 ຄະນະກຳມະການຄັດເລືອກ:

- ທ່ານ ຈໍຊົ່ງ ບົວສີເມັ່ງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການຄັດເລືອກ
- ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການຄັດເລືອກ
- ທ່ານ ບູລະພາ ສັນຕິຄົງຄາ ສະມາຊິກ/ສະມາຊິກຄະນະກຳມະການຄັດເລືອກ

4.2.5 ຄະນະກຳມະການກຳນົດຄ່າຕອບແທນ:

- ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi) ສະມາຊິກອິດສະຫຼະ/ປະທານຄະນະກຳມະການກຳນົດຄ່າຕອບແທນ.
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ.
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ສະມາຊິກ/ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ.

4.2.6 ຄະນະກຳມະການລາຍການທີ່ກ່ຽວພັນ:

- ທ່ານ ຈໍຊົ່ງ ບົວສີເມັ່ງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການລາຍການທີ່ກ່ຽວພັນ

- ທ່ານ ບູລະພາ ສັນຕິຖິງຄາ ສະມາຊິກ/ສະມາຊິກຄະນະກຳມະການລາຍການທີ່ກ່ຽວພັນ

- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການລາຍການທີ່ກ່ຽວພັນ

4.3 ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

4.3.1 ໃນລະດັບຄະນະກຳມະການບໍລິຫານ, ໃນປີ 2025 ໄດ້ຈັດກອງປະຊຸມທັງໝົດ 9 ຄັ້ງ, ແລະ ໄດ້ພິຈາລະນາຮັບຮອງເອົາ 12 ຫົວຂໍ້, ລວມທັງບົດລາຍງານການເຮັດວຽກປະຈຳປີ 2024 ແລະ ບົດລາຍງານການກວດສອບການເງິນ.

4.3.2 ຄະນະກຳມະການສະເໜີຊື່ໄດ້ດຳເນີນການກວດສອບການສະເໜີຊື່ຜູ້ສະໝັກປ່ຽນແປງສະມາຊິກຄະນະກຳມະການບໍລິຫານຊຸດທີ 5 ຕາມລະບຽບການຄຸ້ມຄອງທີ່ກ່ຽວຂ້ອງຂອງຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ແລະ ໄດ ສ້າງຕັ້ງບົດລາຍງານການກວດສອບເພື່ອສະເໜີຕໍ່ຄະນະກຳມະການບໍລິຫານພິຈາລະນາ, ເຊິ່ງໄດ້ສະໜອງຂໍ້ມູນພື້ນຖານໃຫ້ແກ່ການຕັດສິນໃຈຂອງຄະນະກຳມະການບໍລິຫານ.

4.3.3 ຄະນະກຳມະການກວດສອບໄດ້ຈັດກອງປະຊຸມ 4 ຄັ້ງຕາມແຜນການເຮັດວຽກປະຈຳປີ, ເພື່ອກວດສອບລາຍງານການກວດສອບການເງິນປະຈຳປີ 2024, ບົດລາຍງານການເງິນໄຕມາດ 1 ປີ 2025, ບົດລາຍງານການເງິນເຄິ່ງປີ 2025 ແລະ ບົດລາຍງານການເງິນໄຕມາດ 3 ປີ 2025 ຂອງບໍລິສັດ, ເພື່ອຮັບປະກັນຄວາມຖືກຕ້ອງຂອງການເປີດເຜີຍລາຍງານການເງິນຂອງບໍລິສັດ.

4.3.4 ຄະນະກຳມະການການເຮັດທຸລະກຳທີ່ກ່ຽວຂ້ອງຂອງບໍລິສັດໄດ້ຈັດກອງປະຊຸມ 4 ຄັ້ງ, ເພື່ອກວດສອບ 4 ທຸລະກຳທີ່ກ່ຽວຂ້ອງຂອງບໍລິສັດ, ແລະ ໄດ້ສະໜອງຄຳແນະນຳສຳລັບການຕັດສິນໃຈໃນການອະນຸມັດທຸລະກຳທີ່ກ່ຽວຂ້ອງ.

5. ຄວາມຮັບຜິດຊອບໃນສັງຄົມ

5.1 ການມອບພັນທະພາສີອາກອນ

ວຽງຈັນເຊັນເຕີ ໄດ້ປະຕິບັດການຊຳລະອາກອນຢ່າງຖືກຕ້ອງຕາມກົດໝາຍ, ໃນປີ 2025 ໄດ້ມອບອາກອນທັງໝົດ 1.817.381.000,00 ກີບ, ເຊິ່ງມີລາຍລະອຽດຄືດັ່ງລຸ່ມນີ້:

:

ດ/ລ	ລາຍການ	ຈຳນວນເງິນ(ສິບພັນກີບ)	
		ປີ 2025	ປີ 2024
1	ອາກອນກຳໄລ	-	-
2	ອາກອນມູນຄ່າເພີ່ມ	176.882,28	8.370,60
3	ອາກອນລາຍໄດ້	4.855,82	4.275,94
4	ອາກອນອື່ນ	-	-
ລວມ		181.738,10	12.644,54

5.2 ການມີສ່ວນຮ່ວມໃນວຽກງານສັງຄົມ

ວຽງຈັນເຊັນເຕີ ໄດ້ເປັນເຈົ້າການໃນການອຳນວຍສະດວກໃຫ້ແກ່ອົງການຈັດຕັ້ງການກຸສົນ ໂດຍມີການວ່າງຕູ້ບໍລິຈາກ 5 ໜ່ວຍໃນມຸມບັນໃດເລື່ອນ ແລະ ລະບຽງຄົນຍ່າງ ເພື່ອລະດົມທຶນການກຸສົນໃນລາວ, ຈຳນວນເງິນທີ່ລະດົມໄດ້ໃນປີ 2025 ທັງໝົດແມ່ນ 7,772,000,00 ກີບ.





6.ວຽກງານການພົບປະຜູ້ລົງທຶນ

6.1 ໃນວັນທີ 29 ພຶດສະພາ 2025 ວຈຊຕ ໄດ້ເຂົ້າຮ່ວມ ງານພົບປະຜູ້ລົງທຶນ ທີ່ຈັດຂຶ້ນໂດຍຕະຫຼາດຫຼັກຊັບລາວ ຄັ້ງທີ 1, ໃນງານດັ່ງກ່າວ ວຈຊຕໄດ້ເນັ້ນໃສ່ການນຳສະເໜີພາບລວມຂອງບໍລິສັດ, ທຸລະກິດຫຼັກຂອງບໍລິສັດ, ໂຄງປະກອບການຈັດຕັ້ງ, ຍຸດທະສາດການພັດທະນາ ແລະ ແຜນທຸລະກິດປີ 2025, ຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດ ແລະ ຕົວຊີ້ວັດທາງດ້ານການເງິນຕົ້ນຕໍຂອງບໍລິສັດໃນປີ 2024 ແລະອື່ນໆ.

6.2 ໃນວັນທີ 22 ກັນຍາ 2025 ວຈຊຕ ໄດ້ເຂົ້າຮ່ວມ ງານພົບປະຜູ້ລົງທຶນ ທີ່ຈັດຂຶ້ນໂດຍຕະຫຼາດຫຼັກຊັບລາວ ຄັ້ງທີ 2, ໃນ

ງານດັ່ງກ່າວ ອາດຊຕໄດ້ເນັ້ນໃສ່ການນຳສະເໜີພາບລວມຂອງບໍລິສັດ, ທຸລະກິດຫຼັກຂອງບໍລິສັດ, ໂຄງປະກອບການຈັດຕັ້ງ, ຜົນການດຳທຸລະກິດຫົກເດືອນຕົ້ນປີ 2025.

7.ລາຍການທີ່ກ່ຽວພັນ

ໃນປີ 2025 ທີ່ຜ່ານມາໄດ້ດຳເນີນທຸລະກຳລາຍການທີ່ກ່ຽວພັນ 4 ລາຍການເຊັ່ນ:

(1). ວ່າຈ້າງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈາກັດ ເປັນຜູ້ຮັບຜິດຊອບໃນການຊອກຫາລູກຄ້າ ແລະ ບໍລິຫານຊັບສິນຕ່າງໆ.

ເລື່ອງດັ່ງດັ່ງກ່າວ ແມ່ນຢູ່ໃນຂອບເຂດສິດອຳນາດການຕັດສິນໃຈຂອງສະພາບໍລິຫານ, ພາຍຫຼັງທີ່ຄະນະກຳມະການລາຍການທີ່ກ່ຽວພັນຂອງບໍລິສັດໄດ້ພິຈາລະນາຢ່າງລະອຽດແລ້ວ, ໄດ້ນຳສະເໜີຕໍ່ກອງປະຊຸມສະພາບໍລິຫານ ຊຶ່ງໄດ້ພິຈາລະນາ ແລະ ອະນຸມັດໃນວັນທີ 09 ເມສາ 202 , ມະຕິດັ່ງກ່າວ ກໍ່ໄດ້ເປີດເຜີຍໃນເວັບໄຊທ໌ ຂອງຕະຫຼາດຫຼັກຊັບ ລາວ.

(2).ວ່າຈ້າງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ເປັນຜູ້ຄຸ້ມຄອງຊັບສິນ. ເລື່ອງດັ່ງກ່າວຢູ່ໃນຂອບເຂດສິດ ການອະນຸມັດຂອງຂັ້ນສະພາບໍລິຫານ, ພາຍຫຼັງທີ່ຄະນະກຳມະການລາຍການທີ່ກ່ຽວພັນຂອງບໍລິສັດໄດ້ພິຈາລະນາຢ່າງລະອຽດແລ້ວ, ໄດ້ນຳສະເໜີຕໍ່ກອງປະຊຸມສະພາບໍລິຫານ ຊຶ່ງໄດ້ພິຈາລະນາ ແລະ ອະນຸມັດ ໃນວັນທີ 19 ກັນຍາ 2025 ,ມະຕິດັ່ງກ່າວ ກໍ່ໄດ້ເປີດເຜີຍໃນເວັບໄຊທ໌ ຂອງຕະຫຼາດຫຼັກຊັບ ລາວ.

(3). ການຮັບຊື້ຮ້ານຄ້າເຊິ່ງມີເນື້ອທີ່ 54.06 ຕາແມັດ ຂອງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ.

ເລື່ອງດັ່ງກ່າວຢູ່ໃນຂອບເຂດສິດການອະນຸມັດຂອງຂັ້ນສະພາບໍລິຫານ, ພາຍຫຼັງທີ່ຄະນະກຳມະການລາຍການທີ່ກ່ຽວພັນຂອງບໍລິສັດໄດ້ພິຈາລະນາຢ່າງລະອຽດແລ້ວ, ໄດ້ນຳສະເໜີຕໍ່ກອງປະຊຸມສະພາບໍລິຫານ ຊຶ່ງໄດ້ພິຈາລະນາ ແລະ ອະນຸມັດໃນວັນທີ 12 ພະຈິກ 2025 ,ມະຕິດັ່ງກ່າວ ກໍ່ໄດ້ເປີດເຜີຍໃນເວັບໄຊທ໌ ຂອງຕະຫຼາດຫຼັກຊັບ ລາວ.

(4) ການເຊົ່າປ້າຍໂຄສະນາສື່ແຜ່ນຂອງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ, ແລະ ການຄັດເລືອກບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ເປັນຜູ້ສະໜອງການບໍລິການຜະລິດ ແລະ ຕິດຕັ້ງປ້າຍໂຄສະນາ.

ເລື່ອງດັ່ງກ່າວຢູ່ໃນຂອບເຂດສິດການອະນຸມັດຂອງຂັ້ນສະພາບໍລິຫານ, ພາຍຫຼັງທີ່ຄະນະກຳມະການລາຍການທີ່ກ່ຽວ

ພັນຂອງບໍລິສັດໄດ້ພິຈາລະນາຢ່າງລະອຽດແລ້ວ, ໄດ້ນຳສະເໜີຕໍ່ກອງປະຊຸມສະພາບໍລິຫານ ຊຶ່ງໄດ້ພິຈາລະນາ ແລະ ອະນຸມັດໃນວັນທີ 16 ທັນວາ 2025 ,ມະຕິດັ່ງກ່າວ ກໍ່ໄດ້ເປີດເຜີຍໃນເວັບໄຊທ໌ ຂອງຕະຫຼາດຫຼັກຊັບ ລາວ.

8.ນະໂຍບາຍການຈ່າຍເງິນປັນຜົນ

ອີງຕາມ ກົດລະບຽບຂອງບໍລິສັດ ມາດຕາທີ 5:

ກ່ຽວກັບຜົນກຳໄລຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ແມ່ນໝາຍເຖິງກຳໄລສຸດທິຂອງບໍລິສັດຫຼັງຫັກຄ່າໃຊ້ຈ່າຍ, ຄ່າເສື່ອມລາຄາ, ຊຳລະໜີ້ສິນ ແລະ ອາກອນໃຫ້ລັດຖະບານ, ຫຼັງຈາກຫັກເງິນສຳຮອງຕ່າງໆ ທີ່ຕ້ອງໄດ້ຫັກໄວ້ຕາມລະບຽບກົດໝາຍ ແລະ ຂໍ້ບັງຄັບຕາມກົດລະບຽບຂອງບໍລິສັດ, ບໍລິສັດອາດຈະເກັບກຳໄລສຸດທິ ເພື່ອບັນລຸເປົ້າໝາຍໃນອະນາຄົດ ຂອງບໍລິສັດ, ກ່ຽວກັບການແບ່ງປັນຜົນກຳໄລ, ມັນຈຳເປັນຕ້ອງປະຕິບັດງ່ມນີ້:

- ຜູ້ຖືຫຸ້ນໄດ້ຮັບເງິນປັນຜົນທີ່ສອດຄ້ອງ ໂດຍອີງໃສ່ການປະກອບສ່ວນທຶນ ຫຼື ອັດຕາສ່ວນຂອງຮຸ້ນທີ່ຖື;
- ແຜນການແບ່ງປັນຜົນກຳໄລຕ້ອງ ໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຫຸ້ນເສຍກ່ອນ;
- ບໍລິສັດຈະບໍ່ມີການແບ່ງປັນຜົນກຳໄລ ໃນກໍລະນີທີ່ມີການຂາດທຶນຢ່າງຕໍ່ເນື່ອງ.

ຜູ້ອຳນວຍການ/ສະມາຊິກສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

ສາລະບານ	ໜ້າ
ບົດລາຍງານຂອງຜູ້ກວດສອບອິດສະຫຼະ	1 - 4
ໃບລາຍງານຖານະການເງິນ	5 - 6
ໃບລາຍງານຜົນໄດ້ຮັບສັງລວມ	7
ໃບລາຍງານສ່ວນປ່ຽນແປງທຶນ	8
ໃບລາຍງານກະແສເງິນສົດ	9 - 10
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	11 - 25

ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາບໍລິຫານ ຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ບໍລິສັດ) ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ໄດ້ກະກຽມຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍ ຂໍ້ 2 ຂອງເອກະສານລາຍງານການເງິນສະບັບນີ້.

ການກວດສອບຂອງພວກເຮົາ

ເອກະສານລາຍງານການເງິນຂອງບໍລິສັດມີດັ່ງນີ້:

- ໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2025;
- ໃບລາຍງານຜົນໄດ້ຮັບສັງລວມ ສຳລັບທ້າຍປີສິ້ນສຸດວັນທີດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບທ້າຍປີສິ້ນສຸດວັນທີດຽວກັນ;
- ໃບລາຍງານກະແສເງິນສົດ ສຳລັບທ້າຍປີສິ້ນສຸດວັນທີດຽວກັນ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານ ໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບອິດສະຫຼະ ສຳລັບການກວດສອບ ເອກະສານລາຍງານການເງິນ ໃນບົດລາຍງານ ພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມ ຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ IESBA Code.

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານການກະກຽມ

ພວກເຮົາໄດ້ເອົາໃຈໃສ່ໃນບົດອະທິບາຍຊ້ອນທ້າຍຂໍ້ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການບັນຊີຂອງ ບໍລິສັດ. ເອກະສານລາຍງານການເງິນນີ້ໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງບໍລິສັດ ເຊິ່ງອາດມີຄວາມແຕກຕ່າງ ຈາກຫຼັກການບັນຊີ ມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ທັງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມານີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ຫົວຂໍ້ທີ່ສຳຄັນໃນການກວດສອບບັນຊີ

ເລື່ອງສຳຄັນໃນການກວດສອບ ແມ່ນ ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາເຫັນວ່າມີເລື່ອງສຳຄັນໃນການກວດສອບເລື່ອງໜຶ່ງ ເຊັ່ນ: ມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນ. ເລື່ອງດັ່ງກ່າວໄດ້ລວມໃນການກວດສອບເອກະສານລາຍງານການເງິນ ເພື່ອສະແດງຄວາມເຫັນຂອງພວກເຮົາ ແລະ ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ຫົວຂໍ້ທີ່ສຳຄັນໃນການກວດສອບບັນຊີ	ວິທີການຈັດການ ຫົວຂໍ້ທີ່ສຳຄັນໃນການກວດສອບບັນຊີ
ມູນຄ່າຍຸດຕິທຳຂອງ ຊັບສິນເພື່ອການລົງທຶນ ອ້າງອີງບົດອະທິບາຍຊ້ອນທ້າຍ ຂໍ້ 2.5 'ນະໂຍບາຍການບັນຊີ - ຊັບສິນເພື່ອການລົງທຶນ' ແລະ ບົດອະທິບາຍຊ້ອນທ້າຍ ຂໍ້ 5 'ຊັບສິນເພື່ອການລົງທຶນ, ສຸດທິ'. ຊັບສິນເພື່ອການລົງທຶນ ທີ່ບັນທຶກ ໂດຍບໍລິສັດ ມູນຄ່າ 324,424,000,000 ກີບ, ກວມ 94.07% ຂອງຊັບສິນລວມຂອງບໍລິສັດ ທີ່ຄາດຄະເນມູນຄ່າຍຸດຕິທຳໂດຍໃຊ້ວິທີການລາຍຮັບ. ຊັບສິນເພື່ອການລົງທຶນຖືກບັນທຶກດ້ວຍມູນຄ່າຍຸດຕິທຳ ໂດຍອີງໃສ່ການປະເມີນໂດຍຜູ້ປະເມີນພາຍນອກອິດສະຫຼະ. ມີວິທີການປະເມີນມູນຄ່າໃນຫຼາຍຮູບແບບ, ການສົມມຸດຕິຖານທີ່ເປັນສາລະສຳຄັນ ແລະ ການຄາດຄະເນ, ປັດໄຈພາຍນອກທີ່ຈຳເປັນຕ້ອງພິຈາລະນາກຳນົດມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ. ນອກຈາກນັ້ນ, ຍັງຈຳເປັນຕ້ອງໃຊ້ດຸນພິນິດຂອງຜູ້ຊ່ຽວຊານໃນການພິຈາລະນາວ່າການປັບມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນມີຜົນກະທົບຕໍ່ຜົນກຳໄລ ຫຼື ຂາດທຶນສຳລັບປີ ຫຼື ບໍ່ , ແລະ ມີຄວາມສ່ຽງຂອງຄວາມບໍ່ຖືກຕ້ອງຂອງມູນຄ່າຍຸຕິທຳຕາມການຢັ້ງຢືນຄວາມຖືກຕ້ອງດ້ານການປະເມີນ. ພວກເຮົາໃຫ້ຄວາມສຳຄັນກັບຫົວຂໍ້ນີ້ເນື່ອງຈາກວ່າມີລະດັບຄວາມສຳຄັນ ຂອງຊັບສິນເພື່ອການລົງທຶນ, ຄວາມເໝາະສົມ ແລະຄວາມໜ້າເຊື່ອຖືຂອງຂໍ້ມູນແລະສົມມຸດຕິຖານເຊັ່ນ: ລາຄາຕະຫຼາດ, ອັດຕາການຫວ່າງຂອງຫ້ອງເຊົ່າ, ຄາດຄະເນລາຍຮັບ ແລະ ຄ່າໃຊ້ຈ່າຍໃນອະນາຄົດ, ແລະ ອັດຕາສ່ວນຫຼຸດ.	ເຮົາໄດ້ດຳເນີນງານຕາມຂັ້ນຕອນການກວດສອບຊັບສິນເພື່ອການລົງທຶນດັ່ງນີ້: 1. ທຳຄວາມເຂົ້າໃຈຂະບວນການປະເມີນມູນຄ່າ: ກ. ພວກເຮົາປະເມີນຄຸນສົມບັດຂອງຜູ້ປະເມີນພາຍນອກ. ຂ. ວິເຄາະການປະເມີນມູນຄ່າຊັບສິນການລົງທຶນຂອງບໍລິສັດ, ລວມທັງບົດບາດຂອງຜູ້ປະເມີນມູນຄ່າພາຍນອກ, ແລະ ຂັ້ນຕອນການກວດກາພາຍໃນ ແລະ ການອະນຸມັດ. ຄ. ປະເມີນຄຸນສົມບັດ, ຄວາມສາມາດ ແລະ ຈຸດປະສົງຂອງຜູ້ປະເມີນພາຍນອກ. 2. ທົບທວນບົດລາຍງານການປະເມີນມູນຄ່າ: ກ. ກວດກາບົດລາຍງານຂອງຜູ້ປະເມີນມູນຄ່າພາຍນອກ ແລະ ປຶກສາຫາລືກັບຜູ້ປະເມີນມູນຄ່າພາຍນອກ ເພື່ອເຂົ້າໃຈເຫດຜົນຂອງການຕັ້ງສົມມຸດຕິຖານ ແລະ ດຸນພິນິດທີ່ໃຊ້: - ວິໄຈລາຄາຕະຫຼາດຂອງບໍລິສັດພາຍໃນອຸດສາຫະກຳດຽວກັນ. - ອັດຕາການຫວ່າງຂອງຫ້ອງເຊົ່າໂດຍການປຽບທຽບກັບອັດຕາການຫວ່າງຂອງຫ້ອງເຊົ່າສະເລ່ຍໃນອາດີດ. - ຄາດຄະເນກະແສເງິນສົດສຸດທິໃນອະນາຄົດທີ່ໄດ້ຮັບຈາກຊັບສິນເພື່ອການລົງທຶນນີ້ໂດຍສອດຄ່ອງການຄາດຄະເນລາຍຮັບ, ລາຍຈ່າຍ ແລະ ກຳໄລສຸດທິຂອງການລົງທຶນທີ່ຄາດການໄວ້. - ອັດຕາສ່ວນຫຼຸດໂດຍການພິຈາລະນາພື້ນຖານຂອງອັດຕາສ່ວນຫຼຸດ ແລະ ສົມທຽບກັບອັດຕາທີ່ໃຊ້ໂດຍບໍລິສັດພາຍໃນອຸດສາຫະກຳດຽວກັນ. ຂ. ການຄຳນວນມູນຄ່າຊັບສິນເພື່ອການລົງທຶນຄືນໃໝ່ ໂດຍອີງໃສ່ກະແສເງິນສົດໃນອະນາຄົດທີ່ຄາດວ່າຈະໄດ້ຮັບຈາກຊັບສິນເພື່ອການລົງທຶນນີ້ ແລະ ອັດຕາສ່ວນຫຼຸດທີ່ສະທ້ອນເຖິງການປະເມີນຕະຫຼາດໃນປັດຈຸບັນ ແລະ ກວດສອບຄວາມຖືກຕ້ອງຂອງລາຍການບັນຊີ. 3. ມີສ່ວນຮ່ວມກັບຜູ້ຊ່ຽວຊານດ້ານການປະເມີນມູນຄ່າຂອງພວກເຮົາ: ມີສ່ວນຮ່ວມກັບຜູ້ຊ່ຽວຊານດ້ານການປະເມີນມູນຄ່າຂອງພວກເຮົາເພື່ອຊ່ວຍໃນການປະເມີນວິທີການ, ການສົມມຸດຕິຖານ, ຂໍ້ມູນທີ່ໃຊ້ ແລະ ການຄາດຄະເນທີ່ໃຊ້ໃນການປະເມີນມູນຄ່າຂອງຄະນະຜູ້ບໍລິຫານ. 4. ສະຫຼຸບການນຳໃຊ້ວຽກງານຂອງຜູ້ຊ່ຽວຊານ ບັນທຶກການສະຫຼຸບຂອງຜູ້ກວດສອບວ່າວຽກງານຂອງຜູ້ຊ່ຽວຊານໃຫ້ຫຼັກຖານການກວດສອບທີ່ເໝາະສົມພຽງພໍ ຫຼື ບໍ່. ຈາກຂັ້ນຕອນຂ້າງເທິງ, ພວກເຮົາພົບເຫັນວ່າປັດໄຈສຳຄັນໃນການນຳໃຊ້ການຄາດຄະເນການບັນຊີ ແລະ ດຸນພິນິດທີ່ກ່ຽວຂ້ອງກັບການປະເມີນມູນຄ່າຊັບສິນເພື່ອການລົງທຶນແມ່ນຢູ່ໃນຂອບເຂດທີ່ຍອມຮັບຂອງການຄາດຄະເນທີ່ສົມເຫດສົມຜົນ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນໆ. ຂໍ້ມູນອື່ນໆປະກອບດ້ວຍຂໍ້ມູນທີ່ຢູ່ໃນບົດລາຍງານປະຈຳປີ, ແຕ່ບໍ່ໄດ້ລວມຢູ່ໃນເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ມີຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບບົດລາຍງານປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບນີ້.

ຄວາມເຫັນຂອງພວກເຮົາຕໍ່ບົດລາຍງານການເງິນບໍ່ໄດ້ຄອບຄຸມເຖິງຂໍ້ມູນອື່ນໆ ແລະ ພວກເຮົາບໍ່ສະແດງໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ເພື່ອໃຫ້ສອດຄ່ອງກັບການກວດສອບເອກະສານລາຍງານການເງິນ, ຄວາມຮັບຜິດຊອບຂອງພວກເຮົາຄືອ່ານ ແລະ ພິຈາລະນາຂໍ້ມູນອື່ນໆທີ່ມີຄວາມຂັດແຍ່ງຢ່າງເປັນສາລະສຳຄັນຕໍ່ກັບເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ເມື່ອພວກເຮົາອ່ານບົດລາຍງານປະຈຳປີ, ຖ້າຫາກພວກເຮົາສະຫຼຸບໄດ້ວ່າມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນ, ພວກເຮົາຈະຕ້ອງແຈ້ງເລື່ອງດັ່ງກ່າວໃຫ້ຄະນະກຳມະການກວດສອບຮັບຮູ້.

ຄວາມຮັບຜິດຊອບຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍ ຂໍ້ 2 ຂອງເອກະສານລາຍງານການເງິນນີ້, ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການ ການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມບົດລາຍງານການເງິນ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ. ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາ ອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ພວກເຮົາໄດ້ຮັບຈາກການກວດສອບພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານສຳລັບການສະແດງຄວາມເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີຜົນໃຈໃຫ້ເກີດຂໍ້ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນ ເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບບັນຫາອື່ນໆ ຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

ຈາກບັນຫາທີ່ປຶກສາກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາບັນຫາເຫຼົ່ານັ້ນແມ່ນບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ, ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ Pricewaterhouse Coopers (Lao) Sole Company Limited

ໂດຍ: ທ່ານ ອະພິສິດ ທ່ຽງຕິງພິນໂຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2026

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	7,558,247,285	2,895,334,895
ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ, ສຸດທິ	4	12,623,318,902	12,491,238,900
ຊັບສິນໝຸນວຽນອື່ນໆ		255,196,782	171,401,930
ລວມຊັບສິນໝຸນວຽນ		**20,436,762,969**	**15,557,975,725**
ຊັບສິນບໍ່ໝຸນວຽນ			
ຊັບສິນເພື່ອການລົງທຶນ, ສຸດທິ	5	324,424,000,000	320,496,520,000
ຊັບສິນບັດຄົງທີ່ມີຕົວຕົນ, ສຸດທິ	6	22,969,703	91,971,874
ຊັບສິນບັດຄົງທີ່ບໍ່ມີຕົວຕົນ, ສຸດທິ	7	-	20,336,250
ລວມຊັບສິນບໍ່ໝຸນວຽນ		**324,446,969,703**	**320,608,828,124**
ລວມຊັບສິນ		**344,883,732,672**	**336,166,803,849**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

31 ມີນາ 2026

ທ່ານ ຫວັງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

31 ມີນາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 11 ເຖິງ 25 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ	8	13,427,872,040	16,477,552,875
ລວມໜີ້ສິນໝຸນວຽນ		**13,427,872,040**	**16,477,552,875**
ໜີ້ສິນບໍ່ໝຸນວຽນ			
ອາກອນໜີ້ສິນເຍື່ອນຊຳລະ	16.2	39,637,855,471	36,807,966,154
ລວມໜີ້ສິນບໍ່ໝຸນວຽນ		**39,637,855,471**	**36,807,966,154**
ລວມໜີ້ສິນ		**53,065,727,511**	**53,285,519,029**
ທຶນ			
ທຶນຈົດທະບຽນ	9	147,199,900,000	147,199,900,000
ສ່ວນເພີ່ມມູນຄ່າຮຸ້ນ		2,559,995,000	2,559,995,000.00
ຄັງແຮຕາມລະບຽບການ	10	7,163,503,055	6,196,231,071
ຄັງແຮເພື່ອຂະຫຍາຍທຸລະກິດ	11	7,163,503,055	6,196,231,071
ກຳໄລສະສົມ		127,731,104,051	120,728,927,678
ລວມທຶນ		**291,818,005,161**	**282,881,284,820**
ລວມໜີ້ສິນ ແລະ ທຶນ		**344,883,732,672**	**336,166,803,849**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

31 ມີນາ 2026

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

31 ມີນາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 11 ເຖິງ 25 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບສັງລວມ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ລາຍຮັບ	13	22,573,304,813	20,528,053,688
ລາຍຮັບອື່ນໆຈາກການດຳເນີນງານ	14	798,115,638	2,470,604,799
ກຳໄລເບື້ອງຕົ້ນ		**23,371,420,451**	**22,998,658,487**
ລາຍຈ່າຍຈາກການດຳເນີນງານ	15	(14,578,970,948)	(11,668,774,760)
ກຳໄລຈາກການຂາຍຊັບສິນເພື່ອການລົງທຶນ	5	2,919,809,874	-
ກຳໄລຈາກການປະເມີນມູນຄ່າຊັບສິນເພື່ອການລົງທຶນ	5	406,417,324	12,570,108,200
ກຳໄລຈາກການດຳເນີນງານ		**12,118,676,701**	**23,899,991,927**
ກຳໄລ (ຂາດທຶນ) ຈາກອັດຕາແລກປ່ຽນ, ສຸດທິ		383,932,457	(106,100,620)
ກຳໄລສຸດທິ ກ່ອນຫັກອາກອນກຳໄລ		**12,502,609,158**	23,793,891,307
ລ່າຍຈ່າຍອາກອນກຳໄລ	16.2	(2,829,889,317)	(4,538,525,316)
ກຳໄລສຸດທິໃນປີ		**9,672,719,841**	**19,255,365,991**
ລາຍຮັບ(ລາຍຈ່າຍ)ສັງລວມອື່ນໆໃນປີ ຫັກອາກອນ		-	-
ລວມລາຍຮັບ(ລາຍຈ່າຍ)ສັງລວມອື່ນໆໃນປີ ຫັກ ອາກອນ		**9,672,719,841**	**19,255,365,991**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	17	65.71	130.81

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

31 ມີນາ 2026

ທ່ານ ຫວ້ັງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

31 ມີນາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 11 ເຖິງ 25 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

	ບິດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ຄັງແຮຕາມ ລະບຽບການ (ບິດອະທິບາຍ 10) ກີບ	ຄັງແຮເພື່ອ ຂະຫຍາຍທຸລະກິດ (ບິດອະທິບາຍ 11) ກີບ	ກຳໄລສະສົມ ກີບ	ລວມ ກີບ
ຍອດເຫຼືອໃນວັນທີ 1 ມັງກອນ 2024		**147,199,900,000**	**2,559,995,000**	**4,270,694,472**	**4,270,694,472**	**106,060,634,385**	**264,361,918,329**
ໂອນເຂົ້າຄັງແຮ		-	-	1,925,536,599	1,925,536,599	(3,851,073,198)	-
ຈ່າຍເງິນປັນຜົນ	12	-	-	-	-	(735,999,500)	(735,999,500)
ກຳໄລສຸດທິໃນປີ		-	-	-	-	19,255,365,991	19,255,365,991
ຍອດເຫຼືອໃນວັນທີ 31 ທັນວາ 2024		**147,199,900,000**	**2,559,995,000**	**6,196,231,071**	**6,196,231,071**	**120,728,927,678**	**282,881,284,820**
ຍອດເຫຼືອໃນວັນທີ 1 ມັງກອນ 2025		**147,199,900,000**	**2,559,995,000**	**6,196,231,071**	**6,196,231,071**	**120,728,927,678**	**282,881,284,820**
ໂອນເຂົ້າຄັງແຮ		-	-	967,271,984	967,271,984	(1,934,543,968)	-
ຈ່າຍເງິນປັນຜົນ	12	-	-	-	-	(735,999,500)	(735,999,500)
ກຳໄລສຸດທິໃນປີ		-	-	-	-	9,672,719,841	9,672,719,841
ຍອດເຫຼືອໃນວັນທີ 31 ທັນວາ 2025		**147,199,900,000**	**2,559,995,000**	**7,163,503,055**	**7,163,503,055**	**127,731,104,051**	**291,818,005,161**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

31 ມີນາ 2026

ທ່ານ ຫວ້ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

31 ມີນາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 11 ເຖິງ 25 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

	ບົດ ອະທິບາຍ	2025 ກີບ	2024 ກີບ
ກະແສເງິນສົດຈາກການດຳເນີນງານ:			
ກຳໄລກ່ອນຫັກອາກອນໃນປີ		12,502,609,158	23,793,891,307
ປັບປຸງເພື່ອສົມທຽບກຳໄລສຸດທິກັບເງິນສົດສຸດທິ:			
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	6,7	89,338,421	97,141,103
ກຳໄລຈາກການປະເມີນມູນຄ່າຊັບສິນການລົງທຶນ	5	(406,417,324)	(12,570,108,200)
ກຳໄລຈາກການຂາຍຊັບສິນ		(2,919,809,865)	-
ລາຍຮັບດອກເບ້ຍ		(16,119,892)	(9,498,680)
ກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		(160,645,452)	(303,841,187)
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງເງິນ ທຶນໝຸນວຽນ		**9,088,955,046**	**11,007,584,343**
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ		(4,826,372,262)	(6,110,898,618)
ຊັບສິນໝຸນວຽນອື່ນໆ		(83,794,852)	(162,942,589)
ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ		(3,048,131,669)	(83,354,076)
ກະແສເງິນສົດທີ່ເກີດຈາກ ການດຳເນີນງານ		**1,130,656,263**	**4,650,389,060**
ດອກເບ້ຍທີ່ໄດ້ຮັບ		16,119,892	9,498,680
ກະແສເງິນສົດສຸດທິ ທີ່ເກີດຈາກ ກິດຈະກຳການ ດຳເນີນງານ		**1,146,776,155**	**4,659,887,740**
ກະແສເງິນສົດຈາກກິດຈະກຳການລົງທຶນ:			
ການໄດ້ມາຂອງຊັບສິນເພື່ອການລົງທຶນ	5	(140,160,000)	(3,771,931,800)
ກະແສເງິນສົດຈາກການຈຳໜ່າຍ		4,408,076,631	-
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳລົງທຶນ		**4,267,916,631**	**(3,771,931,800)**
ກະແສເງິນສົດຈາກ ກິດຈະກຳການເງິນ:			
ຈ່າຍເງິນປັນຜົນ	12	(735,999,500)	(735,999,500)
ເງິນສົດສຸດທິໃຊ້ໃນກິດຈະກຳທາງການເງິນ		**(735,999,500)**	**(735,999,500)**

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 11 ເຖິງ 25 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

	ບົດອະທິບາຍ	2025 ກີບ	2024 ກີບ
ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບ ເທົ່າເງິນສົດ		**4,678,693,286**	**151,956,440**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	3	2,895,334,895	2,632,929,235
(ຂາດທຶນ) ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(15,780,896)	110,449,220
ເງິນສົດ ແລະ ລາຍການທຽບເທົ່າເງິນສົດສຳລັບທ້າຍປີ		**7,558,247,285**	**2,895,334,895**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

31 ມີນາ 2026

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

31 ມີນາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 11 ເຖິງ 25 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

1. ຂໍ້ມູນທົ່ວໄປ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ເປັນບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງໄດ້ດຳເນີນງານ ແລະ ຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈັດຕັ້ງ ແລະ ຈົດທະບຽນພາຍໃຕ້ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ, ລົງວັນທີ 30 ພະຈິກ 2017 ແລະ ໄດ້ມີການຕໍ່ໃບທະບຽນວິສາຫະກິດສະບັບໃໝ່, ລົງວັນທີ 26 ພຶດສະພາ 2022.

ບໍລິສັດຢູ່ພາຍໃຕ້ການຄຸ້ມຄອງຂອງ ບໍລິສັດ ໜອງຈັນ ຄອມເພັກ ດີເວລລອບເມັນ ຈຳກັດ ("NNCD") ເຊິ່ງເປັນບໍລິສັດແມ່ ໂດຍຖືຫຸ້ນໃນບໍລິສັດໃນອັດຕາສ່ວນ 65.22% ໃນຂະນະທີ່ຫຸ້ນທີ່ເຫຼືອອີກ 34.78% ເປັນຫຸ້ນທີ່ມີການຖືຄອງຢ່າງແຜ່ຫຼາຍ.

ໃນວັນທີ 30 ພະຈິກ 2017, NNCD ໄດ້ໂອນສິດການເຊົ່າຂອງອາຄານ ວຽງຈັນ ເຊັ້ນເຕີ ຊຶ່ງມີເນື້ອທີ່ລວມ 5,908 ຕາແມັດ ໃຫ້ແກ່ບໍລິສັດ ເພື່ອນຳໃຊ້ໃນການພັດທະນາ ແລະ ບໍລິຫານຈັດການເປັນສູນການຄ້າ ແລະ ພື້ນທີ່ຫ້ອງການໃຫ້ເຊົ່າ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ເອກະສານລາຍງານການເງິນທີ່ບທອນຄືນ ສະບັບນີ້ໄດ້ຜ່ານການອະນຸມັດ ໂດຍຄະນະຜູ້ອຳນວຍການ ໃນວັນທີ 31 ມີນາ 2026.

2. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນ ມີດັ່ງລຸ່ມນີ້:

2.1. ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນນະໂຍບາຍການບັນຊີ ຂອງບໍລິສັດ ດັ່ງທີ່ອະທິບາຍໄວ້ຂ້າງລຸ່ມນີ້ ແລະ ໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ, ຍົກເວັ້ນຊັບສິນການລົງທຶນທີ່ວັດແທກມູນຄ່າຍຸດຕິທຳ.

ກົດໝາຍການບັນຊີ ສະບັບເລກທີ 47/ສພ ລົງວັນທີ 26 ທັນວາ 2013, ວິສາຫະກິດຮັບໃຊ້ຜົນປະໂຫຍດສາທາລະນະ (PIE) ແມ່ນຕ້ອງໄດ້ກະກຽມເອກະສານລາຍງານການເງິນຂອງຕົນຕາມມາດຕະຖານລາຍການເງິນສາກົນ (IFRS). ເຖິງຢ່າງໃດກໍຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກຊ ລົງ
ວັນທີ 27 ເມສາ 2020 ແລະ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ລົງວັນທີ 25 ພຶດສະພາ 2020 ເຊິ່ງເປັນທາງເລືອກໃຫ້ວິສາຫະກິດຮັບໃຊ້ຜົນປະໂຫຍດສາທາລະນະ ກະກຽມແຜນປະຕິບັດງານການນຳໃຊ້ IFRS ໄປຈົນເຖິງ ວັນທີ 31 ທັນວາ 2025 ແລະ 1 ມັງກອນ 2026 ເປັນຕົ້ນໄປ, ທຸກໆບໍລິສັດທີ່ຈົດທະບຽນຈຳຕ້ອງນຳໃຊ້ມາດຕະຖານລາຍງານການເງິນສາກົນຢ່າງສົມບູນ.

ຜູ້ບໍລິຫານ ແມ່ນກຳລັງກະກຽມປະຕິບັດງານການນຳໃຊ້ມາດຕະຖານລາຍງານການເງິນສາກົນຕາມການແຈ້ງການ. ດັ່ງນັ້ນ, ຫຼັກການບັນຊີທີ່ໃຊ້ອາດຈະແຕກຕ່າງຈາກມາດຕະຖານລາຍການເງິນສາກົນ.

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍຜູ້ບໍລິຫານ ຕ້ອງມີການຄາດຄະເນ ແລະ ວາງຂໍ້ສົມມຸດຖານຫຼາຍປະການ ທີ່ມີຜົນກະທົບຕໍ່ ຈຳນວນທີ່ລາຍງານເປັນ ຊັບສິນ ແລະ ໜີ້ສິນ, ການເປີດເຜີຍຊັບສິນ ແລະ ໜີ້ສິນອາດເກີດຂຶ້ນໃນວັນທີ ຂອງເອກະສານລາຍງານການເງິນ ແລະ ຈຳນວນລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ. ເຖິງ ແມ່ນວ່າ ການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການປະຕິບັດໃນປັດຈຸບັນ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.2. ການແລກປ່ຽນເງິນຕາຕ່າງປະເທດ

ລາຍການທີ່ຢູ່ໃນບົດລາຍງານການເງິນໄດ້ຖືກວັດດ້ວຍສະກຸນເງິນກີບ.

ລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດຈະຖືກປ່ຽນເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ມີການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດຈະຖືກປ່ຽນຄ່າເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນມື້ປິດບັນຊີ. ຜົນຕ່າງຈາກລາຍການຊຳລະເງິນຕາຕ່າງປະເທດ ແລະ ການປ່ຽນຄ່າຊັບສິນ ແລະ ໜີ້ສິນທາງການເງິນ ໃນອັນທີຂອງໃບລາຍງານຖານະການເງິນແມ່ນຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບສັງລວມ.

2.3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍ: ເງິນສົດໃນມື, ເງິນຝາກຢູ່ໃນທະນາຄານທີ່ຖອນຄືນໄດ້ໃນເວລາທີ່ຕ້ອງການ, ເງິນລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ມີອາຍຸສາມເດືອນ ຫຼື ໜ້ອຍກວ່າ ນັບແຕ່ທີ່ໄດ້ມາ.

2.4. ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ

ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາ ແມ່ນນຳມູນຄ່າທີ່ຍັງເຫຼືອຫັກລົບສຳຮອງໜີ້ສົງໄສຈະສູນ ໂດຍອີງຕາມການທົບທວນຄືນມູນຄ່າຄ້າງຊຳລະໃນທ້າຍປີ. ຈຳນວນເງິນທີ່ຫັກຂອງໜີ້ສົງໄສຈະສູນ ແມ່ນສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງໜີ້ຕ້ອງຮັບ ແລະ ມູນຄ່າທີ່ຄາດວ່າຈະເກັບຄືນໄດ້. ໜີ້ສູນຈະຖືກສະສາງໃນປີເຊິ່ງລະບຸໃນກຳໄລ ຫຼື ຂາດທຶນພາຍໃຕ້ລາຍຈ່າຍບໍລິຫານ.

ບໍ່ມີການສຳຮອງບັນຊີໜີ້ສົງໄສຈະເສຍ ຍອດທີ່ຄົງເຫຼືອຂອງໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ຂໍ້ 19)

2.5. ຊັບສິນເພື່ອການລົງທຶນ

ຊັບສິນເພື່ອການລົງທຶນປະກອບດ້ວຍ ອາຄານສຳນັກງານທີ່ຖືຄອງ, ຊັບສິນທີ່ມີສິດນຳໃຊ້ຖືກຮັບຮູ້ສຳລັບອາຄານສຳນັກງານພາຍໃຕ້ສັນຍາການໃຫ້ເຊົ່າ, ແມ່ນຖືຄອງເພື່ອຜົນຕອບແທນຈາກການເຊົ່າໃນໄລຍະຍາວ ຫຼື ເພື່ອການເພີ່ມມູນຄ່າທຶນ ຫຼື ທັງສອງ - ອີງຕາມຄວາມເໝາະສົມ ແລະ ບໍ່ໄດ້ຖືກຄອບຄອງໂດຍບໍລິສັດ.

ຊັບສິນທີ່ຊື້ເພີ່ມທີ່ກ່ຽວຂ້ອງໂດຍກົງກັບຊັບສິນລົງທຶນຈະຖືກບັນທຶກເປັນສ່ວນໜຶ່ງຂອງຊັບສິນລົງທຶນ.

ຊັບສິນເພື່ອການລົງທຶນແມ່ນວັດແທກເບື້ອງຕົ້ນດ້ວຍຕົ້ນທຶນ, ລວມທັງຕົ້ນທຶນໂດຍກົງ ແລະ ຄ່າໃຊ້ຈ່າຍໃນການກູ້ຢືມ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງແມ່ນ ຈະຖືກລວມເຂົ້າໄປໃນມູນຄ່າຕາມບັນຊີຂອງຊັບສິນ ເມື່ອມີຄວາມເປັນໄປໄດ້ ວ່າຈະເກີດຜົນປະໂຫຍດທາງເສດຖະກິດໃນອະນາຄົດເຂົ້າສູ່ບໍລິສັດ ແລະ ຕົ້ນທຶນຂອງລາຍການ ສາມາດວັດແທກໄດ້. ຄ່າສ້ອມແປງ ແລະ ບຳລຸງຮັກສາອື່ນໆທັງໝົດ ຈະຖືກບັນທຶກເປັນຄ່າໃຊ້ຈ່າຍເມື່ອເກີດຂຶ້ນ. ເມື່ອມີການປ່ຽນແປງສ່ວນປະກອບຂອງຊັບສິນການລົງທຶນ ສ່ວນປະກອບນັ້ນ ຈະຖືກລ້າງມູນຄ່າອອກຈາກບັນຊີ. ຫຼັງຈາກນັ້ນ, ຊັບສິນເພື່ອການລົງທຶນໄດ້ຖືກບັນທຶກດ້ວຍມູນຄ່າຍຸດຕິທຳ ສ່ວນຕ່າງໃນການການປ່ຽນແປງມູນຄ່າຍຸດຕິທຳແມ່ນສະແດງຢູ່ໃນກຳໄລ ຫຼື ຂາດທຶນ.

ຊັບສິນເພື່ອການລົງທຶນຈະຖືກຕັດອອກຈາກການຮັບຮູ້ ເມື່ອມີການຈຳໜ່າຍ ຫຼື ເມື່ອມີການຢຸດນຳໃຊ້ຢ່າງຖາວອນ ແລະ ຄາດວ່າຈະບໍ່ໄດ້ຮັບປະໂຫຍດທາງເສດຖະກິດໃນອະນາຄົດຈາກການຈຳໜ່າຍດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການຕັດອອກຊັບສິນເພື່ອການລົງທຶນຈະຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6. ຊັບສິນຄົງທີ່ມີຕົວຕົນ

ທີ່ດິນ, ອາຄານ ແລະ ອຸປະກອນ ໄດ້ຖືກບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມຫັກດ້ວຍຄ່າຫຼ້ຍຫ້ຽນສະສົມ ແລະ ຂາດທຶນຈາກການດ້ອຍຄ່າ. ມູນຄ່າຕົ້ນທຶນເດີມປະກອບມີ ລາຍຈ່າຍທາງກົງ ຂອງການໄດ້ມາຂອງລາຍການຊັບສິນນັ້ນ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງຈາກການໄດ້ຈະຖືກບັນທຶກຂອງຊັບສິນ, ເມື່ອມີຄວາມເປັນໄປໄດ້ວ່າເກີດປະໂຫຍດທາງເສດຖະກິດໃນອະນາຄົດເກີນກ່ວາການປະເມີນຜົນການດຳເນີນງານທີ່ມີຢູ່ຂອງຊັບສິນ ເຂົ້າສູ່ບໍລິສັດ. ເມື່ອມີການປ່ຽນແປງສ່ວນປະກອບຂອງຊັບສິນ ສ່ວນປະກອບນັ້ນ ຈະຖືກລ້າງມູນຄ່າອອກຈາກບັນຊີ.

ບໍລິສັດຈະຮັບຮູ້ການສ້ອມແປງ ແລະ ບຳລຸງຮັກສາອື່ນໆ ໃນຜົນກຳໄລ ຫຼື ຂາດທຶນເມື່ອເກີດຂຶ້ນ.

ທີ່ດິນແມ່ນບໍ່ມີການຫັກຄ່າຫຼ້ຍຫ້ຽນ. ຄ່າຫຼ້ຍຫ້ຽນໃນຊັບສິນອື່ນໆ ແມ່ນຄຳນວນໂດຍໃຊ້ວິທີເສັ້ນຊື່ເພື່ອຈັດສັນຕົ້ນທຶນໃຫ້ກັບມູນຄ່າຊາກຕະຫຼອດອາຍຸການໃຊ້ງານຄາດຄະເນຂອງແຕ່ລະລາຍການຊັບສິນ ດັ່ງຕໍ່ໄປນີ້ນີ້:

ເຄື່ອງໃຊ້ສຳນັກງານ	5	ປີ
ພາຫະນະ	5	ປີ

ຜົນກຳໄລ ຫຼື ຂາດທຶນຈາກການຂາຍຊັບສິນຄົງທີ່ໄດ້ຖືກກຳນົດໂດຍການສົມທຽບເງິນທີ່ໄດ້ມາກັບຍອດມູນຄ່າຕາມບັນຊີ ແລະ ຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

2.7. ຊັບສິນຄົງທີ່ບໍ່ມີຕົວຕົນ

ການຊື້ລິຂະສິດໃນການນຳໃຊ້ໂປຣແກຣມຄອມພິວເຕີແມ່ນອັດແທກຕາມລາຄາຕົ້ນທຶນ. ຕົ້ນທຶນເຫຼົ່ານີ້ແມ່ນຖືກຕັດຈ່າຍຕະຫຼອດອາຍຸການໃຊ້ງານໂດຍປະມານບໍ່ເກີນຫ້າປີ.

ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການບຳລຸງຮັກສາຊອບແວຄອມພິວເຕີຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍເມື່ອເກີດຂຶ້ນ.

2.8. ສັນຍາເຊົ່າ - ບໍລິສັດເປັນຜູ້ໃຫ້ເຊົ່າ

ຊັບສິນທີ່ໃຫ້ເຊົ່າ ພາຍໃຕ້ສັນຍາເຊົ່າສັນຍາເຊົ່າທາງການເງິນ ມູນຄ່າປັດຈຸບັນຂອງການຊຳລະຄ່າເຊົ່າແມ່ນຖືກຮັບຮູ້ເປັນໜີ້ຕ້ອງຮັບ. ສ່ວນຕ່າງລະຫວ່າງໜີ້ຕ້ອງຮັບທັງໝົດ ແລະ ມູນຄ່າປັດຈຸບັນຂອງໜີ້ຕ້ອງຮັບຖືກຮັບຮູ້ລາຍໄດ້ທາງການເງິນທີ່ຍັງບໍ່ເກີດຂຶ້ນ. ລາຍໄດ້ຈາກການເຊົ່າແມ່ນຖືກຮັບຮູ້ຕະຫຼອດໄລຍະຂອງສັນຍາເຊົ່າໂດຍໃຊ້ວິທີການລົງທຶນສຸດທິ, ເຊິ່ງສະທ້ອນໃຫ້ເຫັນເຖິງອັດຕາຜົນຕອບແທນແຕ່ລະໄລຍະທີ່ຄົງທີ່.

ຊັບສິນທີ່ໃຫ້ເຊົ່າພາຍໃຕ້ສັນຍາເຊົ່າໃນດຳເນີນງານ ແມ່ນຖືກຮັບຮູ້ເປັນຊັບສິນທີ່ມີຕົວຕົນໃນໃບລາຍງານຖານະການເງິນ. ພວກມັນຖືກຫັກຄ່າຫຼ້ຍຫ້ຽນຕະຫຼອດອາຍຸການໃຊ້ງານທີ່ຄາດຄະເນໄວ້ບົນພື້ນຖານທີ່ສອດຄ່ອງກັບຊັບສິນທີ່ມີຕົວຕົນອື່ນໆທີ່ຄ້າຍຄືກັນທີ່ບໍລິສັດເປັນເຈົ້າຂອງ. ລາຍຮັບຄ່າເຊົ່າ (ລົບ ທຸກລາຍການທີ່ໄດ້ຮັບຈາກໃຫ້ຜູ້ເຊົ່າ) ແມ່ນຖືກຮັບຮູ້ແບບເສັ້ນຊື່ຕາມອາຍຸການຂອງສັນຍາເຊົ່າ.

2.9. ທຶນຈົດທະບຽນ

ຮຸ້ນສາມັນ ແລະ ຮຸ້ນບຸລິມະສິດແບບໄຖ່ຖອນຄືນບໍ່ໄດ້ ແຕ່ມີສິດໄດ້ຮັບເງິນປັນຜົນຈະຖືກຈັດປະເພດເປັນທຶນ.

ສ່ວນເພີ່ມມູນຄ່າຮຸ້ນແມ່ນສ່ວນຕ່າງລະຫວ່າງລາຄາສະເໜີຂາຍຂອງການອອກຈຳໜ່າຍຮຸ້ນເພີ່ມ ແລະ ມູນຄ່າຮຸ້ນ. ຕົ້ນທຶນຂອງການອອກຈຳໜ່າຍຮຸ້ນ (ເຊັ່ນ ຄ່າທຳນຽມການຄ້ຳປະກັນການຈຳໜ່າຍຮຸ້ນ ແລະ ຄ່າໃຊ້ຈ່າຍໃນການປະເມີນ ຫຼື ທີ່ປຶກສາທີ່ກ່ຽວຂ້ອງ) ຖືກຮັບຮູ້ເປັນລາຍຈ່າຍໃນແຕ່ລະໄລຍະ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.10. ອາກອນກຳໄລ ແລະ ອາກອນເຍື້ອນຊຳລະ

ລາຍຈ່າຍອາກອນປະຈຳປີປະກອບດ້ວຍອາກອນກຳໄລ ແລະ ອາກອນເຍື້ອນຊຳລະ. ອາກອນແມ່ນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ, ຍົກເວັ້ນໃນຂອບເຂດທີ່ກ່ຽວຂ້ອງກັບລາຍການທີ່ຮັບຮູ້ໃນລາຍໄດ້ສັງລວມອື່ນໆ ຫຼື ໂດຍກົງໃນທຶນ.

ອາກອນກຳໄລ

ອາກອນກຳໄລແມ່ນຖືກຄຳນວນບົນພື້ນຖານຂອງກົດໝາຍວ່າດ້ວຍອາກອນທີ່ໄດ້ປະກາດໃຊ້ ຫຼື ຖືກບັງຄັບໃຊ້ຢ່າງຫຼວງຫຼາຍໃນມື້ສິ້ນສຸດຂອງບົດລາຍງານ. ຜູ້ບໍລິຫານຈະປະເມີນຕຳແໜ່ງທີ່ລະບຸໃນແຈ້ງອາກອນເປັນໄລຍະກ່ຽວກັບສະຖານະການທີ່ລະບຽບການອາກອນທີ່ໃຊ້ບັງຄັບສາມາດຕີຄວາມໄດ້. ການຕັ້ງສຳຮອງຕາມຄວາມເໝາະສົມໂດຍອ້າງອີງຈາກຈຳນວນເງິນທີ່ຄາດວ່າຈະຈ່າຍໃຫ້ກັບເຈົ້າໜ້າທີ່ອາກອນ.

ອາກອນເຍື້ອນຊຳລະ

ລາຍຮັບອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ໃນຄວາມແຕກຕ່າງຊົ່ວຄາວທີ່ເກີດຈາກຄວາມແຕກຕ່າງລະຫວ່າງຖານພາສີຂອງຊັບສິນ ແລະ ໜີ້ສິນ ແລະ ຍອດເງິນຕາມບັນຊີໃນລາຍງານການເງິນ.

ລາຍຮັບອາກອນເຍື້ອນຊຳລະແມ່ນວັດແທກໂດຍໃຊ້ອັດຕາພາສີຂອງໄລຍະເວລາທີ່ຄວາມແຕກຕ່າງຊົ່ວຄາວຄາດວ່າຈະໄດ້ໃຊ້ໃນອະນາຄົດ, ໂດຍອີງໃສ່ອັດຕາພາສີ ແລະ ກົດໝາຍທີ່ໄດ້ຮັບການປະກາດໃຊ້ ຫຼື ຖືກບັງຄັບໃຊ້ຢ່າງຫຼວງຫຼາຍໃນມື້ສິ້ນສຸດຂອງບົດລາຍງານ.

ອາກອນຊັບສິນເຍື້ອນຊຳລະຖືກຮັບຮູ້ ໃນກໍລະນີທີ່ມີຄວາມເປັນໄປໄດ້ວ່າຜົນກຳໄລທີ່ຕ້ອງເສຍພາສີໃນອະນາຄົດຈະມີພຽງພໍທີ່ຈະນຳມາຫັກລົບກັບຄວາມແຕກຕ່າງຊົ່ວຄາວໄດ້.

ອາກອນຊັບສິນເຍື້ອນຊຳລະ ແລະ ອາກອນໜີ້ສິນເຍື້ອນຊຳລະແມ່ນສາມາດຫັກລົບກັນໄດ້ເມື່ອມີສິດຕາມກົດໝາຍທີ່ບັງຄັບໃຊ້ໃນການຫັກລົບຊັບສິນ ແລະ ໜີ້ສິນອາກອນປັດຈຸບັນ ແລະ ເມື່ອຍອດຄົງເຫຼືອອາກອນເຍື້ອນຊຳລະທີ່ກ່ຽວຂ້ອງກັບອຳນາດການເກັບພາສີດຽວກັນ. ຊັບສິນ ແລະ ໜີ້ສິນອາກອນປັດຈຸບັນແມ່ນຖືກຫັກລົບກັນໄດ້ເມື່ອນິຕິບຸກຄົນມີສິດຕາມກົດໝາຍທີ່ບັງຄັບໃຊ້ໃນການຫັກລົບ ແລະ ເຈດຕະນາທີ່ຈະຊຳລະບົນພື້ນຖານສຸດທິ, ຫຼື ຮັບຮູ້ຊັບສິນ ແລະ ຊຳລະໜີ້ສິນໄປພ້ອມໆກັນ.

2.11. ການຮັບຮູ້ລາຍຮັບ

ບໍລິສັດຮັບຮູ້ລາຍຮັບຈາກສັນຍາການໃຫ້ບໍລິການທີ່ມີການໃຫ້ບໍລິການຢ່າງຕໍ່ເນື່ອງບົນພື້ນຖານວິທີເສັ້ນຊື່ຕະຫຼອດອາຍຸສັນຍາ, ໂດຍບໍ່ຄຳນຶງເຖິງຮູບແບບການຊຳລະເງິນ.

ລາຍຮັບຈະຖືກບັນທຶກຫຼັງຫັກອາກອນມູນຄ່າເພີ່ມ, ເງິນຄືນ ແລະສ່ວນຫຼຸດ.

ລາຍຮັບຈາກການໃຫ້ເຊົ່າ

- ລາຍຮັບຄ່າເຊົ່າຈາກສູນການຄ້າ ແລະ ຫ້ອງການໃຫ້ເຊົ່າແມ່ນສັນຍາເຊົ່າໃນດຳເນີນງານໃນຊັບສິນເພື່ອການລົງທຶນແມ່ນຄິດໄລ່ເປັນເສັ້ນຊື່ຕາມເງື່ອນໄຂຂອງສັນຍາເຊົ່າ ແລະ ລວມຢູ່ໃນລາຍຮັບໃນໃບລາຍງານລາຍຮັບສັງລວມ. ລາຍຮັບຄ່າເຊົ່າທີ່ໄດ້ຮັບລ່ວງໜ້າຈະຖືກບັນທຶກເປັນລາຍຮັບທີ່ລໍຖ້າຈະຕັດບັນຊີ ຈາກນັ້ນຖືກຮັບຮູ້ເປັນລາຍຮັບບົນພື້ນຖານເສັ້ນຊື່ຕະຫຼອດອາຍຸສັນຍາເຊົ່າ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.11 ການຮັບຮູ້ລາຍຮັບ (ຕໍ່)

- ສັນຍາການຮ່ວມມືທາງທຸລະກິດ (BCC)

ບໍລິສັດໄດ້ເຊັ້ນສັນຍາໃນການຮ່ວມມືທຸລະກິດ ເຊິ່ງໃນນັ້ນລາຍຮັບຈາກການດຳເນີນງານຂອງໂຮງໜັງ ທີ່ຖືກກຳນົດໃນອັດຕາ ຄົງທີ່ໄວ້ໃນສັນຍາດັ່ງກ່າວ ຄູ່ຮ່ວມທຸລະກິດເຊິ່ງເປັນຜູ້ເຊົ່າ ຕ້ອງແບ່ງລາຍຮັບຈາກລາຍໄດ້ຂອງໂຮງໜັງໃຫ້ແກ່ບໍລິສັດ ນັບຈາກ ທັນວາ 2017 ຫາ ສິງຫາ 2035 ຄື: (i) ແບ່ງສ່ວນລາຍຮັບຈາກການຂາຍປີ້ໜັງ ໃນອັດຕາ 12% ແລະ, (ii) ແບ່ງສ່ວນລາຍຮັບຈາກການຂາຍອາຫານ, ເຄື່ອງດື່ມ ແລະ ຂອງທີ່ລະນຶກ ໃນອັດຕາ 15%.

ບໍລິສັດບໍ່ມີສິດຍົກເລີກສັນຍາຮ່ວມມືທຸລະກິດກ່ອນຄົບກຳນົດສັນຍາເຊົ່າ, ເວັ້ນເສຍແຕ່ (i) ມີການລະເມີດອັນຮ້າຍແຮງ ໂດຍຜູ້ເຊົ່າ; ຫຼື (ii) ມີເຫດສຸດວິໄສ; ຫຼື (iii) ຝ່າຍໃດຝ່າຍໜຶ່ງຍື່ນຟ້ອງລົ້ມລະລາຍ ຫຼື ບໍ່ສາມາດຊຳລະຕໍ່ໜີ້ສິນໄດ້. ລາຍຮັບຈາກ BCC ຖືກຮັບຮູ້ນຕາມກົດເກນຄົງຄ້າງ.

ລາຍຮັບອື່ນໆຈາກການດຳເນີນງານ:

- ລາຍຮັບຈາກເຊົ່າປ້າຍໂຄສະນາແມ່ນຖືກບັນທຶກບົນພື້ນຖານວິທີເສັ້ນຊື່ຕາມເງື່ອນໄຂການເຊົ່າ ແລະ ລວມເຂົ້າໃນລາຍຮັບໃນໃບລາຍງານຜົນໄດ້ຮັບສ່ວນລວມ.

- ລາຍຮັບການເຊົ່າຫ້ອງຈັດງານແມ່ນຖືກຮັບຮູ້ໃນໄລຍະເວລາທີ່ການບໍລິການໄດ້ຖືກໃຫ້ບໍລິການເປັນພື້ນຖານເກນຄົງຄ້າງ.

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2025 ກີບ	2024 ກີບ
ເງິນສົດໃນທະນາຄານ	7,558,247,285	2,895,334,895
	7,558,247,285	**2,895,334,895**

ເງິນທີ່ສາມາດຮຽກເກັບໄດ້ໃນເວລາທີ່ຕ້ອງການຢູ່ສະຖາບັນການເງິນຄື ເງິນສົດທີ່ຝາກໄວ້ກັບທະນາຄານທ້ອງຖິ່ນທີ່ມີຊື່ສຽງ, ບັນຊີຝາກປະຢັດ ແລະ ບັນຊີກະແສລາຍວັນສາມສະກຸນເງິນ (ໂດລາ, ບາດ ແລະ ກີບ).

ດອກອັດຕາດອກເບ້ຍບັນຊີເງິນຝາກປະຢັດ ສະກຸນເງິນບາດແມ່ນ 0.2% ຕໍ່ປີ, ສະກຸນໂດລາແມ່ນ 0.3% ຕໍ່ປີ ແລະ ສະກຸນເງິນກີບ ແມ່ນ 0.5% ຕໍ່ປີ. ເງິນຝາກກະແສລາຍວັນແມ່ນບໍ່ໄດ້ຮັບດອກເບ້ຍ.

4. ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ, ສຸດທິ

	2025 ກີບ	2024 ກີບ
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ສາມ	1,473,310,998	879,839,816
ຫັກ: ສຳຮອງບັນຊີໜີ້ສົງໄສຈະເສຍ	(465,225,832)	(465,225,832)
	1,008,085,166	**414,613,984**
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 18.2)	10,643,938,454	11,139,410,389
ເງິນລ່ວງໜ້າພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 18.2)	971,295,282	937,214,527
	12,623,318,902	**12,491,238,900**

5. ຊັບສິນເພື່ອການລົງທຶນ, ສຸດທິ

	ກີບ	ກີບ
ວັນທີ 1 ມັງກອນ 2024	**320,496,520,000**	**304,154,480,000**
ເພີ່ມຂຶ້ນ*	5,009,329,442	3,771,931,800
ຂາດທຶນຈາກການດ້ອຍຄ່າ	(1,488,266,766)	-
ກຳໄລຈາກການຕີມູນຄ່າຊັບສິນເພື່ອການລົງທຶນ, ສຸດທິ	406,417,324	12,570,108,200
ມູນຄ່າຍັງເຫຼືອຕາມບັນຊີສຸດທິ ໃນວັນທີ 31 ທັນວາ2025	**324,424,000,000**	**320,496,520,000**

* ຊັບສິນເພື່ອການລົງທຶນເພີ່ມຂຶ້ນໃນປີສິ້ນສຸດວັນທີ 31 ທັນວາ 2024 ແມ່ນມາຈາກ 1) ສິດນຳໃຊ້ພື້ນທີ່ ຊຶ່ງມີເນື້ອທີ່ລວມ ປະມານ 54.06 ຕາແມັດ ແລະ 2) ການຊື້ເຄື່ອງປັບອາກາດເຂົ້າພື້ນທີ່ໃຫ້ເຊົ່າ.

** ໃນລະຫວ່າງປີສິ້ນສຸດວັນທີ 31 ທັນວາ 2025, ບໍລິສັດໄດ້ຈັດຈຳໜ່າຍຊັບສິນເພື່ອການລົງທຶນ ມີເນື້ອທີ່ລວມປະມານ 83.37 ຕາແມັດ ໂດຍມູນຄ່າຕາມບັນຊີຂອງຊັບສິນໃນວັນທີຈຳໜ່າຍເທົ່າກັບ 1,488,266,766 ກີບ ແລະ ລາຄາຂາຍສຸດທິ ເທົ່າກັບ 4,408,076,631 ກີບ ຊຶ່ງສົ່ງຜົນໃຫ້ບໍລິສັດຮັບຮູ້ກຳໄລຈາກການຈຳໜ່າຍຈຳນວນ 2,919,809,865 ກີບ ໃນໃບ ລາຍງານຜົນໄດ້ຮັບສັງລວມ.

6. ຊັບສິນບັດຄົງທີ່ມີຕົວຕົນ, ສຸດທິ

	ອຸປະກອນ ຫ້ອງການ ກີບ	ພາຫະນະ ກີບ	ລວມ ກີບ
ໃນວັນທີ 31 ທັນວາ 2024			
ຕົ້ນທຶນ	5,585,000	344,545,455	350,130,455
ຄ່າຫຼ້ຍຫ້ຽນສະສົມ	(5,491,917)	(252,666,664)	(258,158,581)
ມູນຄ່າຕາມບັນຊີສຸດທິ	**93,083**	**91,878,791**	**91,971,874**
ທ້າຍປີສິ້ນສຸດວັນທີ 31 ທັນວາ 2025			
ຍອດຍົກມາຂອງມູນຄ່າຕາມບັນຊີສຸດທິ	93,083	91,878,791	91,971,874
ຊື້ເພີ່ມໃໝ່	-	-	-
ສະສາງອອກ, ສຸດທິ	-	-	-
ລາຍຈ່າຍຄ່າຫຼ້ຍຫ້ຽນໃນປີ	(93,083)	(68,909,088)	(69,002,171)
ມູນຄ່າຕາມບັນຊີສຸດທິ	**-**	**22,969,703**	**22,969,703**
ໃນວັນທີ 31 ທັນວາ 205			
ຕົ້ນທຶນ	5,585,000	344,545,455	350,130,455
ຄ່າຫຼ້ຍຫ້ຽນສະສົມ	(5,585,000)	(321,575,752)	(327,160,752)
ມູນຄ່າຕາມບັນຊີສຸດທິ	**-**	**22,969,703**	**22,969,703**

7. ຊັບສິນບັດຄົງທີ່ບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 31 ທັນວາ 2025	
ຕົ້ນທຶນ	74,566,250
ຄ່າຫຼ້ຍຫ້ຽນສະສົມ	(54,230,000)
ມູນຄ່າຕາມບັນຊີສຸດທິ	**20,336,250**
ທ້າຍປີສິ້ນສຸດວັນທີ 31 ທັນວາ 2025	
ຍອດຍົກມາຂອງມູນຄ່າຕາມບັນຊີສຸດທິ	20,336,250
ຊື້ເພີ່ມໃໝ່	-
ລາຍຈ່າຍຄ່າຫຼ້ຍຫ້ຽນໃນປີ	(20,336,250)
ມູນຄ່າຕາມບັນຊີສຸດທິ	**-**
ໃນວັນທີ 31 ທັນວາ 2024	
ຕົ້ນທຶນ	74,566,250
ຄ່າຫຼ້ຍຫ້ຽນສະສົມ	(74,566,250)
ມູນຄ່າຕາມບັນຊີສຸດທິ	**-**

8. ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ

	2025 ກີບ	2024 ກີບ
ລາຍຮັບລ່ວງໜ້າຈາກຜູ້ເຊົ່າ**	6,810,304,328	9,755,584,726
ເງິນມັດຈຳຈາກຜູ້ເຊົ່າ*	5,260,837,771	5,252,143,882
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 18.2)	1,215,155,811	791,357,132
ໜີ້ຕ້ອງສົ່ງອື່ນໆ	141,574,130	678,467,135
	13,427,872,040	**16,477,552,875**

* ເງິນມັດຈຳຈະຖືກສົ່ງຄືນໃຫ້ຜູ້ເຊົ່າຫຼັງມື້ສິ້ນສຸດສັນຍາ.

** ລາຍຮັບລ່ວງໜ້າຈາກຜູ້ເຊົ່າແມ່ນເງິນທີ່ໄດ້ຮັບລ່ວງໜ້າສຳລັບຄ່າບໍລິການ ຫຼື ຄ່າເຊົ່າ ແລະ ຈະຖືກບັນທຶກຕະຫຼອດໄລຍະຂອງສັນຍາ.

9. ທຶນຈົດທະບຽນ

	ຈຳນວນ ຂອງຮຸ້ນ	ມູນຄ່າຂອງຮຸ້ນ	ສ່ວນເພີ່ມມູນ ຄ່າຮຸ້ນ	ລວມ
	ຮຸ້ນ	ກີບ	ກີບ	ກີບ
ວັນທີ 01 ມັງກອນ 2024	147,199,900	147,199,900,000	2,559,995,000	149,759,895,000
ອອກຮຸ້ນ	-	-	-	-
ວັນທີ 31 ທັນວາ 2024	**147,199,900**	**147,199,900,000**	**2,559,995,000**	**149,759,895,000**
ອອກຮຸ້ນ	-	-	-	-
ວັນທີ 31 ທັນວາ 2025	**147,199,900**	**147,199,900,000**	**2,559,995,000**	**149,759,895,000**

ໃນວັນທີ 31 ທັນວາ 2025, ບໍລິສັດມີທຶນຈົດທະບຽນຮຸ້ນສາມັນຈຳນວນ 147,199,900 ຮຸ້ນ ມູນຄ່າຮຸ້ນແມ່ນ 1,000 ກີບຕໍ່ຮຸ້ນ ຮຸ້ນທີ່ອອກທັ້ງໝົດໄດ້ຖືກຊຳລະເຕັມສ່ວນແລ້ວ.

10. ຄັງແຮຕາມລະບຽບການ

	2025 ກີບ	2024 ກີບ
ວັນທີ 01 ມັງກອນ	6,196,231,071	4,270,694,472
ການຈັດສັນລະຫວ່າງປີ	967,271,984	1,925,536,599
ວັນທີ 31 ທັນວາ	**7,163,503,055**	**6,196,231,071**

ຄັງແຮຕາມລະບຽບການ ແມ່ນຈັດສັນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດໃຫ້ມີການຈັດສັນຢ່າງໜ້ອຍ 10% ຂອງກຳໄລສຸດພາຍຫຼັງຫັກການຂາດທຶນສະສົມ (ຖ້າມີ) ຈົນກວ່າຈະບັນລຸ 50% ຂອງທຶນຈົດທະບຽນທັ້ງໝົດ.

11. ຄັງແຮເພື່ອຂະຫຍາຍທຸລະກິດ

	2025 ກີບ	2024 ກີບ
ວັນທີ 01 ມັງກອນ	6,196,231,071	4,270,694,472
ການຈັດສັນລະຫວ່າງປີ	967,271,984	1,925,536,599
ວັນທີ 31 ທັນວາ	**7,163,503,055**	**6,196,231,071**

ຄັງແຮເພື່ອຂະຫຍາຍທຸລະກິດແມ່ນສ້າງຕັ້ງຂຶ້ນຕາມມາດຕາ 16 ຂອງມາດຕາການຂອງບໍລິສັດ, ໃນອັດຕາ 10% ຂອງກຳໄລສຸດທິ ປະຈຳປີ, ຫຼັງຈາກຫັກການຂາດທຶນສະສົມ (ຖ້າມີ). ຄັງແຮນີ້ຈະຖືກນຳໃຊ້ໃນກໍລະນີວິສາຫະກິດຂາດທຶນຍ້ອນສາເຫດບັງເອີນອື່ນໆ ເຊັ່ນ: ໄພທຳມະຊາດຂັ້ນຮຸ່ງ, ບໍລິສັດຈະແກ້ໄຂໂດຍການນຳໃຊ້ຄັງແຮປ້ອງກັນໄພອື່ນໆ ແລະ/ຫຼື ຄັງອື່ນໆ ຂອງບໍລິສັດ ເພື່ອປັບປຸງ ໃຫ້ເຄື່ອນໄຫວທຸລະກິດຢ່າງເປັນປົກກະຕິ.

12. ເງິນປັນຜົນ

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຈັດຂຶ້ນໃນວັນທີ 09 ພຶດສະພາ 2025, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທິ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024 ຈຳນວນ 5 ກີບຕໍ່ຮຸ້ນ, ລວມເປັນເງິນທັງໝົດ 735,999,500 ກີບ (2023: 735,999,500 ກີບ) ເງິນປັນຜົນຖືກຈ່າຍໃນວັນທີ 28 ພຶດສະພາ 2025.

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຈັດຂຶ້ນໃນວັນທີ 29 ເມສາ 2024, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທິ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023 ຈຳນວນ 5 ກີບຕໍ່ຮຸ້ນ, ລວມເປັນເງິນທັງໝົດ 735,999,500 ກີບ (2023: 735,999,500 ກີບ) ເງິນປັນຜົນຖືກຈ່າຍໃນວັນທີ 29 ພຶດສະພາ 2024.

13. ລາຍຮັບ

	2025 ກີບ	2024 ກີບ
ລາຍຮັບຄ່າເຊົ່າ	20,695,233,850	18,542,813,289
ລາຍຮັບຈາກສັນຍາຮ່ວມມືທຸລະກິດ (*)	1,878,070,963	1,985,240,399
	22,573,304,813	**20,528,053,688**

* ນີ້ແມ່ນຄ່າເຊົ່າພື້ນທີ່ທີ່ແບ່ງລາຍຮັບຈາກລາຍໄດ້ຂອງໂຮງໜັງໃຫ້ແກ່ບໍລິສັດ.

14. ລາຍຮັບອື່ນໆຈາກການດຳເນີນງານ

	2025 ກີບ	2024 ກີບ
ລາຍໄດ້ຈາກພື້ນທີ່ຈັດງານ	123,303,368	1,302,861,523
ລາຍໄດ້ຈາກປ້າຍໂຄສະນາ	658,692,378	1,103,984,260
ລາຍຮັບຈາກດອກເບ້ຍ	16,119,892	9,498,680
ລາຍຮັບອື່ນໆ	-	54,260,336
	798,115,638	**2,470,604,799**

15. ລາຍຈ່າຍຈາກການດຳເນີນງານ

	2025 ກີບ	2024 ກີບ
ຄ່າບໍລິຫານ (ບົດອະທິບາຍຂໍ້ 18.1)	4,132,342,655	4,525,488,530
ຄ່າໃຊ້ຈ່າຍບ່ອນຈອດລົດ (ບົດອະທິບາຍຂໍ້ 18.1)	3,852,984,338	-
ຄ່າບຳລຸງຮັກສາ (ບົດອະທິບາຍຂໍ້ 18.1)	3,442,592,097	3,392,249,515
ຄ່າໃຊ້ຈ່າຍໃນການສ້ອມແປງ	1,079,449,750	1,273,087,002
ຄ່າການຕະຫຼາດ	833,522,928	512,308,051
ຄ່າທີ່ປຶກສາ	513,620,646	477,838,256
ຄ່າໃຊ້ຈ່າຍກ່ຽວກັບພະນັກງານ	115,709,000	586,342,440
ຄ່າຫລຸ້ຍຫ້ຽນ	69,002,171	70,026,102
ຄ່າໃຊ້ຈ່າຍອື່ນໆ*	539,747,363	831,434,864
	14,578,970,948	**11,668,774,760**

* ນີ້ມາຈາກລາຍຈ່າຍປະກັນໄພຈຳນວນ 245,188,330 ກີບ, ຄ່ານ້ຳມັນຈຳນວນ 198,937,152 ກີບ, ແລະ ຄ່າໃຊ້ຈ່າຍອື່ນໆ 189,870,452 ກີບ.

16. ລາຍຈ່າຍອາກອນກຳໄລ

ອົງປະກອບສຳຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

	2025 ກີບ	2024 ກີບ
ລາຍຈ່າຍອາກອນກຳໄລ		-
ລາຍຈ່າຍອາກອນເຍື້ອນຊຳລະ (ບົດອະທິບາຍຂໍ້ 16.2)	2,829,889,317	4,538,525,316
ລວມລາຍຈ່າຍອາກອນພາຍໃນປີ	**2,829,889,317**	**4,538,525,316**

16. ລາຍຈ່າຍອາກອນກຳໄລ (ຕໍ່)

16.1. ລາຍຈ່າຍອາກອນກຳໄລ

ບໍລິສັດມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 20% (2024: 20%) ຂອງກຳໄລກ່ອນອາກອນໂດຍໃຫ້ສອດຄ່ອງກັບກົດໝາຍອາກອນ.

ການຄິດໄລ່ຂອງອາກອນກຳໄລສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ແລະ 31 ທັນວາ 2024 ແມ່ນມີດັ່ງຕໍ່ໄປນີ້:

	2025 ກີບ	2024 ກີບ
ກຳໄລກ່ອນອາກອນ – ພື້ນຖານທາງບັນຊີ	**12,502,609,158**	**23,793,891,307**
ອັດຕາອາກອນ 20%		
ຜົນກະທົບຈາກອາກອນ:		
ຜົນກະທົບຈາກອາກອນລາຍຈ່າຍທີ່ບໍ່ໃຫ້ຖືເປັນລາຍຈ່າຍ	15,780,896	465,256,471
ຜົນກະທົບຈາກອາກອນຂອງລາຍຮັບທີ່ຍົກເວັ້ນອາກອນກຳໄລ	(14,752,779,785)	(23,157,883,051)
ພື້ນຖານກຳໄລກ່ອນອາກອນກ່ອນຫັກຂາດທຶນອາກອນຍົກຍອດໄປຫັກຕໍ່	**(2,234,389,731)**	**1,101,264,727**
ຂາດທຶນອາກອນຍົກຍອດໄປຫັກຕໍ່ (ບົດອະທິບາຍຂໍ້ 16.3)	-	(1,101,264,727)
ພື້ນຖານກຳໄລກ່ອນອາກອນຫຼັງຫັກຂາດທຶນອາກອນຍົກຍອດໄປຫັກຕໍ່	**(2,234,389,731)**	**-**
ອັດຕາອາກອນ	20%	20%
ລາຍຈ່າຍອາກອນກຳໄລ	**-**	**-**

16.2. ໜີ້ສິນອາກອນເຍື້ອນຊຳລະ

ການເຄື່ອນໄຫວລວມຂອງໜີ້ສິນອາກອນເຍື້ອນຊຳລະມີດັ່ງນີ້:

	2025 ກີບ	2024 ກີບ
ໃນວັນທີ 1 ມັງກອນ	36,807,966,154	32,269,440,838
ບັນທຶກເຂົ້າກຳໄລ ຫຼື ຂາດທຶນ	2,829,889,317	4,538,525,316
ໃນວັນທີ 31 ທັນວາ	**39,637,855,471**	**36,807,966,154**

ການເຄື່ອນໄຫວຂອງໜີ້ສິນອາກອນເຍື້ອນຊຳລະພາຍໃນປີ ແລະ ປີກ່ອນມີດັ່ງລຸ່ມນີ້:

	ກີບ	ບັນທຶກ ເຂົ້າກຳໄລ ຫຼື ຂາດທຶນ ກີບ	ໃນວັນທີ 31 ທັນວາ 2024 ກີບ
ຄ່າເສື່ອມມູນຄ່າຈາກການປະເມີນມູນຄ່າຊັບສິນການລົງທຶນ	12,867,828,226	2,797,760,228	15,665,588,454
ກຳໄລຈາກການປະເມີນມູນຄ່າຊັບສິນການລົງທຶນ	23,918,402,721	-	23,918,402,721
ອື່ນໆ*	21,735,207	32,129,089	53,864,296
	36,807,966,154	**2,829,889,317**	**39,637,855,471**

* ສ່ວນໃຫຍ່ແມ່ນມາຈາກກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ.

16. ລາຍຈ່າຍອາກອນກຳໄລ (ຕໍ່)

16.3. ຂາດທຶນອາກອນຍົກຍອດໄປຫັກຕໍ່

ອີງຕາມກົດໝາຍອາກອນສະບັບແກ້ໄຂເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ທີ່ມີຜົນສັກສິດຕັ້ງແຕ່ວັນທີ 1 ມັງກອນ 2020, ມາດຕາ 23, ຜູ້ດຳເນີນທຸລະກິດ ທີ່ເສຍອາກອນກຳໄລຕາມລະບົບການຖືບັນຊີທີ່ມີການຂາດທຶນໃນປີ ໂດຍມີການຢັ້ງຢືນຈາກອົງການການກວດສອບບັນຊີ ຫຼື ບໍລິສັດກວດສອບບັນຊີເອກະລາດ ແລະ ໄດ້ມີການຮັບຮູ້ຈາກຂະແໜງສ່ວຍສາອາກອນ ມີສິດຍົກເງິນຂາດທຶນດັ່ງກ່າວ ໄປຫັກອອກຈາກກຳໄລຂອງປີຖັດໄປ ພາຍໃນເວລາຫ້າປີ. ໃນວັນທີ 31 ທັນວາ 2024, ບໍລິສັດມີຂາດທຶນອາກອນຍົກຍອດໄປຫັກຕໍ່ສະສົມລວມທີ່ສາມາດຫັກລົບກັບກຳໄລທາງອາກອນໃນອະນາຄົດດັ່ງລາຍລະອຽດລຸ່ມນີ້:

ປີເລີ່ມຕົ້ນ	ສາມາດໃຊ້ໄດ້ເຖິງ	ຂາດທຶນອາກອນ ກີບ	ສາມາດໃຊ້ໄດ້ເຖິງ 31 ທັນວາ 2025 ກີບ	ເສຍສິດ ກີບ	ສາມາດໃຊ້ໄດ້ເຖິງ ວັນທີ 31 ທັນວາ 2025 ກີບ
2021*	2026	4,275,760,240	(1,101,264,727)	-	3,174,495,513
		4,275,760,240	**(1,101,264,727)**	**-**	**3,174,495,513**

* ຂາດທຶນອາກອນຍົກຍອດໄປຫັກຕໍ່ສຳລັບປີສິ້ນສຸດ 31 ທັນວາ 2021 ໄດ້ຖືກປະເມີນຈາກຂະແໜງສ່ວຍສາອາກອນ ໃນວັນທີ 27 ມັງກອນ 2023.

17. ກຳໄລຕໍ່ຮຸ້ນ

ພື້ນຖານການຄິດໄລ່ກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ຈາກການແບ່ງກຳໄລສຸດທິໃຫ້ຜູ້ຖືຮຸ້ນ ດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນທີ່ອອກພາຍໃນປີ.

	2025	2024
ກຳໄລ ສຸດທິຂອງຜູ້ຖືຮຸ້ນ (ກີບ)	9,672,719,841	19,255,365,991
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນທີ່ອອກທັງໝົດ (ຮຸ້ນ)	147,199,900	147,199,900
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	65.71	130.81

18. ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ພາຍໃຕ້ການຄວບຄຸມຂອງ ບໍລິສັດ ລວມເຖິງການລົງທຶນໃນນິຕິບຸກຄົນ ແລະ ບຸກຄົນ ຫຼື ນິຕິບຸກຄົນ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນເຫຼົ່ານັ້ນ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນ ພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນດັ່ງຕໍ່ໄປນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ:

18.1. ການຊື້ບໍລິການ

	2025 ກີບ	2024 ກີບ
ຊື້ບໍລິການຈາກ:		
ບໍລິສັດແມ່		
- ຄ່າບໍລິຫານຈັດການ (ບົດອະທິບາຍຂໍ້ 15)*	4,132,342,655	4,525,488,530
- ຄ່າບຳລຸງຮັກສາ (ບົດອະທິບາຍຂໍ້ 15)**	3,442,592,097	3,392,249,515
- ຄ່າໃຊ້ຈ່າຍບ່ອນຈອດລົດ (ບົດອະທິບາຍຂໍ້ 15)***	3,852,984,338	-

* ຄ່າໃຊ້ຈ່າຍນີ້ແມ່ນຄ່າບໍລິຫານຈັດການທີ່ບໍລິສັດຊຳລະໃຫ້ແກ່ບໍລິສັດແມ່ ສຳລັບການໃຫ້ບໍລິການທີ່ກ່ຽວຂ້ອງ ກັບການໄດ້ມາ ແລະ ການຮັກສາຜູ້ເຊົ່າ.

** ຄ່າໃຊ້ຈ່າຍນີ້ແມ່ນຄ່າບຳລຸງຮັກສາ ທີ່ບໍລິສັດຊຳລະໃຫ້ແກ່ບໍລິສັດແມ່ ສຳລັບການໃຫ້ບໍລິການບຳລຸງຮັກສາພື້ນທີ່ ສູນການຄ້າ ແລະ ຫ້ອງການ ພາຍໃນອາຄານ ວຽງຈັນ ເຊັ້ນເຕີ ໂດຍມີເນື້ອທີ່ລວມ 5,908.53 ຕາແມັດ.

*** ຄ່າໃຊ້ຈ່າຍເຫຼົ່ານີ້ແມ່ນຄ່າເຊົ່າພື້ນທີ່ຈອດລົດໃຫ້ເຊົ່າ ທີ່ບໍລິສັດຊຳລະໃຫ້ແກ່ບໍລິສັດແມ່ ໂດຍເລີ່ມຕົ້ງແຕ່ປີ 2025 ສຳລັບພື້ນທີ່ລວມ 496.4 ຕາແມັດ ສຳລັບປີ 2025.

18.2. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ບໍລິການ

	2025 ກີບ	2024 ກີບ
ໜີ້ຕ້ອງຮັບທາງການຄ້າ:		
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 4)	10,643,938,454	11,139,410,389
ເງິນລ່ວງໜ້າພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 4)	971,295,282	937,214,527
ໜີ້ຕ້ອງສົ່ງທາງການຄ້າ:		
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 8)	1,215,155,811	791,357,132

19. ພາລະຜູກພັນ

ຜູ້ໃຫ້ເຊົ່າ

ບໍລິສັດໄດ້ໃຫ້ເຊົ່າພື້ນທີ່ຮ້ານຄ້າຍ່ອຍ ແລະ ຫ້ອງການ ພາຍໃຕ້ຂໍ້ຕົກລົງການເຊົ່າເພື່ອການດຳເນີນງານ. ໜີ້ຕ້ອງຮັບຈາກຄ່າເຊົ່າຂັ້ນຕ່ຳ ໃນອະນາຄົດ ນະວັນທີ 31 ທັນວາ 2025 ແລະ 31 ທັນວາ 2024 ພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານມີດັ່ງນີ້:

	31 ທັນວາ 2025 ກີບ	31 ທັນວາ 2024 ກີບ
ຕ່ຳກວ່າ 1 ປີ	5,623,055,176	16,151,087,747
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	6,265,683,366	14,205,024,096
	11,888,738,542	**30,356,111,843**

20. ເຫດການທີ່ເກີດຂຶ້ນຫຼັງວັນທີເອກະສານລາຍງານທາງການເງິນ

ບໍ່ມີບັນຫາ ຫຼື ເຫດການໃດທີ່ເກີດຂຶ້ນ ແຕ່ວັນທີ 31 ທັນວາ 2025 ທີ່ຕ້ອງປັບປຸງ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງ ບໍລິສັດ.

ເອກະສານຄັດຕິດ 4:

ແຜນການດຳເນີນທຸລະກິດປະຈຳປີ 2026 ຂອງ ວຈຊຕ

1. ແຜນງົບປະມານການດຳເນີນທຸລະກິດປະຈຳປີ 2026

ສືບຕໍ່ມອບໝາຍໃຫ້ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ເປັນຜູ້ຮັບຜິດຊອບໃນການຊອກຫາລູກຄ້າ ແລະ ບໍລິຫານຊັບສິນຕ່າງໆ, ນຳໃຊ້ທີມງານຄຸ້ມຄອງບໍລິຫານງານທີ່ມີຢູ່ແລ້ວຂອງ ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ຢ່າງເຕັມທີ່, ເພື່ອຫຼຸດຜ່ອນຕົ້ນທຶນການຄຸ້ມຄອງບໍລິຫານງານຂອງບໍລິສັດ,ການກຳນົດລາຍຮັບ ແລະ ລາຍຈ່າຍຂອງ ວຈຊຕ ແລະ ບໍລິສັດແມ່ຢ່າງຊັດເຈນ. ເຊິ່ງຈະເປັນຜົນດີຕໍ່ທີມງານໃນການວາງແຜນຄຸ້ມຄອງບໍລິຫານຊັບສິນຂອງບໍລິສັດ ວຈຊຕ ແລະ ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ, ສ້າງຜົນປະໂຫຍດຮ່ວມກັນ ແລະ, ສ້າງການຮ່ວມມືກັນ ແລະ ສ້າງຜົນປະໂຫຍດຫຼາຍຂຶ້ນສຳລັບທັງສອງບໍລິສັດ.

ອີງຕາມ “ສັນຍາການບໍລິການ ຊອກຫາລູກຄ້າ ແລະ ບໍລິຫານຊັບສິນ ປະຈຳປີ 2026” ທີ່ບໍລິສັດ ວຈຊຕ ແລະ ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ໄດ້ເຊັນກັນ, ລາຍຮັບລວມປະຈຳປີຂອງ ບໍລິສັດ ຄວນຈະບໍ່ຕ່ຳກວ່າ 22.41 ຕື້ກີບ, ຫຼັງຈາກຫັກຄ່າບໍລິການຄຸ້ມຄອງ ແລະ ບໍລິຫານຊັບສິນ ແລະ ອາກອນກຳໄລແລ້ວ, ຕົວຊີ້ວັດກຳໄລຄວນຈະບໍ່ຕ່ຳກວ່າ 7.95 ຕື້ກີບ. ບໍລິສັດ ວຈຊຕ ຈະຈ່າຍຄ່າບໍລິການຊອກຫາລູກຄ້າ ແລະ ບໍລິຫານຊັບສິນ ໃຫ້ແກ່ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ເປັນລາຍໄຕມາດ, ຄ່າບໍລິການລວມທັງໝົດຈະຖືກກຳນົດຕາມຜົນການປະເມີນງານປະຈຳປີ, ໂດຍຄ່າບໍລິການປະຈຳປີຈະບໍ່ເກີນ 4.95 ຕື້ກີບ/ປີ (ລວມພາສີ).

2. ແຜນວຽກງານສຳຄັນປີ 2026

ທີມງານບໍລິຫານຈະດຳເນີນແຜນວຽກສຳຄັນດັ່ງຕໍ່ໄປນີ້ໃນປີ 2026:

2.2.1 ສຸມໃສ່ເປົ້າໝາຍການສ້າງເຂດລວມສຳນັກງານໃຫຍ່, ເພີ່ມທະວີການດຶງດູດການລົງທຶນ, ນຳເອົາວິສາຫະກິດລັດວິສາຫະກິດຈີນທີ່ມີຄຸນນະພາບສູງ, ວິສາຫະກິດຂ້າມຊາດຂະໜາດໃຫຍ່ ແລະ ອື່ນໆ ເຂົ້າມາຕັ້ງຢູ່ໃນອາຄານສຳນັກງານ ແລະ ນຳເອົາແບຣນທີ່ມີຊື່ສຽງທີ່ມີຄຸນນະພາບສູງເຂົ້າມາຕັ້ງຢູ່ໃນສູນການຄ້າ.

2.2.2 ສືບຕໍ່ເພີ່ມຄວາມຫຼາກຫຼາຍຂອງການບໍລິການ ແລະ ສິ່ງອຳນວຍຄວາມສະດວກຂອງອາຄານສຳນັກງານ, ໂດຍຜ່ານສິ່ງອຳນວຍຄວາມສະດວກຕ່າງໆ ເຊັ່ນ: ຫ້ອງອາຫານຮ່ວມກັນ, ຫ້ອງປະຊຸມຮ່ວມກັນ ແລະ ການບໍລິການທີ່ສະດວກສະບາຍເຊັ່ນ: ສ່ວນຫຼຸດຄ່າອາຫານສຳລັບພະນັກງານ, ສ່ວນຫຼຸດຄ່າປີ້ຮູບເງົາ, ການຈັດກິດຈະກຳ Salon ຂອງບໍລິສັດ, ເພື່ອ

ເພີ່ມຄວາມຜູກພັນຂອງລູກຄ້າ, ຮັດແໜ້ນ ແລະ ເສີມຂະຫຍາຍຊື່ສຽງ, ອິດທິພົນ ແລະ ອັດຕາການເຂົ້າເຊົ່າຂອງອາຄານ ສຳນັກງານ ວຈຊຕ.

2.2.3 ສືບຕໍ່ຄົ້ນຫາຊ່ອງຫວ່າງຕະຫຼາດ ແລະ ຈຸດກະຕຸ້ນຄວາມຕ້ອງການຂອງຜູ້ບໍລິໂພກໃນລາວຢ່າງເລິກເຊິ່ງ, ໂດຍວາງແຜນການນຳເອົາຮ້ານຂາຍຍ່ອຍແບບມືອາຊີບເຂົ້າມາຕັ້ງຢູ່ເປັນຊັ້ນ ຫຼື ພື້ນທີ່ຕໍ່ເນື່ອງ.

2.2.4 ສືບຕໍ່ຍົກລະດັບຄຸນນະພາບ ແລະ ອິດທິພົນຂອງກິດຈະກຳຕ່າງໆໃນສູນການຄ້າ, ໂດຍຜ່ານການຈັດກິດຈະກຳ ວິທະຍາສາດ, ການສຶກສາ, ວັດທະນະທຳ, ກິລາ ແລະ ການຄ້າທີ່ຫຼາກຫຼາຍຢູ່ໃນສູນການຄ້າ, ເພື່ອສືບຕໍ່ເສີມສ້າງ ແລະ ຍົກລະດັບອິດທິພົນຂອງແບຣນການຄ້າ ວຈຊຕ.

2.2.5 ປັບປຸງຍຸດທະສາດການຕະຫຼາດໂຮງໜັງ, ສຳລັບກຸ່ມລູກຄ້າ ເຊັ່ນ: ວິສາຫະກິດຈີນ, ຫ້ອໜ່ວຍລັດຖະບານ ແລະ ວິສາຫະກິດທ້ອງຖິ່ນ, ໂຮງຮຽນ, ສະເໜີບໍລິການຈອງໂຮງໜັງທັງໝົດ, ເພື່ອຂະຫຍາຍອິດທິພົນຂອງໂຮງໜັງ.

2.2.6 ປັບປຸງ ແລະ ປ່ຽນແປງຮູບພາບແບຣນຢູ່ຝ່າຍນອກຂອງຜູ້ເຊົ່າທີ່ສຳຄັນຂອງສູນການຄ້າ, ເພື່ອປັບປຸງພາບລວມພາຍນອກຂອງສູນການຄ້າ, ເພີ່ມຄວາມພໍໃຈ ແລະ ຄວາມເຊື່ອໝັ້ນຂອງລູກຄ້າ.

2.2.7 ເສີມສ້າງການຄຸ້ມຄອງຄວາມປອດໄພ ແລະ ການຍົກລະດັບການບໍລິຫານດ້ານຊັບສິນຢ່າງຕໍ່ເນື່ອງ, ປັບປຸງ ແລະ ຍົກລະດັບສິ່ງອຳນວຍຄວາມສະດວກດ້ານການບໍລິການ ແລະ ໂດຍລວມ, ສ້າງສະພາບແວດລ້ອມການດຳເນີນງານທີ່ປອດໄພ, ສະອາດ ແລະ ເປັນລະບຽບຮຽບຮ້ອຍ.

2.2.8 ນຳໃຊ້ເງິນທຶນທີ່ບໍ່ໄດ້ນຳໃຊ້, ສືບຕໍ່ຊື້ຊັບສິນອະສັງຫາລິມະສັບທີ່ມີຄຸນນະພາບສູງຈາກບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ, ຂະຫຍາຍຂະໜາດຊັບສິນຂອງບໍລິສັດ, ແລະ ປັບປຸງການຈັດສັນຊັບສິນຂອງບໍລິສັດ.

ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່

ເອກະສານຄັດຕິດ 5

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ເຈິ່ງ ຊຸນຫຼິນ (Mr. Zeng Chunlin)
ສັນຊາດ:	ຈີນ
ວັນເກີດ:	22 /05/1983
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

  ຈົບການສຶກສາຈາກມະຫາວິທະຍາໄລຢຸນນານ (ປະເທດຈີນ), ສາຂາພາສາອັງກິດ.

- ປະສົບການເຮັດວຽກ:
  - 2002—2006 ຮຽນພາສາອັງກິດຢູ່ມະຫາວິທະຍາໄລຢຸນນານ
  - 2006—2009 ພະນັກງານ, ບໍລິສັດຊັບພະຍາກອນມະນຸດຂອງບໍລິສັດທໍລະນີສາດ ແລະ ຊັບພະຍາກອນແຮ່ທາດຢຸນນານ
  - 2009—2010 ພະນັກງານອິດສະຫຼະ
  - 2010—2010 ເຮັດວຽກຢູ່ພະແນກວິສະວະກຳສາກົນ, ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ ຈຳກັດ
  - 2010—2012 ຮອງຫົວໜ້າຫ້ອງການ, ພະແນກວິສະວະກຳສາກົນ, ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ ຈຳກັດ
  - 2012—2013 ຮອງຫົວໜ້າຫ້ອງການປະຈຳກຳປູເຈຍ, ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ ຈຳກັດ
  - 2013—2016 ຮອງຫົວໜ້າຫ້ອງການປະຈຳອິນເດຍ, ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ ຈຳກັດ
  - 2016—2019 ຫົວໜ້າຫ້ອງການພັດທະນາຕະຫຼາດ, ພະແນກວິສະວະກຳສາກົນກຸ່ມບໍລິສັດ ລິງ

ທຶນ ກໍ່ສ້າງ ແລະ ຖືຮຸ້ນແຂວງ ຢຸນນານ ຈຳກັດ

- 2019 ຫົວໜ້າຫ້ອງການພັດທະນາຕະຫຼາດ ແລະ ຜູ້ຊ່ວຍອຳນວຍການພະແນກວິສະວະກຳ ສາກົນກຸ່ມບໍລິສັດ ລົງທຶນ ກໍ່ສ້າງ ແລະ ຖືຮຸ້ນແຂວງ ຢຸນນານ ຈຳກັດ
- 2019—2022 ຫົວໜ້າຫ້ອງການຜູ້ຕາງໜ້າທຸລະກິດປັກກິ່ງ ແລະ ຜູ້ຊ່ວຍອຳນວຍການ ພະແນກ ວິສະວະກຳສາກົນກຸ່ມບໍລິສັດ ລົງທຶນ ກໍ່ສ້າງ ແລະ ຖືຮຸ້ນແຂວງ ຢຸນນານ ຈຳກັດ
- 2022—2024 ຜູ້ຊ່ວຍອຳນວຍການ ພະແນກວິສະວະກຳສາກົນກຸ່ມບໍລິສັດ ລົງທຶນ ກໍ່ສ້າງ ແລະ ຖືຮຸ້ນແຂວງ ຢຸນນານ ຈຳກັດ
- 2024 ຮອງຫົວໜ້າຫ້ອງການປະຈຳລາວ ແລະ ຜູ້ຊ່ວຍອຳນວຍການ ພະແນກວິສະວະກຳສາກົນ ກຸ່ມບໍລິສັດ ລົງທຶນ ກໍ່ສ້າງ ແລະ ຖືຮຸ້ນແຂວງ ຢຸນນານ ຈຳກັດ
- 2024—ປະຈຸບັນ, ຮອງຫົວໜ້າປະຈຳການ ກຸ່ມບໍລິສັດ ລົງທຶນ ກໍ່ສ້າງ ແລະ ຖືຮຸ້ນແຂວງ ຢຸນ ນານ (ລາວ) ຈຳກັດຜູ້ດຽວ,
-

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ນາງ ອໍລະໄທ ສັນຕິຄົງຄາ
ສັນຊາດ:	ລາວ
ວັນເກີດ:	21/01/1979
ສະຖານທີ່ເກີດ:	ນະຄອນຫຼວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລແຫ່ງຊາດລາວ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:
  - 2008 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ ບໍລິສັດ ກຣິດຕະພົງ ກຣຸບ ຈຳກັດ.
  - 2010 ເຖິງ ປະຈຸບັນ, ຮອງປະທານ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.
  - 2014 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ໂຮງແຮມ ແລນມາກ ລິເວີໄຊ
  - 2017 ເຖິງ ປະຈຸບັນ, ຮອງປະທານ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ.

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ຫວັງເຫວີຍຄຸນ (Mr. Wang Weikun)

ສັນຊາດ: ຈີນ

ວັນເກີດ: 15 /05/1984

ສະຖານທີ່ເກີດ: ແຂວງຫູນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າຕ່າງປະເທດ ຈີນ, ສາຂາການເງິນ. ລະດັບປະລິນຍາໂທຢູ່ມະຫາວິທະຍາໄລອາຊິດາ ຍີ່ປຸ່ນ, ສາຂາການພົວພັນສາກົນ.

- ປະສົບການເຮັດວຽກ:

- 2006-2009, ຮຽນປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າຕ່າງປະເທດ ຈີນ, ສາຂາການເງິນ
- 2009-2010, ວິຊາການ ຂອງບໍລິສັດ ເຄພີເອັມຈີ ຈີນ ຈຳກັດ
- 2010-2014, ຮອງຫົວໜ້າຫ້ອງການຮ່ວມມືເສດຖະກິດໃນອະນຸພາກພື້ນລ້ານຊ້າງ-ແມ່ນ້ຳຂອງ ຂອງ ຄະນະກຳມະການພັດທະນາ ແລະ ປະຕິຮູບ ແຂວງຢຸນນານ
- 2014-2018, ຫົວໜ້າຫ້ອງການຮ່ວມມືເສດຖະກິດໃນອະນຸພາກພື້ນລ້ານຊ້າງ-ແມ່ນ້ຳຂອງ ຂອງ ຄະນະກຳມະການພັດທະນາ ແລະ ປະຕິຮູບ ແຂວງຢຸນນານ.
- 2014-2016, ຮຽນປະລິນຍາໂທຢູ່ມະຫາວິທະຍາໄລ ອາຊິເດີ ຍີ່ປຸ່ນ, ສາຂາການພົວພັນສາກົນ
- 2018-2019, ຫົວໜ້າພະແນກແຜນການພັດທະນາຍຸດທະສາດບໍລິສັດ ລົງທຶນຕ່າງປະເທດ ແຂວງຢຸນນານຈຳກັດ
- 2019-2020, ຫົວໜ້າຫ້ອງການສະພາບໍລິຫານບໍລິສັດ ລົງທຶນຕ່າງປະເທດແຂວງຢຸນນານຈຳກັດ
- 2020 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຮ່ວມທຶນລາວຈີນ ຈຳກັດ

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ບູລະພາ ສັນຕິຄົງຄາ
ສັນຊາດ:	ຈີນ
ວັນເກີດ:	06/02 1967
ສະຖານທີ່ເກີດ:	ແຂວງເສຊວນ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຫວາໝານຫຼີກົ້ງ ຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 2005 ເຖິງ ປະຈຸບັນ, ປະທານກິຕິມະສັກສະພາການຄ້າຈີນ ປະຈຳລາວ
- 2008 ເຖິງ ປະຈຸບັນ, ປະທານບໍລິສັດລີສັດ ກຣິດຕະພົງ ກຣຸບ ຈຳກັດ
- 2009 ເຖິງ ປະຈຸບັນ, ສະມາຊິກສະພາບໍລິການສະມາຄົມຊາວຈີນຕ່າງດ້າວແຫ່ງຊາດຈີນປະຈຳ ລາວ
- 2010 ເຖິງ ປະຈຸບັນ, ຮອງປະທານສະມາຄົມຈີນວຽງຈັນລາວ
- 2011 ເຖິງ ປະຈຸບັນ, ຮອງປະທານບໍລິສັດ ລ້ຽງຫົມສາກົນແຄມຊີລາວຈຳກັດ
- 2015 ເຖິງ ປະຈຸບັນ, ປະທານສະພາການຄ້າຊາວຈີນຕ່າງດ້າວປະຈຳ ສປປ ລາວ

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ອູ່ ຊິງຫວາ (Mr. Wu Xinghua)

ສັນຊາດ: ຈີນ

ວັນເກີດ: 09/01/1984

ສະຖານທີ່ເກີດ: ແຂວງອ່ານຮຸຍ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລອັດສຳຊັ່ນ(Assumption Thai), ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:
  - 2013 ເຖິງ ປະຈຸບັນ, ຜູ້ຕ່າງໜ້າຂາຮຸ້ນ ບໍລິສັດ ລົງທຶນສາກົນແຄມຊີລາວ ຈຳກັດ.
  - 2014 ເຖິງ ປະຈຸບັນ, ຮອງອຳນວຍການບໍລິສັດ ກຣິດຕະພິງກຣຸບ ຈຳກັດ.
  - 2014 ເຖິງ ປະຈຸບັນ, ຮອງອຳນວຍການ ບໍລິສັດ ລົງທຶນສາກົນເອວີຊີລາວ ຈຳກັດ.
  - 2014-2019, ຜູ້ຕ່າງໜ້າຂາຮຸ້ນບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.
  - 2015 ເຖິງ ປະຈຸບັນ, ຜູ້ຕ່າງໜ້າຂາຮຸ້ນໂຮງແຮມ ດອນຈັນພາເລດ.
  - 2019 ເຖິງ ປະຈຸບັນ, ຮອງອຳນວຍການປະຈຳການ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ຫຼໍ ສ້ຽວດົ້ງ (Mr. Luo Xiaodong)

ສັນຊາດ: ຈີນ

ວັນເກີດ: 07/03/1989

ສະຖານທີ່ເກີດ: ນະຄອນໂສງຊິ້ງ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລການເງິນ ແຂວງຢູນນານ ຈີນ, ສາຂາການເງິນ-ບັນຊີ.

- ປະສົບການເຮັດວຽກ:

  - 2009-2013, ຮຽນຢູ່ມະຫາວິທະຍາໄລການເງິນ ແຂວງຢູນນານ ຈີນ ວິຊາການບໍລິຫານການເງິນ-ບັນຊີ.
  - 2013-2014, ວິຊາການບັນຊີບໍລິສັດຮັບເໝົາການກໍ່ສ້າງ ແຂວງຢູນນານ ຈຳກັດ.
  - 2014-2015, ວິຊາການການເງິນບໍລິສັດຮ່ວມມືການພັດທະນາກະສິດກຳຟັ້ນຢ້າແຂວງຢູນນານ ຈຳກັດ.
  - 2015-2017, ວິຊາການການເງິນບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ.
  - 2017-2019, ຮອງຫົວໜ້າພະແນກການເງິນບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ.
  - 2019 ເຖິງ ປະຈຸບັນ, ຫົວໜ້າພະແນກການເງິນບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ.

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:ເຫຼີ ເຢົ້າຫ້າຍ (Mr. LEI Yaohai)

ສັນຊາດ: ຈີນ

ວັນເກີດ: 28 /11/1984

ສະຖານທີ່ເກີດ: ແຂວງກວາງຊີ, ສປ ຈີນ.

- <u>ປະຫວັດການສຶກສາ:</u>
  - ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລຂອນແກນໄທ, ສາຂາບໍລິຫານທຸລະກິດ.
- <u>ປະສົບການເຮັດວຽກ:</u>
  - 2006-2010, ຮຽນຢູ່ມະຫາວິທະຍາໄລຊົນເຜົ່າກວາງຊີ ສປ ຈີນ, ສາຂາວິຊາພາສາລາວ;
  - 2010-2011, ເຮັດວຽກຢູ່ກົມທາງລົດໄຟ ຄຸນໝິງ ສປ ຈີນ;
  - 2012-2015, ຫົວໜ້າໜ່ວຍງານ, ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ;
  - 2015-2017, ຮອງຜູ້ຈັດການພະແນກບໍລິຫານສູນການຄ້າວຽງຈັນເຊັນເຕີຂອງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ
  - 2017-2019, ຫົວໜ້າຫ້ອງການຂອງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ;
  - 2019 ເຖິງ ປະຈຸບັນ, ເລຂາສະພາບໍລິຫານຂອງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ, ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ.

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ:	ທ່ານ ສ່ຽວ ໂຢງ (Mr. Xiao Yong)
ສັນຊາດ:	ຈີນ
ວັນເກີດ:	02/07/1977
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ້ງ ສປຈີນ, ສາຂາການເງິນ.

- ປະສົບການເຮັດວຽກ:
  - ປີ 1999 – ປະຈຸບັນ ບໍລິສັດທີ່ປຶກສາບັນຊີຢ້ຳທ້າຍ
  - ປີ 2010– ປະຈຸບັນ ເປັນສະມາຊິກຄະນະກຳມະການຜູ້ຊ່ຽວຊານ ຂອງຄະນະຕ່າງໆຂອງ ຫ້ອງການການເງິນແຂວງຢຸນນານ ເຊັ່ນ ຄະນະກຳມະການກວດສອບກອງທຶນເພື່ອຊີ້ນຳຂະແໜງການຕ່າງໆ ແລະ ຄະນະກຳມະການການຊຳລະສະສາງ ແລະ ການປັບປຸງຂອງຕະຫຼາດຫລັກຊັບ
  - ປີ 2011– ປະຈຸບັນ ເປັນຜູ້ຊ່ຽວຊານພາຍນອກ ຂອງຄະນະກຳມະການກວດສອບ ຂອງຄະນະກຳມະການຄຸ້ມຄອງສັບສິນແຫ່ງລັດ ແຂວງຢຸນນານ
  - ປີ 2012– ປະຈຸບັນ ສະມາຊິກຄະນະກຳມະການການລົງທຶນຂອງກອງທຶນການລົງທຶນການຊື້ ຂາຍຮຸ້ນ ສີເກົ ເຊີນເຈີ້ນ ສປຈີນ
  - ປີ 2013– ປະຈຸບັນ ສະມາຊິກຄະນະກຳມະການການລົງທຶນຂອງກອງທຶນການລົງທຶນການຊື້ ຂາຍຮຸ້ນ ເຫວີຍສີ ຢຸນນານກົ່ງໂຖວ
  - ປີ 2013– ປະຈຸບັນ ເປັນວິຊາການກວດສອບດ້ານການບໍລິຫານການເງິນ ແລະ ທີ່ປຶກສາ ບໍລິສັດທີ່ໄດ້ເຂົ້າຕະຫຼາດຫລັກຊັບຈີນ ເຊັ່ນບໍລິສັດໄອເອີຟາ ເຢ້ຍປາວເຊີງວູ້ ແລະ ທຽນສີງຈ້ຽນ
  - ປີ 2017 –ປະຈຸບັນ ເປັນຜູ້ອຳນວຍການບໍລິສັດທີ່ປຶກສາການຄຸ້ມຄອງບໍລິຫານ ຊີງຫົວ ລີ້ຊິ້ນ ປັກກິ່ງ
  - ປີ 2017 –ປະຈຸບັນ ເປັນຜູ້ ອຳນວຍການບໍລິສັດທີ່ປຶກສາບັນຊີ ຈົ່ງເສີ້ນຈົ້ງຫວນ ລາວ

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ: ທ່ານ ຫວາງ ຢູ (Ms. Wang Yu)

ສັນຊາດ: ຈີນ

ວັນເກີດ: 31/01/1996

ສະຖານທີ່ເກີດ: ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາຈາກຄະນະນິຕິສາດ, ມະຫາວິທະຍາໄລການເງິນ ແລະ ເສດຖະກິດຢຸນນານ, ປະເທດ ຈີນ, ສາຂາວິຊາກົດໝາຍເສດຖະກິດ (ປະລິນຍາໂທ).

- ປະສົບການເຮັດວຽກ:
  - 2024 – ປັດຈຸບັນ: ຜູ້ອຳນວຍການບໍລິຫານ, ບໍລິສັດ ຍິງເຄີ ລາວ (Yingke Laos)
  - 2025 – ປັດຈຸບັນ: ສາດສະດາຈານດີເດັ່ນ, ຄະນະນິຕິສາດ, ວິທະຍາໄລເມືອງຄຸນໝິງ (ເມື່ອກ່ອນ ແມ່ນໂຮງຮຽນທຸລະກິດມະຫາວິທະຍາໄລຄູຢຸນນານ)
  - 2024 – ປັດຈຸບັນ: ອາຈານສອນ, ຊຸດຝຶກອົບຮົມສົ່ງເສີມ RCEP ຫ້າປະເທດ, ພະແນກການຄ້າ ແຂວງຢຸນນານ
  - 2025 – ປັດຈຸບັນ: ຜູ້ຊ່ຽວຊານດ້ານກົດໝາຍ, ສະພາການຄ້າສາກົນ ເສຊວນ ຈີນ
  - 2024 – ປັດຈຸບັນ: ຫົວໜ້າຫ້ອງການສູນບໍລິການການລົງທຶນ ແລະ ການຄ້າ ນະຄອນຊົ່ງຊິ (RCEP) ຈີນ ປະຈຳລາວ
  - 2024–ປັດຈຸບັນ: ສະມາຊິກສະພາ, ສາຂາທະນາຍຄວາມຂອງສະມາຄົມສິດເກົ່າ, ມະຫາວິທະ ຍາໄລການເງິນ ແລະ ເສດຖະກິດຢຸນນານ
  - 2025: ຖືກຈັດຢູ່ໃນໝວດໝູ່ຂະແໜງພະລັງງານໃໝ່ຂອງຄູ່ມືທະນາຍຄວາມອຸດສາຫະກຳປະຈຳ ປີຂອງ GRCD ຈີນ, ເຊິ່ງເປັນອົງການຈັດລຳດັບກົດໝາຍທີ່ມີຊື່ສຽງ.

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ:	ທ່ານ ຈໍຊົ່ງ ບົວສີເມັ່ງມາ
ສັນຊາດ:	ລາວ
ວັນເກີດ:	15/12/1972
ສະຖານທີ່ເກີດ:	ແຂວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:
  - 09/1998 - 09/2004 ຫົວໜ້າໜ່ວຍງານທຸລະກິດກຸ່ມຄອງເງິນຕາຕ່າງປະເທດ ແລະ ໂລຫະມີຄ່າ.
  - 07/2007 - 01/2012, ຮອງຫົວໜ້າກົມຮ່ວມມືສາກົນທະນາຄານກາງແຫ່ງ ສປປ ລາວ.
  - 02/2012 - 04/2015, ຫົວໜ້າພະແນກຄຸ້ມຄອງການປະຕິບັດການພາຍທະນາຄານອຸດສາຫະກຳ ແລະ ການຄ້າຈີນ ສາຂາ ນະຄອນຫຼວງວຽງຈັນ.
  - 04/2015 ເຖິງ ປະຈຸບັນ, ຮອງອຳນວຍການທະນາຄານອຸດສາຫະກຳ ແລະ ການຄ້າຈີນ ສາຂາ ນະຄອນຫຼວງວຽງຈັນ.

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ:	ທ່ານ ວຽງສະຫວັນ ພັນທະລີ
ສັນຊາດ:	ລາວ
ວັນເກີດ:	25/01/1976
ສະຖານທີ່ເກີດ:	ນະຄອນຫຼວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ, ສາຂາກົດໝາຍວ່າດ້ວຍ ບໍລິສັດ ແລະ ກົດໝາຍຫຼັກຊັບ.

- ປະສົບການເຮັດວຽກ:

  - 09/2000 - 11/2009 ທະນາຍຄວາມ ຂອງ DFDL Lao Legal & Tax Adviser.
  - 12/2009 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ບໍລິສັດ ພັນທະລີ ກົດໝາຍ ຈຳກັດ.
  - 11/2016 ເຖິງ ປະຈຸບັນ, ຄູ່ຮ່ວມງານຢູ່ລາວ ຂອງ one Asia lawyers.

ເອກະສານຄັດຕິດ 6:ຊີວະປະຫວັດຫຍໍ້ຂອງສະມາຊິກອົດສະຫຼະທີ່ສະດວກເຂົ້າຮ່ວມກອງປະຊຸມ ເຊິ່ງສາມາດມອບສິດໃຫ້ພ້ອມ

ຊີວະປະຫວັດຫຍໍ້ຂອງສະມາຊິກອົດສະຫຼະ



ຊື່ ແລະ ນາມສະກຸນ: ທ່ານ ຈໍຊົ່ງ ບົວສີເມັ່ງມາ

ສັນຊາດ: ລາວ

ວັນເກີດ: 15/12/1972

ສະຖານທີ່ເກີດ: ແຂວງວຽງຈັນ

- ປະຫວັດການສຶກສາ:
  - ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.
- ປະສົບການເຮັດວຽກ:
  - 09/1998 - 09/2004 ຫົວໜ້າໜ່ວຍງານທຸລະກິດກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ໂລຫະມີຄ່າ.
  - 07/2007 - 01/2012, ຮອງຫົວໜ້າກົມຮ່ວມມືສາກົນທະນາຄານກາງແຫ່ງ ສປປ ລາວ.
  - 02/2012 - 04/2015, ຫົວໜ້າພະແນກຄຸ້ມຄອງການປະຕິບັດການພາຍທະນາຄານອຸດສາຫະກຳ ແລະ ການຄ້າຈີນ ສາຂາ ນະຄອນຫຼວງວຽງຈັນ.
  - 04/2015 ເຖິງ ປະຈຸບັນ, ຮອງອຳນວຍການທະນາຄານອຸດສາຫະກຳ ແລະ ການຄ້າຈີນ ສາຂາ ນະຄອນຫຼວງວຽງຈັນ.

VIENTIANE CENTER
ວຽງຈັນເຊັນເຕີ
ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະຫຼະ



ຊື່ ແລະ ນາມສະກຸນ: ທ່ານ ວຽງສະຫວັນ ພັນທະລີ

ສັນຊາດ: ລາວ

ວັນເກີດ: 25/01/1976

ສະຖານທີ່ເກີດ: ນະຄອນຫຼວງວຽງຈັນ

- ປະຫວັດການສຶກສາ:
  - ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ, ສາຂາກົດໝາຍວ່າດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.
- ປະສົບການເຮັດວຽກ:
  - 09/2000 - 11/2009 ທະນາຍຄວາມ ຂອງ DFDL Lao Legal & Tax Adviser.
  - 12/2009 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ບໍລິສັດ ພັນທະລີ ກົດໝາຍ ຈຳກັດ.
  - 11/2016 ເຖິງ ປະຈຸບັນ, ຄູ່ຮ່ວມງານຢູ່ລາວ ຂອງ one Asia lawyers.

[ເອກະສານຄັດຕິດ 7]

ໃບມອບສິດ

ຂຽນທີ .....

ວັນທີ ..... ເດືອນ ..... ປີ .....

ຂ້າພະເຈົ້າ ທ້າວ/ນາງ ..... ສັນຊາດ : .....

ວັນທີເດືອນປີເກີດ ..... ບັດປະຈຳຕົວ / ເລກທີໜັງສືຜ່ານແດນເລກທີ: .....,

ເຮືອນເລກທີ ..... ບ້ານ ..... ເມືອງ ..... ແຂວງ .....

ປະເທດ .....;

ເປັນຜູ້ຖືຮຸ້ນຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ ..... ຮຸ້ນ, ເຊິ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.

ຂໍມອບສິດໃຫ້

☐ (1)ທ້າວ/ນາງ ..... ອາຍຸ ..... ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ ..... ເຮືອນເລກທີ ..... ບ້ານ ..... ເມືອງ ..... ແຂວງ ..... ປະເທດ .....; ຫຼື

☐ (2) ທ່ານ ວຽງສະຫວັນ ພັນທະລີ ອາຍຸ 47 ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ A1-0010349 ເຮືອນເລກທີ ..... ບ້ານ ..... ເມືອງ ..... ແຂວງ ..... ປະເທດ ..... ; ຫຼື

☐ (3) ທ່ານ ຈໍຊົ່ງ ບົວສີເນັ່ງມາ ອາຍຸ 51 ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ 01-18 005815 ເຮືອນເລກທີ ..... ບ້ານ ..... ເມືອງ ..... ແຂວງ ..... ປະເທດ .....

☐ (4) ..... ອາຍຸ ..... ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ ..... ເຮືອນເລກທີ ..... ບ້ານ ..... ເມືອງ ..... ແຂວງ ..... ປະເທດ .....

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2025 ໃນວັນທີ 30 ເມສາ 2026 ເວລາ 14:00 ໂມງ ທີ່ຫ້ອງປະຊຸມ ຊັ້ນ 2 ຂອງຕຶກສຳນັກງານວຽງຈັນເຊັນເຕີ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ ປປ ລາວ ຫຼື ມື້ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນອີກ

ດ້ວຍ.

ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງໃນກອງປະຊຸມ ດັ່ງລຸ່ມນີ້:

ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

☐ ອະນຸມັດ ☐ ບໍ່ອະນຸມັດ

ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນ ຂ້າພະເຈົ້າ ໄດ້ບາງວາລະ;

☐ອະນຸມັດ ☐ ບໍ່ອະນຸມັດ

ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້):

<u>ວາລະທີ 1:</u> ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024

☐ ເຫັນດີ ☐ ບໍ່ເຫັນດີ

<u>ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025</u>

☐ ເຫັນດີ ☐ ບໍ່ເຫັນດີ

<u>ວາລະທີ 3: ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດປີ 2026</u>

☐ ເຫັນດີ ☐ ບໍ່ເຫັນດີ

<u>ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2025 ຂອງບໍລິສັດ</u>

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 5: <u>ພິຈາລະນາ ແລະ ຮັບຮອງການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ</u>

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 6: <u>ພິຈາລະນາ ແລະ ຮັບຮອງການເລືອກຕັ້ງ ສະມາຊິກສະພາບໍລິຫານ ສະໄໝທີ 5</u>

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 7: <u>ພິຈາລະນາ ແລະ ຮັບຮອງການເລືອກຕັ້ງ ຄະນະກຳມະການຕ່າງໆຂອງ ວຈຊຕ</u>

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 8: <u>ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ວຈຊຕ</u>

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 9: <u>ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 8 ວ່າດ້ວຍຜູ້ສ້າງຕັ້ງ, ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.</u>

☐ ເຫັນດີ ☐ ບໍ່ເຫັນດີ

ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

ໃນກໍລະນີຂ້າພະເຈົ້າບໍ່ໄດ້ລະບຸຄວາມປະສົງໃນການລົງຄະແນນສຽງໃນວາລະໃດໄວ້ ຫຼື ລະບຸໄວ້ບໍ່ຊັດເຈນ ຫຼື ໃນກໍລະນີທີ່ກອງປະຊຸມພິຈາລະນາ ຫຼື ລົງມະຕິໃນເລື່ອງໃດນອກເໜືອຈາກເລື່ອງທີ່ລະບຸໄວ້ຂ້າງຕົ້ນ ລວມເຖິງກໍລະນີທີ່ມີການແກ້ໄຂປ່ຽນແປງ ຫຼື ເພີ່ມເຕີມຂໍ້ເທັດຈິງໃດໜຶ່ງ ໃຫ້ຜູ້ຮັບມອບສິດມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

ການກະທຳໃດທີ່ຜູ້ຮັບມອບສິດໄດ້ກະທຳໄປໃນການປະຊຸມນັ້ນ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງຕາມທີ່ຂ້າພະເຈົ້າໄດ້ລະບຸໄວ້ໃນໃບມອບສິດສະບັບນີ້ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກປະການ.

ລົງລາຍເຊັນຜູ້ມອບສິດ:.....

(.....)

ລົງລາຍເຊັນຜູ້ຮັບມອບສິດ:.....

(.....)

<u>ໝາຍເຫດ:</u>

ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້;

ໜັງສືມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບສິດ ແລະ ຜູ້ຕາງໜ້າໃນທາງກົດໝາຍ ຕາມກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009. ຢ່າງໃດກໍຕາມ, ໃນກໍລະນີທີ່ໜັງສືມອບສິດສະບັບນີ້ຫາກບໍ່ໄດ້ຈົດທະບຽນສານ ແລະ ໄດ້ຍື່ນຕໍ່

ບໍລິສັດ, ບໍລິສັດຈະບໍ່ຮັບຜິດຊອບໃດໆໃນຄວາມຂັດແຍ່ງທີ່ເກີດຂຶ້ນລະຫວ່າງຜູ້ມອບສິດ ແລະ ຜູ້ຮັບ

ມອບສິດ.

เอกะสานถัดติด 8

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ຂອງ ວຈຊຕ

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ຂອງ ວຈຊຕ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ ແລະ ກະກຽມເອກະສານຕາມທີ່ກຳນົດດ້ານລຸ່ມນີ້ມາພ້ອມ. ຢ່າງໃດກໍ່ຕາມ, ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະ ເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການເຂົ້າຮ່ວມກອງປະຊຸມ

ກໍລະນີຜູ້ຖືຮຸ້ນເປັນບຸກຄົນທຳມະດາ

ຜູ້ຖືຮຸ້ນທີ່ເຂົ້າປະຊຸມດ້ວຍຕົນເອງ ໃຫ້ສະແດງເອກະສານທີ່ລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ຖືຮຸ້ນ ແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ);

ຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດຂອງໜັງສືເຊີນປະຊຸມນີ້:

ໜັງສືມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມນີ້ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;

ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ;

ເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຕາງໜ້າ ເຊິ່ງປາກົດພາບຖ່າຍ ແລະ ຍັງບໍ່ໝົດກຳນົດເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນ

ກໍລະນີຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໃຫ້ແຈ້ງເອກະສານ ດັ່ງລຸ່ມນີ້:

ເອກະສານທີ່ທາງລັດຖະການອອກໃຫ້ ແລະ ປາກົດພາບຖ່າຍຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ເຊິ່ງເປັນຜູ້ຖືຮຸ້ນເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ;

ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຜູ້ອຳນວຍການທີ່ເປັນນິຕິບຸກຄົນເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ.

ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າ (ຜູ້ທີ່ບໍ່ແມ່ນອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ) ເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດຂອງໜັງສືເຊີນປະຊຸມນີ້:

ໜັງສືມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມນີ້ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນພ້ອມປະທັບກາບໍລິສັດ ໂດຍໃຫ້ຂຽນຊື່ແຈ້ງຂອງຜູ້ມອບສິດ ແລະ ຜູ້ຮັບມອບສິດ;

ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າຜູ້ອຳນວຍການທີ່ເປັນນິຕິບຸກຄົນເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ.

ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ອຳນວຍການທີ່ມີອຳນາດກະທຳກາ ນຜູກພັນນິຕິບຸກຄົນ ແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການດັ່ງກ່າວ.

ເອກະສານທີ່ທາງລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ຕາງໜ້າແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນ

ຫຼັກຖານປະກອບພ້ອມ.

<u>ໝາຍເຫດ:</u> ໃນກໍລະນີທີ່ຜູ້ຖືຮຸ້ນເປັນບຸກຄົນຕ່າງປະເທດໃຫ້ປະຕິບັດຕາມຂໍ້ 1 ຫຼື ຂໍ້ 2 ແລ້ວແຕ່ກໍລະນີເຊິ່ງຫາກເອກະສານດັ່ງກ່າວເປັນພາສາອື່ນ ນອກເໜືອຈາກພາສາລາວ ຫຼື ພາສາອັງກິດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດໂດຍໃຫ້ບຸກຄົນທຳມະດາ ຫຼື ອຳນວຍການທີ່ມີອຳນາດລົງລາຍເຊັນຜູກພັນນິຕິບຸກຄົນນັ້ນລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວດ້ວຍ.

<u>ການມອບໝາຍ</u>

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງ ໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ ☐ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບພັນທະໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

ນຳສົ່ງໜັງສືມອບສິດຄືນ ທີ່ຫ້ອງການ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ, ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ເບີໂທ: (+856) 21 228299 ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 26 ເມສາ 2026 ຫຼື ນຳສົ່ງໜ້າສະຖານທີ່ຈັດງານກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນ ໜ້ອຍກ່ວາຈຳນວນທີ່ຕົນຖືຢູ່ໄດ້.

<u>ການລົງທະບຽນ</u>

ບໍລິສັດເປີດຮັບລົງທະບຽນຕັ້ງແຕ່ເວລາ 13:00 ໂມງ ທີ່ຫ້ອງປະຊຸມ ຊັ້ນ 2 ຂອງຕຶກສຳນັກງານວຽງຈັນເຊັນເຕີ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ ປປ ລາວ.

ກໍລະນີມາດ້ວຍຕົນເອງ

ໃຫ້ຕິດຕໍ່ຈຸດລົງທະບຽນ ພ້ອມສະແດງເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ;

ຮັບເອກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມອາລະ.

ກໍລະນີມອບສິດໃຫ້ບຸກຄົນອື່ນ

ໃຫ້ຕິດຕໍ່ຈຸດກວດເອກະສານ ພ້ອມທັງສະແດງເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ;ຕິດຕໍ່ຈຸດລົງທະບຽນ ພ້ອມຍື່ນເອກະສານຕາມຂໍ້ 2.1 ຂ້າງຕົ້ນ ເຊິ່ງໄດ້ຜ່ານການກວດສອບແລ້ວ;ຮັບເອກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມອາລະ (ສະເພາະກໍລະນີຜູ້ມອບສິດບໍ່ໄດ້ອອກສຽງລົງຄະແນນໄວ້ໃນໜັງສືມອບສິດ).

<u>ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ</u>

ການລົງຄະແນນສຽງ:

ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.ໃນການລົງຄະແນນສຽງໃນແຕ່ລະອາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີໃນບັດລົງຄະແນນທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກ່ວາຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນາໄປກວດນັບຄະແນນສຽງໃນອາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສິດໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງ ການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

ການນັບຜົນການລົງຄະແນນສຽງ:

ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີ ມາຫັກອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ເຂົ້າມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນຳເອົາຄະແນນສຽງດັ່ງກ່າວມານັບເປັນຄະແນນສຽງຕື່ມອີກ.

[ເອກະສານຄັດຕິດ 9]

ແຜນທີ່ສະຖານທີ່ (ຈຸດສີແດງ)

ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ຂອງ ວຈຊຕ

ຫ້ອງປະຊຸມ ຊັ້ນ 2 ຂອງຕຶກສຳນັກງານວ່ງຈັນເຊັນເຕີ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວ່ງຈັນ.

